# CHAMPA 占芭 ຈຳປາ

01/2016 ສະບັບທີ 124



## ພິທີວາງສີລາເລີກໂຄງການທາງລົດໄຟລາວ–ຈີນໄດ້ຈັດຂຶ້ນທີ່ວຽງຈັນ

## ລາວຈັດງານສະເຫຼີມສະຫຼອງວັນຊາດທີ 2 ທັນວາ ຄົບຮອບ 40 ປີຢ່າງຄຶກຄື້ນ

## ທ່ານປະທານ ສີຈິ້ນຜິງ ສົ່ງສານອວຍພອນວັນສະຖາປະນາ ສປປ ລາວຄົບຮອບ 40 ປີ

ISSN 1673-3266

Value Related To History
Creation Leading To Future

心以致遠
行于維新




ເກີດມາຈາກປີ 1912

ນ້ຳໃຈກວ້າງຂວາງສູງສົ່ງ
ມຸ່ງໝັ້ນການປ່ຽນແປງໃໝ່

富滇銀行
FUDIAN BANK
ທະນາຄານຟູດຽນ

www.fudian-bank.com 网上银行 | www.087196533.com 手机银行 | 0871－96533 24小时服务热线

ທະນາຄານອິນເຕີເນັດ ທະນາຄານໂທລະສັບມືຖື ສາຍດ່ວນບໍລິການ 24 ຊົ່ວໂມງ






Muangthong Hotel
With a boutique feel, Muangthong hotel is impressive complex of 4, two storey buildings, built around a central courtyard and swimming pool. The building with large wooden pillars are of modern Lao design with a French colonial flavor and traditional Lao roofs, with 09 premier and 24 delux rooms.

Room Facility:
Free wifi, coffee/tea facility, room amenity, mini bar, LCD TV, safety box.

Location:
Muangthong hotel is located at Ban Thatluang, Luangprabang District, just 5-10 minutes to night market by walk or city center and 10 minutes from airport by car.

ໂຮງແຮມເມືອງທອງ
Muangthong Hotel

For more information or reservation, please visit our website:
www.muangthonglpb.com
Tel: +856-71-254976; Fax: +856-71-252974
Email: reservation@muangthonglpb.com,
mthotel@laoairlines.com
Or please contact the nearest Lao Airlines offices.

Muangthong Hotel
Ban Thatluang, ouparathKhambua Road
Luangprabang, Lao PDR

本公司位于老挝万象安居建材市场内。是集彩钢瓦、复合板、消声卷帘门、钢结构、活动板房制作安装于一体的专业生产、批发、零售企业。公司拥有全自动化复合板、彩钢瓦机器生产线，可以满足客户的个性化设计要求。设计，定做安全头盔等其他各种泡沫包装制品。本公司坚持诚信经营、质量第一的经营理念，努力将自身打造成老挝境内的行业标杆企业。

公司地址：老挝万象市13号公路5公里处万象安居建材市场内

ບໍລິສັດເຮືອນແປ້ນເຄື່ອນທີ່ເຫຼັກສີຫວັນເຈຍລາວ

ບໍລິສັດຕັ້ງຢູ່ພາຍໃນຕະຫລາດວັດສະດຸກໍ່ສ້າງອານຈີລາວ,ເປັນວິສາຫະກິດສະເພາະຕົວໃນການຜະລິດ,ຂາຍສົ່ງ,ຂາຍຍ້ອຍເຊິ່ງເຕົ້າໂຮມກະເບື້ອງເຫຼັກ:ໄມ້ອັດ,ປະຕູມ້ວນທີ່ຜ່ອນສຽງ,ໂຄງປະກອບເຫຼັກ,ຜະລິດເຮືອນແປ້ນເຄື່ອນທີ່ແລະຕິດຕັ້ງເປັນອັນໜຶ່ງອັນດຽວ.ບໍລິສັດໄດ້ມີສາຍການຜະລິດໄມ້ອັດ,ກະເບື້ອງເຫຼັກສີດ້ວຍກົນຈັກໂອໂຕມະຕິກ,ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການອອກແບບບຸກຄະລິກຂອງລູກຄ້າໄດ້.ການອອກແບບ,ສັ່ງຈອງໝວກເຫຼັກນິລະໄພ ແລະ ຜະລິດຕະພັນຫຸ້ມຫໍ່ດ້ວຍສະໂນທຸກຊະນິດບໍລິສັດຍຶດຖືຈິດສຳນຶກດຳເນີນທຸລະກິດໄວ້ເນື້ອເຊື່ອໃຈ,ຄຸນນະພາບເປັນອັນດັບທີໜຶ່ງ,ພະຍາຍາມປະດິດສ້າງຕົນເອງກາຍເປັນວິສາຫະກິດແບບຢ່າງພາຍໃນດິນລາວ.

ສະຖານທີ່ຂອງບໍລິສັດ: ຕັ້ງຢູ່ພາຍໃນຕະຫລາດວັດສະດຸກໍ່ສ້າງອານຈີວຽງຈັນຫຼັກ 5 ທາງເລກ 13 ນະຄອນຫຼວງວຽງຈັນ

ວັນເຈຍສັງກະສີ-ແຜ່ນສັງກະສີອັດຟອງສະໂນ ຂາຍສົ່ງ ແລະ ຂາຍຍ່ອຍ ແຜ່ນສັງກະສີ ແຜ່ນສັດໂຟມ ປະຕູມ້ວນ ເກັບສຽງຮັບຕິດຕັ້ງ ໂຄງຫລັງຄາ ຫ້ອງເຄື່ອນຍ້າຍໄດ້ຜະລິດ ແລະ ຕິດຕັ້ງນິຍຸເຈຍ

WANJIE 万杰彩钢

**老挝万杰彩钢**
**活动板房有限公司**



















Tel：021 720509 ；020 54606278 （chinese ） 020 55557178 （ Lao ）
Mob：0086 13758972039 （China

ໂຮງແຮມເມືອງທອງ
Muangthong Hotel



孟通酒店
孟通酒店充满精致的氛围。酒店拥有令人印象深刻的四要素。酒店是一个两层楼的建筑，围绕一个中心庭院建成，还拥有一个游泳池。酒店的大型木头立柱充满法国气息的老挝现代设计，屋顶则是老挝传统风格。酒店拥有9间高级房间和24间豪华房。
房间设施：免费wifi 泡茶/咖啡的用具 迷你吧 液晶电视 保险箱

旅游琅勃拉邦便捷舒适
自2014年7月1日至9月30日止到琅勃拉邦旅游的客人可乘飞机由万象-琅勃拉邦-万象,总价为1.460.000吉普：巴色-琅勃拉邦-巴色总价为1.700.000吉普，可享受：1.机票内含税费 2.免费住孟通酒店2晚上
3.免费早餐 4.可以在酒店办登机手续和出机票 5.可用车接送琅勃拉邦机场到酒店。






www.muangthonglpb.com

ການບິນລາວ
Lao Airlines

ຈຳປາໂຮລິເດ
Champa Holidays

# 云南建工集团有限公司

# ກຸ່ມບໍລິສັດວິສະວະກໍາກໍ່ສ້າງຢຸນນານຈໍາກັດ

云南建工集团有限公司成立于1951年，于2009年11月6日改制挂牌。目前，集团由过去的施工总承包正在转型升级为集投融资、房地产开发和工程建设总承包为一体的产融双驱大型建设企业集团。现有全资子公司、控股公司和直管企事业单位37个，是云南省唯一拥有2个国家房屋建筑施工总承包特A级资质、机场跑道施工专项资质、援外成套项目A级资格的企业，业务覆盖建筑工程投资建设全领域，是云南省政府国资委履行出资人职责的19户省属重要骨干企业之一。目前在职职工有19000余人，各类专业技术人员12000余人，其中高级职称1278人。

近年来，在省委省政府和省国资委的正确领导下，在社会各界的关心和支持下，云南建工集团主动融入国家发展战略，积极参与我国周边互联互通建设，强化"走出去"战略，集团投融资、施工总承包和"走出去"三大能力显著提高。2014年，完成经营额864.38亿元，合同额539.48亿元，产值438.34亿元，完成竣工面积728.35万平方米，实现利润12亿元，营业收入利润率高达2.7%，居行业领先水平。目前，集团总资产已突破1000亿元，净资产突破300亿元。

截至2014年，集团累计获得全国建筑工程鲁班奖24项，国家优质工程金奖1项，国家优质工程银质奖41项，詹天佑土木工程大奖1项，国家级工法、发明专利、实用新型专利等230余项，主编国家行业标准6项。集团先后在也门、南非、沙特、伊拉克、赤道几内亚、泰国、老挝、柬埔寨、缅甸、越南、斯里兰卡等国家投资开发和总承包建设各类项目，并荣获老挝、柬埔寨政府颁发的"发展勋章"和"贡献勋章"等荣誉，已形成南亚和东南亚、中东、非洲三大海外市场发展格局。2015年，集团连续24次入选中国企业500强；连续5次入选ENR250强（美国工程新闻录杂志），位列166位；在中国承包商80强中位列第18位，在中国100大跨国公司及跨国指数排名中位列第72位，集团的综合竞争实力、品牌影响力和社会信誉度显著提高。

ກຸ່ມບໍລິສັດວິສະວະກໍາກໍ່ສ້າງຢຸນນານຈໍາກັດສ້າງຕັ້ງຂຶ້ນໃນປີ 1951,ໄດ້ປ່ຽນລະບົບກົນໄກຕິດປ້າຍໃນວັນທີ 6 ເດືອນ 11 ປີ 2009. ປັດຈຸບັນນີ້,ກຸ່ມບໍລິສັດກໍາລັງຫັນປ່ຽນຮູບແບບເລື່ອນຊັ້ນຈາກລົງມືກໍ່ສ້າງຮັບເໝົາລວມໃນເມື່ອກ່ອນ,ກາຍເປັນກຸ່ມວິສາຫະກິດວິສະວະກໍາກໍ່ສ້າງຂະໜາດໃຫຍ່ທີ່ມີການຜະລິດ ແລະ ການລະດົມທຶນສອງຢ່າງລວມທັງການລົງທຶນ,ການລະດົມທຶນ,ການພັດທະນາເຄຫາສະຖານ,ທີ່ດິນ ແລະ ຮັບເໝົາລວມວິສະວະກໍາກໍ່ສ້າງເປັນອັນໜຶ່ງອັນດຽວ.ປັດຈຸບັນນີ້,ໄດ້ມີບໍລັດລູກທີ່ມີທຶນຄົບຖ້ວນ,ບໍລິສັດຄຸມຫຸ້ນ ແລະ ກົມກອງຄຸ້ມຄອງກິດຈະການໂດຍກົງ 37 ແຫ່ງ,ແມ່ນວິສາຫະກິດທີ່ມີຄຸນວຸດທິຊັ້ນ A ພິເສດ 2 ໃບໃນການຮັບເໝົາລວມການກໍ່ສ້າງເຄຫາສະຖານແຫ່ງຊາດຂອງຢຸນນານແຕ່ແຫ່ງດຽວ,ຄຸນວຸດທິໂຄງການສະເພາະທາງແລ່ນເຮືອບິນໃນສະໜາມບິນ ແລະ ຄຸນວຸດທິຊັ້ນ A ໂຄງການຊ່ວຍເຫຼືອຕ່າງປະເທດຄົບຊຸດ,ກິດຈະກໍາປົກຄຸ້ມດ້ວຍຂົງເຂດທັງໝົດໃນການກໍ່ສ້າງໂຄງການລົງທຶນວິສະວະກໍາກໍ່ສ້າງ,ແມ່ນ 1 ໃນວິສາຫະກິດຫຼັກແຫຼ່ງທີ່ສໍາຄັນສັງກັດແຂວງ 19 ຄອບຄົວເປັນຜູ້ຮັບຜິດຊອບຂອງຄະນະກໍາມະການຊັບສິນຂອງລັດປົກຄອງແຂວງຢຸນນານປະຕິບັດໜ້າທີ່ຜູ້ອອກທຶນ.ປັດຈຸບັນນີ້,ພະນັກງານພະລາກອນລວມມີ 19,000 ກວ່າຄົນ,ນັກວິຊາການທຸກປະເພກ 12,000 ກວ່າຄົນ,ໃນນັ້ນ,ຜູ້ທີ່ມີຊື່ຕໍາແໜ່ງໜ້າທີ່ຊັ້ນສູງ 1278 ຄົນ.

ຫວ່າງປີມໍ່ໆມານີ້,ໃຕ້ການນໍາພາອັນຖືກຕ້ອງຂອງຄະນະພັກແຂວງ,ປົກຄອງແຂວງ ແລະ ຄະນະກໍາມະການຊັບສິນຂອງລັດ ແລະ ໃຕ້ການສະໜັບສະໜູນ ແລະ ຄວາມເອົາໃຈໃສ່ຈາກທຸກຊັ້ນວັນນະໃນສັງຄົມ,ກຸ່ມບໍລິສັດວິສະວະກໍາກໍ່ສ້າງຢຸນນານເປັນເຈົ້າການເຊື່ອມໂຍງເຂົ້າສູ່ຍຸດທະສາດການພັດທະນາຂອງລັດ,ເຂົ້າຮ່ວມການກໍ່ສ້າງເຊື່ອມຈອດກັນໃນອ້ອມຂ້າງປະເທດຈີນຢ່າງຕັ້ງໜ້າ,ເຮັດໃຫ້ຍຸດທະສາດ "ອອກໄປຕ່າງປະເທດ"ຢ່າງແຂງແຮງ,ໄດ້ຍົກສູງຄວາມສາມາດ 3 ປະການຂຶ້ນຢ່າງເດັ່ນຊັດເຊັ່ນ:ການລົງທຶນ ແລະ ລະດົມທຶນ,ການຮັບເໝົາລວມການກໍ່ສ້າງ ແລະ "ອອກໄປຕ່າງປະເທດ"ຂອງກຸ່ມບໍລິສັດ.

ໃນປີ 2014,ໄດ້ສໍາເລັດຈໍານວນເງິນດໍາເນີນທຸລະກິດ 86,438 ຕື້ຢວນ, ຈໍານວນເງິນລົງເຊັນສັນຍາ 53,948ຕື້ຢວນ,ມູນຄ່າການຜະລິດ 43,834 ຕື້ຢວນ,ສໍາເລັດເນື້ອທີ່ການກໍ່ສ້າງ 7283500 ຕາແມັດ,ບັນລຸຜົນກໍາໄລ 1,2 ຕື້ຢວນ,ອັດຕາກໍາໄລຜົນໄດ້ຮັບຈາກທຸລະກິດ 2,7%,ຢູ່ລະດັບນໍາໜ້າໃນຂະແໜ່ງການ.ປັດຈຸບັນນີ້,ຊັບສິນບັດລວມຂອງກຸ່ມບໍລິສັດໄດ້ທະລຸ 100 ຕື້ຢວນ,ຊັບສິນບັດສຸດທິບັນລຸເຖິງ 30 ຕື້ຢວນ.

ຈົນຮອດປີ 2014,ກຸ່ມບໍລິສັດໄດ້ຮັບລາງວັນລູປານວິສະວະກໍາກໍ່ສ້າງທົ່ວປະເທດລວມມີ 24 ລາຍ,ລາງວັນຄໍາວິສະວະກໍາກໍ່ສ້າງທີ່ມີຄຸນນະພາບດີເລີດຂອງລັດ 1 ລາຍ,ລາງວັນເງິນວິສະວະກໍາກໍ່ສ້າງທີ່ມີຄຸນນະພາບດີເລີດຂອງລັດ 41 ລາຍ,ລາງວັນໃຫຍ່ວິສະວະໂຍທາຈັນທຽນຢຽວ 1 ລາຍ,ສິດທິບັດປະດິດສ້າງ,ສິດທິບັດແບບໃໝ່ປະໂຍກເປັນຕົ້ນ 230 ກວ່າລາຍ.ມາດຕາຖານຂະແໜງການຂອງປະເທດບັນດາທີ່ການຫຼັກ 6 ລາຍ.ກຸ່ມບໍລິສັດໄດ້ລົງທຶນພັດທະນາ ແລະ ຮັບເໝົາລວມວິສະວະກໍາກໍ່ສ້າງໂຄງການທຸກປະເພດຢູ່ປະເທດເຢແມນ,ອາຟຼິກາໃຕ້,ຊາອູດີ,ອີລັກ,ກີເນເອກົວເຕີ,ໄທ,ລາວ,ກໍາປູເຈຍ,ມຽນມາ,ຫວຽດນາມ,ສີລັງກາເປັນຕົ້ນ ແລະ ໄດ້ຮັບນາມມະຍົດເຊັ່ນ:"ຫຼຽນໄຊພັດທະນາ","ຫຼຽນໄຊຄຸນງາມຄວາມດີ"ທີ່ລັດຖະບານລາວ ແລະ ລັດຖະບານກໍາປູເຈຍປະດັບໃຫ້ ແລະ ອື່ນໆ.ໄດ້ກາຍເປັນສະຖານນະພາບແຫ່ງການພັດທະນາການຕະຫລາດອາຊີໃຕ້,ອາຊີຕາເວັນອອກສຽງໃຕ້,ຕາເວັນອອກກາງ.ອາຟຼິກາໃນປີ 2015,ກຸ່ມບໍລິສັດໄດ້ລຽນຕິດ 24 ເທື່ອຖືກຄັດເລືອກເປັນບໍລິສັດເຂັ້ມແຂງ 500 ບໍລິສັດຂອງຈີນ. ແລະ ລຽນຕິດ 5 ເທື່ອຖືກຄັດເລືອກເຂົ້າສູ່ ENR 250 ແຂງ(ວາລະສານບັນທຶນຂ່າວວິສະວະກໍາກໍ່ສ້າງອາເມລິກາ).ເປັນອັນດັບທີ 166 ແລະ ເປັນອັນດັບ 18 ຂອງນັກທຸລະກິດຮັບເໝົາກໍ່ສ້າງຈີນ 80 ແຂງ; ທັງເປັນອັນດັບ 72 ຂອງບໍລິສັດຂ້າມຊາດ 100 ບໍລິສັດຈີນ ແລະ ຊີ່ດັດຊະນີດບໍລິສັດຂ້າມຊາດລຽນແຖວເປັນອັນດັບ 72, ກໍາລັງແກ່ງແຍ້ງສັງລວມ,ຜົນສະທ້ອນທາງຍີ່ຫໍ້ ແລະ ຄວາມເຊື່ອໝັ້ນໃຈທາງສັງຄົມຂອງກຸ່ມບໍລິສັດໄດ້ຖືກຍົກສູງຂຶ້ນຢ່າງຊັດແຈ້ງ.





ທະເລຊາຍແຫ້ງທາເຄີລາມາ
塔克拉玛干沙漠 CFP 图



# ສາລະບານ

01/2016 ສະບັບທີ 124










**ສາລະຄະດີພິເສດ** 本刊特稿

08.ລາວຈັດງານສະເຫຼີມສະຫຼອງວັນຊາດທີ 2 ທັນວາ ຄົບຮອບ 40 ປີຢ່າງຄຶກຄື້ນ

12.ທ່ານປະທານ ສີຈິ້ນຜິງ ສົ່ງສານອວຍພອນວັນສະຖາປະນາ ສປປ ລາວຄົບຮອບ 40 ປີ

14.ສະຖານກົງສຸນໃຫຍ່ລາວປະຈຳຄຸນໝິງຈັດງານລ້ຽງສະເຫຼີມສະຫຼອງວັນສະຖາປະນາ ສປປ ລາວຄົບຮອບ 40 ປີ

17.ສະຖານກົງສຸນໃຫຍ່ລາວທີ່ນະຄອນຊຽງໄຮ້ຈັດຕັ້ງພິທີສະເຫຼີມສະຫຼອງວັນຊາດທີ 2 ທັນວາ ຄົບຮອບ 40 ປີ

18.ພິທີວາງສີລາລືກໂຄງການທາງລົດໄຟລາວ-ຈີນໄດ້ຈັດຂຶ້ນທີ່ວຽງຈັນ

22.ຈາກດາວທຽມຮອດທາງລົດໄຟ ການຮ່ວມມືເສດຖະກິດຈີນ-ລາວໃນໄລຍະໃໝ່ຂຶ້ນສູ່ລະດັບສູງ

**ໜຶ່ງແລວທາງ ໜຶ່ງເສັ້ນທາງ** "一带一路"

28."ໜຶ່ງແລວທາງ ໜຶ່ງເສັ້ນທາງ"ເກີດປະສິດທິຜົນຂັ້ນເບື້ອງຕົ້ນ

**ປະຕູເມືອງຈີນ** 中国之窗

32.ຢາກໄປຮຽນຢູ່ຕ່າງປະເທດ,ກໍ່ໄປຮຽນຢູ່ປະເທດຈີນ

**ລວມຈຸດຢູນນານ** 聚焦云南

36.ແຂວງຢູນນານ:ເສັ້ນທາງສະດວກສະບາຍ,ປະຊາຊົນກົມກຽວ,ການເປີດປະຕູສູ່ພາຍນອກມີການພັດທະນາແບບກ້າວກະໂດດ

**ວິສະວະກຳກໍ່ສ້າງຢຸນນານ** 云南建工

40.ໃນເວລາດຳເນີນການສຳຫຼວດສຶກສາກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ ທ່ານ ເຊີນຮາວ ໄດ້ເນັ້ນວ່າ: ຍົກສູງກຳລັງແກ່ງແຍ້ງທີ່ເປັນແກ່ນສານ,ດຳເນີນການປະຕິຮູບປະດິດສ້າງໃໝ່ເພື່ອຊຸກຍູ້ການພັດທະນາ

**ການທ່ອງທ່ຽວທັດສະນາຈອນ** 旅游纵横

46.ພູອ້ານໂຟ(ພູພະໝື່ນອົງ)

**ລຽນຊົມວັດທະນະທຳ** 文化博览

48.ຫໍພິພິທະພັນຊຽງໄຮ: ໂຮງຫໍທີ່ເຕົ້າໂຮມປະຫວັດສາດ ແລະອະລິຍະທຳ

**ໂຮງຮຽນຊື່ດັງທີ່ມີສະເໜ່** 魅力名校

52.ວິທະຍາໄລກີລາຊຽງໄຮ

**ປະຊາຊາດຈີນ** 中华民族

54.ບຸນລ້າງຕີນເຜົ່າຢ້າວທີ່ມ່ອນຊື່ນ

**ບໍລິການເພື່ອທ່ານ** 为您服务

56.ຄວາມຊິນເຄີຍດັ່ງລຸ່ມນີ້ ເຈົ້າມີບໍ່?

**ຮຽນພາສາຈີນ** 学汉语

58.ຮຽນພາສາຈີນ



发行范围：国内外公开发行
出版日期：每月五日
邮发代号：64－36
国际标准刊号：ISSN 1673－3266
国内统一刊号：CN53－1200/D
地址：云南省昆明市环城西路577号
编辑部电话：86−871−64112975
办公室电话：86−871−64101644
传真：86−871−64112975
邮编：650034
邮箱：ynzhanba@163.com

《占芭》杂志社驻老挝代表处：
地址：万象市苏发努冯路湄公酒店二栋2211 室
电话：00856−21−254866

广告经营许可证号：5300004000052
印刷：昆明富新春彩色印务有限公司

ພິມຈຳໜ່າຍເປີດເຜີຍ: ພາຍໃນແລະຕ່າງປະເທດ
ອອກຈຳໜ່າຍ: ວັນທີ 5 ທຸກເດືອນ
ລະຫັດວາລະສານມາດຖານສາກົນ: ISSN 1673−3266
ລະຫັດວາລະສານປະເທດຈີນ: CN53−1200/D
ສະຖານທີ່: ຖະໜົນຫວນເຊີນຊີລູເຮືອນເລກທີ 577
ລະຫັດໄປສະນີ: 650034
ໂທ: 86−871−64112975 64101644
ແຟກ: 86−871−64112975
Email:ynzhanba@163.com

ຫ້ອງການຕາງໜ້າສຳນັກພິມວາລະສານ《ຈຳປາ》ສປ ຈີນປະຈຳນະຄອນຫຼວງວຽງຈັນ ສປປ ລາວ
ທີ່ ຢູ່:ຫ້ອງ 2211 ຕຶກທີ 2 ໂຮງແຮມແມ່ຂອງ ຖະໜົນສຸພານຸວົງ ນະຄອນຫຼວງວຽງຈັນ
ເບີ ໂທ: 00856-21-254866

ເລກໃບປາຕັງທຸລະກິດໂຄສະນາ: 5300004000052

RMB ¥10



主　　管　中华人民共和国国务院新闻办公室
主　　办　云南省人民政府新闻办公室
协　　办　云南建工集团有限公司
编辑出版　《占芭》杂志社

总 顾 问　赵　金　卯稳国
顾　　问　张红苹　宣宇才　蔡春生
　　　　　张瑞才　李联斌　刘　荣
社　　长　李　茜
副 社 长　吴静波　田虎青　海　江

总 编 辑　杨　云
总编室主任　禹正玉
总编室副主任　汪伟云
编辑总监　王志谦
编辑部副主任　苏雯雯　中文编辑　张　蕾
翻　　译　北京外国语大学亚非学院
　　　　　李小元　吴敦信　刘仁和
老挝文译审　刘仁和
老挝文编辑　白　艳
美术总监　祝　群
网络总监　张守义
总监助理　张俊宏
网络部副主任　李　涛
编　　辑　李文君　李沁颖　韩佐伊
发行部主任　邹和平
发　　行　陈　龙
编　　务　陆　蕊　何如兰

ເຈົ້າໜ້າທີ່ຄຸ້ມຄອງໂດຍ ຫ້ອງການຂ່າວຄະນະລັດຖະບານ ສປ ຈີນ
ຈັດທຳໂດຍ ຫ້ອງການຂ່າວປົກຄອງແຂວງຢຸນນານ
ອົງການປະສານງານ ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດ
ຮຽບຮຽງພິມຈຳໜ່າຍ ສຳນັກພິມວາລະສານ《ຈຳປາ》

ທີ່ປຶກສາໃຫຍ່ ຈາວຈິນ ເມົາເວີນກົວ

ທີ່ປຶກສາ ຈ່າງຫົງພິງ ຊຽນຢູຍໄຊ ໄຊຊຸນແຊງ
ຈ່າງຢູ້ຍໄຊ ລີລຽນປິ່ນ ລິວຢົງ
ຜູ້ອຳນວຍການໃຫຍ່ ລີສ້ຽນ
ຮອງຜູ້ອຳນວຍການໃຫຍ່ ອູຈິນໂປ ທຽນຫູຊິນ ໄຮຈຽງ
ຫົວໜ້າບັນນາທິການໃຫຍ່ ຢາງຢູນ
ຫົວໜ້າພິມຈຳໜ່າຍ ຢູຍເຈີງຢູຍ
ຮອງຫົວໜ້າພິມຈຳໜ່າຍ ຫວ່າງເວີຍຢູນ
ຫົວໜ້າບັນນາທິການ ຫວາງຈື້ຊ່ຽນ
ຮອງຫົວໜ້າພະແນກບັນນາທິການ ຊູ່ເວີນເວີນ ບັນນາທິການພາສາຈີນ ຈາງລຸຍ
ຜູ້ແປພາສາລາວ ມະຫາວິທະຍາໄລພາສາຕ່າງປະເທດປັກກິ່ງ
ຫຼີຊຽວຢວນ ອຸດົນສິນ ລິວເຢີນເຫີ
ຜູ້ກວດແກ້ພາສາລາວ ລິວເຢີນເຫີ
ບັນນາທິການພາສາລາວ ປາຍຍຽນ
ຜູ້ຄຸ້ມງານຝ່າຍສິລະປະ ຈູ້ສິນ
ຜູ້ຄຸ້ມງານຝ່າຍອິນເຕີເນັດ ຈາງເຊີຢີ ຜູ້ຊ່ວຍຜູ້ຄຸ້ມງານ ຈາງຈຸນຮອງ
ຮອງຫົວໜ້າພະແນກອິນເຕີເນັດ ລີທາວ ບັນນາທິການ ລີເວີນຈູນ ລີຊີ້ງຢິງ ຮານໂຈ່ວຢີ່
ຫົວໜ້າພະແນກແຈກຈ່າຍ ໂຈວເຮີພິງ
ພິມຈຳໜ່າຍແຈກຈ່າຍ ແຊງລົງ
ພະນັກງານຝ່າຍປົກຄອງ ລູຢູຍ ເຫີຢູລານ

# ລາວຈັດງານສະເຫຼີມສະຫຼອງວັນຊາດທີ 2 ທັນວາ ຄົບຮອບ 40 ປີຢ່າງຄຶກຄື້ນ



ວັນທີ 2 ທັນວາ,ທ່ານ ຈູມມາລີ ໄຊຍະສອນ ເລຂາທິການໃຫຍ່ບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ,ປະທານປະເທດລາວຂຶ້ນກ່າວຄຳປາໄສໃນງານສະຫລອງບຸນວັນຊາດ ແລະ ພິທີສວນສະໜາມທີ່ວຽງຈັນລາວ

12 月 2 日，在老挝万象，老挝人民革命党中央总书记、国家主席朱马里·赛雅颂在国庆游行和阅兵式上发表讲话　新华社 图

## 老挝隆重举行建国 40 周年国庆庆典

2015年12月2日早上七点，老挝人民民主共和国在首都万象塔銮广场隆重举行建国40周年庆祝大会和阅兵仪式。老挝人民革命党中央总书记、国家主席朱马里·赛雅颂，政府总理通辛·塔马冯，国会主席巴妮·雅陶都以及老挝其他党政领导，中国全国人大常委会委员长张德江，越共中央政治局委员、中央书记处常务书记黎红英，以及外国代表团、外交使节、国际组织、老侨代表等出席庆祝大会。

ຕອນເຊົ້າ 7 ໂມງໃນ ວັນທີ 2 ທັນວາ ປີ 2015, ສປປ ລາວ ໄດ້ຈັດງານໂຮມຊຸມນຸມສະເຫຼີມສະຫຼອງວັນຊາດທີ 2 ທັນວາ ຄົບຮອບ 40 ປີຢ່າງຄຶກຄື້ນ ແລະ ສວນສະໜາມທີ່ສະໜາມຫຼວງທາດຫຼວງໃນນະຄອນຫຼວງວຽງຈັນ.ສະຫາຍ ຈູມມາລີ ໄຊຍະສອນ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວປະທານປະເທດແຫ່ງ ສປປ ລາວ,ສະຫາຍ ທອງສິງ ທຳມະວົງ ນາຍົກລັດຖະມົນຕີລາວ,ສະຫາຍນາງ ປານີ ຢາທໍ່ຕູ້ ປະທານສະພາແຫ່ງຊາດ ແລະ ການນຳພັກລັດອື່ນໆ,ສະຫາຍຈາງເຕີຈຽງ ປະທານຄະນະກຳມະການປະຈຳສະພາຜູ້ແທນທົ່ວປະເທດແຫ່ງ ສປ ຈີນ,ສະຫາຍ ເລຮົງແອັງ ກຳມະການກົມການເມືອງສູນກາງພັກຜູ້ປະຈຳການຄະນະເລຂາທິການພັກຫວຽດນາມ ແລະ ຄະນະຜູ້ແທນຕ່າງປະເທດ,ທູດຕານຸທູດຕ່າງປະເທດປະຈຳລາວ,ອົງການຈັດຕັ້ງສາກົນ ແລະ ຊາວນະຄອນວຽງຈັນເຂົ້າຮ່ວມ.

ຕອນເຊົ້າ 7 ໂມງຕົງ,ງານໂຮມຊຸມນຸມໃຫຍ່ສະເຫຼີມສະຫຼອງວັນສະຖາປະນາ ສປປ ລາວໄດ້ຈັດຂຶ້ນຢ່າງເປັນທາງການ.ທຸກຄົນລຸກຂຶ້ນໝົດ,ທຸງຊາດຖືກຊັກຂຶ້ນເສົາ,ກອງດຸລິຍາງບັນເລງເພງຊາດ,ເຄົາລົບທຸງຊາດ.

ພິທີກອນປະກາດງານໂຮມຊຸມນຸມໃຫຍ່ສະເຫຼີມສະຫຼອງເລີ່ມຕົ້ນ.ສະຫາຍ ຈູມມາລີ ໄຊຍະສອນ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ປະທານປະເທດແຫ່ງ ສປປ ລາວ ຂຶ້ນກ່າວຄຳປາໄສທີ່ສຳຄັນໃນງານຊຸມນຸມດັ່ງກ່າວນີ້,ສະຫາຍ ຈູມມາລີ ໄຊຍະສອນ ກ່າວວ່າ,ກ່ອນໜ້ານີ້ 40 ປີຄືວັນທີ 2 ທັນວາ ປີ 1975,ພວກເຮົາມີຄວາມເອກອ້າງທະນົງໃຈເປັນຢ່າງຍິ່ງທີ່ກອງປະຊຸມຜູ້ແທນປະຊາຊົນທົ່ວປະເທດໄດ້ຕົກລົງສະຖາປະນາ ສປປ ລາວ,ລົບລ້າງລະບອບສັກດີນາລ່າເມືອງຂຶ້ນທີ່ຄອບງຳປະເທດເຮົາເປັນເວລາຍາວນານລົງຢ່າງສິ້ນເຊີງ,ເລີ່ມແຕ່ນັ້ນມາ,ປະເທດເຮົາໄດ້ກາຍເປັນປະເທດທີ່ມີເອກກະລາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ,ປະຊາຊົນລາວບັນດາເຜົ່າໄດ້ກາຍເປັນເຈົ້າຂອງອັນແທ້ຈິງຂອງປະເທດຊາດ,ມີອິດສະລະພາບ,ມີເງື່ອນໄຂພັດທະນາຕົນເອງຢ່າງຮອບດ້ານເພື່ອຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນ.

ຜ່ານການປົກປັກຮັກສາ ແລະ ສ້າງສາລະບອບໃໝ່ເປັນເວລາ 40 ປີໂດຍສະເພາະແມ່ນພາຍຫລັງທີ່ພັກໄດ້ວາງແນວທາງປ່ຽນແປງໃໝ່ຮອບດ້ານເປັນຕົ້ນມາ,ປະເທດຊາດຂອງພວກເຮົາໄດ້ກ້າວສູ່ການຂະຫຍາຍຕົວໃນຈັງຫວະໄວ,ຕໍ່ເນື່ອງກັນ ແລະ ໝັ້ນທ່ຽງອັນໄດ້ເຮັດໃຫ້ໂສມໜ້າຂອງປະເທດເຮົາມີການປ່ຽນແປງຢ່າງໃຫຍ່ຫຼວງທີ່ສຸດ,ພື້ນຖານເສດຖະກິດແຫ່ງຊາດເຊິ່ງປະກອບດ້ວຍຫຼາຍພາກສ່ວນເສດຖະກິດທີ່ເຄື່ອນໄຫວຕາມກົນໄກຕະຫລາດທີ່ມີການຄຸ້ມຄອງຂອງລັດໄດ້ຮັບການກໍ່ຕັ້ງ ແລະ ປັບປຸງໃຫ້ເປັນລະບົບຄົບຊຸດຂຶ້ນມາເປັນກ້າວໆ,ຂະບວນການເປັນສິນຄ້າ,ຕົວແບບດີເດັ່ນໃນການຜະລິດເປັນທຸລະກິດ ແລະ ທຳມາຫາກິນໄດ້ເກີດຂຶ້ນ ແລະ ນັບມື້ນັບແຜ່ຫຼາຍຢູ່ທຸກທ້ອງຖິ່ນໃນທົ່ວປະເທດ,ການລົງທຶນຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດນັບມື້ນັບເພີ່ມຂຶ້ນ,ເຮັດໃຫ້ລວມຍອດຜະລິດຕະພັນພາຍໃນເພີ່ມຂຶ້ນຢ່າງຕໍ່ເນື່ອງ,ລາຍໄດ້ສະເລ່ຍໃສ່ຫົວຄົນໃນປີ 2015 ບັນລຸ 1.857 ໂດລາສະຫະລັດ,ລື່ນປີ 1985 ເຖິງ 16 ເທົ່າ.ໃນການພັດທະ



新华社 图




新华社 图



新华社 图

ນາມັ້ນ,ພັກ ແລະ ລັດໃຫ້ຄວາມສຳຄັນໃນການແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ການພັດທະນາຊົນນະບົດຢ່າງຮອບດ້ານ,ເປັນຕົ້ນແມ່ນເຂດພູດອຍຊົນເຜົ່າ,ເຮັດໃຫ້ໂສມໜ້າເຂດຊົນນະບົດມີການປ່ຽນແປງຢ່າງຈະແຈ້ງ,ເຮັດໃຫ້ຄອບຄົວທຸກຍາກເຫຼືອພຽງແຕ່ 6.59%.

ພິເສດແມ່ນພວກເຮົາສາມາດສົ່ງດາວທຽມດວງທຳອິດຂອງລາວຂຶ້ນສູ່ວົງໂຄຈອນສຳເລັດໃນວັນທີ 21 ພະຈິກປີນີ້ແລະໂຄງການກໍ່ສ້າງທາງລົດໄຟລາວ-ຈີນທີ່ເຊື່ອມຕໍ່ຈາກ ສປ ຈີນເຂົ້າສູ່ນະຄອນຫຼວງວຽງຈັນ ແລະ ເຊື່ອມຈອດບັນດາປະເທດໃກ້ຄຽງຈະໄດ້ຈັດພິທີວາງສີລາລຶກກໍ່ສ້າງໃນມື້ນີ້ເອງ.

ເວົ້າລວມແລ້ວ,40 ປີແຫ່ງການປົກປັກຮັກສາ ແລະ ສ້າງສາລະບອບໃໝ່ພາຍໃຕ້ການນຳພາຂອງພັກ ແລະ



新华社 图

ປະເທດຊາດຂອງພວກເຮົາໄດ້ກ້າວເດີນຢ່າງໜັກແໜ້ນສູ່ຈຸດໝາຍປາຍທາງທີ່ວາງໄວ້,ສາມາດຢືນຢັນດ້ວຍຄວາມພາກພູມໃຈວ່າ,“ບໍ່ມີຍຸກໃດສະໄໝໃດທີ່ປະເທດຊາດອັນແສນຮັກຂອງພວກເຮົາໄດ້ມີຄວາມຣົ່ມເຢັນເປັນສຸກ,ໄດ້ຮັບການພັດທະນາຈະເລີນກ້າວໜ້າ ແລະ ຖານະບົດບາດຂອງປະເທດເຮົານັບມື້ນັບສູງເດັ່ນຂຶ້ນຢູ່ໃນເວທີພາກພື້ນ ແລະ ເວທີສາກົນຄືຢູ່ມື້ນີ້”.

ຫລັງຈາກສະຫາຍຈູມມາລີ ໄຊຍະສອນ ເລຂາທິການໃຫຍ່ກ່າວສູນທອນພົດຈົບແລ້ວ,ຊຶ່ງໄດ້ມີ 4 ກຸ່ມໃຫຍ່ປະກອບດ້ວຍ 15.000 ຄົນ 48 ຂະບວນກຳລັງໄດ້ຮັບການກວດແຖວ.ຂະບວນກ້ອນກຳລັງສວນສະໜາມເລີ່ມຂຶ້ນໂດຍແບ່ງອອກເປັນ 4 ກຸ່ມຄື:ເລີ່ມຈາກກຸ່ມທີໜຶ່ງນັກປະຕິວັດອາວຸໂສບຳນານ;ກຸ່ມທີສອງແມ່ນກຸ່ມກຳລັງປະກອບອາວຸດຊຶ່ງປະກອບດ້ວຍທະຫານ,ຕຳຫລວດ;ໃນນັ້ນມີກ້ອນທຸງຊາດ,ກ້ອນກຳລັງທະຫານບົກ,ທະຫານອາກາດ,ທະຫານຣາບ,ກ້ອນກຳລັງພິເສດ,ກ້ອນເຫຼົ່າທັບລົດຖັງ-ຍານເກາະ,ກ້ອນເຫຼົ່າຮົບປືນໃຫຍ່ໜ້າດິນ,ກ້ອນເຫຼົ່າຮົບປ້ອງກັນອາກາດ,ກ້ອນເຫຼົ່າຮົບຊ່າງແສງ,ກ້ອນກຳລັງສື່ສານ,ກ້ອນເຫຼົ່າຮົບເສນາຮັກ,ກ້ອນກອງຫຼອນ ແລະ ກ້ອນກຳລັງອື່ນໆ; ກຸ່ມທີສາມກ້ອນກຳລັງແນວລາວສ້າງຊາດ,ສະຫະພັນນັກຮົບເກົ່າ,ສະຫະພັນກຳມະບານ,ສູນກາງສະຫະພັນແມ່ຍິງ,ສູນກາງເຍົາວະຊົນ; ກຸ່ມທີສີ່ແມ່ນກ້ອນກຳລັງຂອງບັນດາກະຊວງທະບວງກົມ, ຂະແໜງການຕ່າງໆອ້ອມຂ້າງສູນກາງ,ອົງເຂດເສດຖະກິດ,ໂຮງຮຽນມະຫາວິທະຍາໄລ,ວິທະຍາຄານ ແລະ ຂັ້ນສຸດທ້າຍແມ່ນກ້ອນກຳລັງຂອງນະຄອນຫຼວງວຽງຈັນ.ໃນແຕ່ລະກ້ອນສວນສະໜາມດັ່ງກ່າວລ້ວນແຕ່ໄດ້ມີການສະແດງຜົນງານຂອງແຕ່ລະພາກສ່ວນທີ່ຍາດມາໄດ້ຕະຫລອດໄລຍະ 40 ປີແຫ່ງການສ້າງສາ ແລະ ພັດທະນາປະເທດຊາດພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ.

ຕອນເຊົ້າ 9 ໂມງ 30 ນາທີ,ງານໂຮມຊຸມນຸມສະເຫຼີມສະຫລອງ ແລະ ພິທີສວນສະໜາມໄດ້ສິ້ນສຸດລົງຢ່າງຈົບງາມ.

ຕອນຄ່ຳ 7 ໂມງ,ໄດ້ຈັດງານລາຕີສະແດງສິລະປະວັນນະຄະດີທີ່ຍອດຢ້ຽມຢ່າງຂະໜາດໃຫຍ່ທີ່ມີນັກສະແດງ 4000 ຄົນມີສ່ວນຮ່ວມ.8 ໂມງ 30 ນາທີໄດ້ຈັດງານລາຕີບັ້ງໄຟດອກມະໂຫລານຢ່າງຂະໜາດໃຫຍ່ທີ່ສະໜາມຫຼວງທາດຫຼວງນະຄອນຫລວງວຽງຈັນ.



刘仁和 图

图 / 新华社

# ທ່ານປະທານ ສີຈິ້ນຜິງ ສົ່ງສານອວຍພອນວັນສະຖາປະນາ ສປປ ລາວຄົບຮອບ 40 ປີ



ທ່ານ ຈາງເຕີ໋ຈ່ຽງ ສົ່ງຕໍ່ສານຂຽນເອງຂອງເລຂາທິການໃຫຍ່ ສີຈິ້ນຜິງ ໃຫ້ແກ່ທ່ານ ຈູມມາລີ ໄຊຍະສອນ
张德江向朱马里·赛雅颂转交习近平总书记的亲署函

**习近平致函祝贺**
**老挝建国四十周年**

张德江向朱马里·赛雅颂
转交习近平亲署函
并出席老挝建国庆典

2015年12月1日，中共中央总书记、国家主席习近平向老挝人民革命党中央总书记、国家主席朱马里·赛雅颂致亲署函，祝贺老挝人民民主共和国成立40周年。

ທ່ານ ຈ່າງເຕີ໋ຈ່ຽງ ໄດ້ສົ່ງສານອວຍພອນທີ່ລົງນາມໂດຍທ່ານປະທານ ສີຈິ້ນຜິງ ໃຫ້ແກ່ທ່ານປະທານ ຈູມມາລີ ໄຊຍະສອນ,ແລະ ເຂົ້າຮ່ວມພິທີສະເຫຼີມສະຫຼອງ.

ວັນທີ 1 ທັນວາ ປີ 2015,ທ່ານ ສີຈິ້ນຜິງ,ເລຂາທິການໃຫຍ່ສູນກາງພັກຄອມມູນິດຈີນ,ປະທານປະເທດຈີນໄດ້ສົ່ງສານອວຍພອນທີ່ລົງນາມດ້ວຍຕົນເອງໄປຍັງ ທ່ານ ຈູມມະລີ ໄຊຍະສອນ,ເລຂາທິການໃຫຍ່ສູນກາງພັກປະຊາຊົນປະຕິວັດລາວ,ປະທານປະເທດລາວ,ເພື່ອສະແດງຄວາມຊົມເຊີຍຕໍ່ວັນສະຖາປະນາ ສປປ ລາວຄົບຮອບ 40 ປີ.ໃນສານອວຍພອນຂຽນວ່າ,ເນື່ອງໃນໂອກາດວັນສະຖາປະນາສາທາລະນະລັດປະຊາທິປະໄຕປະຊາຊົນລາວຄົບຮອບ 40 ປີ,ໃນນາມພັກກອມມູນິດຈີນ,ລັດຖະບານຈີນ,ປະຊາຊົນຈີນ,ແລະ ໃນນາມສ່ວນຕົວຂອງຂ້າພະເຈົ້າເອງ,ພວກຂ້າພະເຈົ້າຂໍສະແດງຄວາມຊົມເຊີຍຢ່າງສຸດໃຈມາຍັງສະຫາຍ ຈູມມາລີ ໄຊຍະສອນ,ໄປຍັງພັກປະຊາຊົນປະຕິວັດລາວ,ລັດຖະບານ,ແລະ ປະຊາຊົນລາວ.ໃນ 40 ປີທີ່ຜ່ານມາ,ພາຍໃຕ້ການນຳພາຢ່າງເຂັ້ມແຂງຂອງພັກປະຊາຊົນປະຕິວັດລາວ,ປະຊາຊົນລາວບັນດາເຜົ່າໄດ້ເພິ່ງຕົນເອງສ້າງຄວາມເຂັ້ມແຂງດ້ວຍຕົນເອງ,ບາກບັ່ນສູ້ຊົນຢ່າງມີຄວາມທໍລະຫົດອົດທົນ,ໄດ້ຮັບຜົນສຳເລັດອັນຍິ່ງໃຫຍ່ໃນການສ້າງສາສັງຄົມນິຍົມ ແລະ ພາລະກິດປ່ຽນແປງໃໝ່ຢ່າງມີຫຼັກການ ແລະ ຮອບດ້ານ. ພວກຂ້າພະເຈົ້າຮູ້ສຶກປິຕິຊົມຊື່ນຢ່າງສຸດໃຈທີ່ໄດ້ເຫັນບັນດາສະຫາຍໄດ້ຮັບຜົນສຳເລັດເຫຼົ່ານີ້,ແລະ ອວຍພອນຢ່າງສຸດໃຈໃຫ້ພັກປະຊາຊົນປະຕິວັດລາວນຳພາປະຊາຊົນລາວບັນດາເຜົ່າ,ໄດ້ຮັບຜົນສຳເລັດທີ່ຍິ່ງໃຫຍ່ກວ່າເກົ່າບົນເສັ້ນທາງສ້າງສາປະເທດສັງຄົມນິຍົມທີ່ປະເທດເຂັ້ມແຂງ,ປະຊາຊົນຮັ່ງມີ,ສັງຄົມມີຄວາມສາມັກຄີ ແລະ ຄວາມກົມກຽວກັນ,ມີປະຊາທິປະໄຕຄວາມຍຸດຕິທຳ ແລະ ຄວາມສີວິໄລ.ພາຍໃຕ້ຄວາມພະຍາຍາມຮ່ວມກັນຂອງທັງສອງຝ່າຍ,ຄວາມໄວ້ເນື້ອເຊື່ອໃຈກັນດ້ານການເມືອງລະຫວ່າງສອງປະເທດຈີນລາວນັບມື້ນັບກ້າວສູ່ລວງເລິກ,ການຮ່ວມມືດ້ານເສດຖະກິດການຄ້າພັດທະນາຢ່າງວ່ອງໄວ,ການແລກປ່ຽນລະຫວ່າງປະຊາຊົນມີຄວາມຟົດຟື້ນທີ່ບໍ່ເຄີຍມີມາກ່ອນ,ສາຍພົວພັນລະຫວ່າງສອງພັກສອງລັດໄດ້ເຂົ້າສູ່ໄລຍະທີ່ດີທີ່ສຸດໃນປະຫວັດສາດ.ພວກຂ້າພະເຈົ້າຍິນດີຮ່ວມກັບຝ່າຍລາວ,ພາຍໃຕ້ການຊີ້ນຳຂອງທິດທາງໝັ້ນຄົງຍາວນານ,ມີໄມຕີຈິດມິດຕະພາບຖານບ້ານໃກ້ເຮືອນຄຽງ,ໄວ້ເນື້ອເຊື່ອໃຈກັນ,ແລະ ຮ່ວມມືຮອບດ້ານ,ແລະ ນ້ຳໃຈບ້ານໃກ້ເຮືອນຄຽງທີ່ດີ,ເພື່ອນມິດທີ່ດີ,ສະຫາຍທີ່ດີ ແລະ ຄູ່ຮ່ວມມືທີ່ດີນັ້ນ,ລົງເລິກຊຸກຍູ້ສາຍພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານທີ່ມີຄວາມໄວ້ເນື້ອເຊື່ອໃຈກັນ,ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດໃນລະດັບສູງ,ສ້າງກຸ່ມຮ່ວມຊະຕາກຳຈີນລາວທີ່ໜັກແໜ້ນ,ປະກອບສ່ວນໃຫຍ່ກວ່າເກົ່າເຂົ້າໃນການປົກປັກຮັກສາສັນຕິພາບ,ສະຖຽນລະພາບ ແລະ ການພັດທະນາຂອງພາກພື້ນກໍຄືຂອງໂລກ.

ໂດຍໄດ້ຮັບການມອບໝາຍຈາກສູນກາງພັກຄອມມູນິດຈີນ ແລະ ທ່ານເລຂາທິການໃຫຍ່ສີຈິ້ນຜິງ,ທ່ານ ຈ່າງເຕີ໋ຈ່ຽງ,ກຳມະການປະຈຳກົມການເມືອງສູນກາງພັກຄອມມູນິດຈີນ,ປະທານຄະນະປະຈຳສະພາປະຊາຊົນທົ່ວປະເທດໄດ້ເດີນທາງໄປຮອດນະຄອນຫຼວງວຽງຈັນໃນວັນທີ 1 ທັນວາ ປີ 2015,ເພື່ອເຂົ້າຮ່ວມພິທີສະເຫຼີມສະຫຼອງວັນສະຖາປະນາ ສປປ ລາວຄົບຮອບ 40 ປີ ແລະ ຢ້ຽມຢາມສັນຖະວະໄມຕີປະເທດລາວຢ່າງເປັນທາງການ.ຕອນບ່າຍມື້ດຽວກັນ,ທ່ານ ຈ່າງເຕີ໋ຈ່ຽງ ໄດ້ເຂົ້າຢ້ຽມຂໍ່ານັບທ່ານ ຈູມມາລີ ໄຊຍະສອນ,ເລຂາທິການໃຫຍ່ສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດລາວ,ໄດ້ຝາກຄວາມຢື້ຢາມຖາມຂ່າວອັນສະໜິດສະໜົມ ແລະ ຄວາມອວຍພອນທີ່ດີງາມຂອງທ່ານເລຂາທິການໃຫຍ່ ສີຈິ້ນຜິງ ໄປຍັງທ່ານ ຈູມມາລີ ໄຊຍະສອນ,ແລະ ໄດ້ຝາກສານອວຍພອນທີ່ລົງນາມໂດຍທ່ານ ສີຈິ້ນຜິງ. ທ່ານ ຈູມມາລີ ໄຊຍະສອນສະແດງຄວາມຂອບໃຈຢ່າງສຸດໃຈຕໍ່ທ່ານ ສີຈິ້ນຜິງ ທີ່ໄດ້ຝາກສານອວຍພອນ,ແລະ ຂໍໃຫ້ທ່ານ ຈ່າງເຕີ໋ຈ່ຽງ ຝາກຄວາມຢື້ຢາມຖາມຂ່າວອັນສະໜິດສະໜົມ ແລະ ຄວາມອວຍພອນອັນດີງາມໄປຍັງທ່ານ ສີຈິ້ນຜິງ.

ຕອນຄ່ຳວັນທີ 1 ທັນວາ ແລະ ຕອນເຊົ້າວັນທີ 2 ທັນວາ,ທ່ານ ຈ່າງເຕີ໋ຈ່ຽງ ໄດ້ເຂົ້າຮ່ວມງານລ້ຽງ ແລະ ພິທີສະເຫຼີມສະຫຼອງວັນຊາດລາວຄົບຮອບ 40 ປີ,ທ່ານ ຈູມມາລີ ໄຊຍະສອນ ພ້ອມດ້ວຍຜູ້ນຳພັກ ແລະ ລັດອື່ນໆຂອງລາວກໍ່ໄດ້ເຂົ້າຮ່ວມ.

文、图/张蕾 白艳

# ສະຖານກົງສຸນໃຫຍ່ລາວປະຈຳຄຸນໝິງຈັດງານລ້ຽງ ສະເຫຼີມສະຫຼອງວັນສະຖາປະນາ ສປປ ລາວຄົບຮອບ 40 ປີ



ທ່ານ ບຸນລຽບ ຮຸ່ງວົງສອນ ກົງສຸນໃຫຍ່ລາວທີ່ຄຸນໝິງຂຶ້ນກ່າວຄຳປາໄສໃນງານຮັບຮອງ
老挝驻昆明总领事本廉·洪翁孙在招待会上致词

## 老挝驻昆明总领事馆举行 老挝建国 40 周年招待会

为庆祝老挝人民民主共和国成立 40 周年，2015 年 11 月 24 日，老挝驻昆明总领事馆在昆明举行招待会。云南省人大常委会副主任刀林荫，云南省副省长刘慧晏，云南省政协副主席曾华出席招待会。

ວັນທີ 24 ພະຈິກ 2015,ສະຖານກົງສຸນໃຫຍ່ ສປປ ລາວປະຈຳຄຸນໝິງໄດ້ຈັດງານລ້ຽງຢູ່ຄຸນໝິງເພື່ອສະເຫຼີມສະຫຼອງວັນສະຖາປະນາ ສປປ ລາວຄົບຮອບ 40 ປີ.

ທ່ານ ຕາວລິນຢິນ,ຮອງປະທານຄະນະປະຈຳສະພາປະຊາຊົນແຂວງຢຸນນານ,ທ່ານ ລິວຮຸ້ຍຢ້ຽນ,ຮອງເຈົ້າແຂວງແຂວງຢຸນນານ,ທ່ານ ເຈິ່ງຮວາ ຮອງປະທານສະພາປຶກສາການເມືອງແຂວງຢຸນນານໄດ້ເຂົ້າຮ່ວມງານລ້ຽງດັ່ງກ່າວ.

ທ່ານ ບຸນລຽບ ຮຸ່ງວົງສອນ,ກົງສຸນໃຫຍ່ ສປປ ລາວປະຈຳຄຸນໝິງກ່າວວ່າ,ສອງປະເທດລາວຈີນເປັນປະເທດບ້ານໃກ້ເຮືອນຄຽງທີ່ດີຕໍ່ກັນແຕ່ບູຮານນະການ,ພວກຂ້າພະເຈົ້າຮູ້ສຶກດີໃຈທີ່ໄດ້ເຫັນວ່າ,ໃນຊຸມປີມໍ່ໆມານີ້,ການແລກປ່ຽນ ແລະ ການຮ່ວມມືຢ່າງມີໄມຕີຈິດມິດຕະພາບຕໍ່ກັນລະຫວ່າງສອງປະເທດໄດ້ຮັບການປັບປຸງ ແລະ ຂະຫຍາຍຕົວເລື້ອຍໆ,ພວກຂ້າພະເຈົ້າຕີລາຄາສູງຕໍ່ການຂະຫຍາຍຕົວຂອງສາຍພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານລະຫວ່າງສອງປະເທດ,ນີ້ໄດ້ປະກອບສ່ວນອັນສຳຄັນເຂົ້າໃນການເພີ່ມທະວີຄວາມເຂົ້າໃຈລະຫວ່າງປະຊາຊົນສອງຊາດ,ແລະ ການກໍ່ສ້າງພັດທະນາຂອງປະເທດຕົນ.ລາວ ແລະ ຈີນເປັນປະເທດບ້ານໃກ້ເຮືອນຄຽງທີ່ດີ,ເພື່ອນມິດທີ່ດີ,ສະຫາຍທີ່ດີ,ແລະ ຄູ່ຮ່ວມມືທີ່ດີ,ຜູ້ນຳຂັ້ນສູງສອງປະເທດກໍ່ໄດ້ຮັກສາການແລກປ່ຽນ ແລະ ການພົວພັນຢ່າງໃກ້ຊິດ,ແລະ ມີມູນເຊື້ອທີ່ຢ້ຽມຢາມເຊິ່ງກັນ ແລະ ກັນໃນທຸກປີ.

ສະຖານກົງສຸນລາວປະຈຳຄຸນໝິງໃຫ້ຄວາມສຳຄັນສູງຕໍ່ສາຍພົວພັນຄູ່ຮ່ວມມືທີ່ໃກ້ຊິດ ແລະ ຂະຫຍາຍຕົວຢ່າງສືບເນື່ອງລະຫວ່າງລາວກັບແຂວງຢຸນນານ,ພວກຂ້າພະເຈົ້າຂໍສະແດງຄວາມຂອບໃຈຢ່າງສຸດໃຈຕໍ່ຄະນະພັກ,ອົງການປົກຄອງແຂວງຢຸນນານ ແລະ ປະຊາຊົນບັນດາເຜົ່າຂອງແຂວງຢຸນນານ.ໃນຊຸມປີມານີ້,ຄະນະຜູ້ແທນຂັ້ນສູງທາງພັກ ແລະ ລັດຫຼາຍຄະນະຂອງລາວໄດ້ຢ້ຽມຢາມແຂວງຢຸນນານ,ເຊັ່ນ:ເດືອນ ມິຖຸນາ ປີ 2015,ທ່ານ ທອງສິງ ທຳມະວົງ,ນາຍົກລັດຖະມົນຕີລາວໄດ້ນຳພາຄະນະໄປເຂົ້າຮ່ວມງານວາງສະແດງສິນຄ້າຈີນອາຊີໃຕ້ຄັ້ງທີ 3 ແລະ ງານຕະຫຼາດນັດຄຸນໝິງຄັ້ງທີ 23 ຢູ່ທີ່ນະຄອນຄຸນໝິງ;ຕົ້ນເດືອນ ກັນຍາ ປີ 2015,ທ່ານ ຈູມມາລີ ໄຊຍະສອນ,ເລຂາທິການໃຫຍ່ສູນກາງພັກປະຊາຊົນປະຕິວັດລາວ,ປະທານປະເທດລາວກໍ່ໄດ້ແວ່ຢ້ຽມຢາມແຂວງຢຸນນານຫຼັງຈາກການສິ້ນສຸດການຢ້ຽມຢາມນະຄອນຫຼວງປັກກິ່ງ;ທ້າຍເດືອນ ຕຸລາ ປີ 2015,ຄະນະຜູ້ແທນຂັ້ນສູງແຂວງຢຸນນານໄດ້ໄປເຂົ້າຮ່ວມກອງປະຊຸມຄັ້ງທີ 7 ຂອງໜ່ວຍງານຮ່ວມມືແຂວງຢຸນນານຈີນ-ພາກເໜືອລາວ,ໃນໄລຍະກອງປະຊຸມສອງຝ່າຍໄດ້ບັນລຸຄວາມເຫັນເປັນເອກະພາບກັນໃນລະດັບສູງຕໍ່ການຮ່ວມມືໃນຫຼາຍຂົງເຂດ.

ປະຈຸບັນ,ຫຼາຍວິສາຫະກິດຂອງແຂວງຢຸນນານໄດ້ໄປລົງທຶນຢູ່ປະເທດລາວໃນຂົງເຂດກະສິກຳ,ບໍ່ແຮ່,ການກໍ່ສ້າງເສັ້ນທາງ,ໂຮງແຮມ,ຮ້ານຄ້າ ແລະ ອື່ນໆ,ລາວກາຍເປັນຕະຫຼາດລົງທຶນໃຫຍ່ທີ 2 ຂອງແຂວງຢຸນນານຢູ່ຕ່າງປະເທດ.ປີ 2014,ມູນຄ່າການຄ້າສອງຝ່າຍລະຫວ່າງແຂວງຢຸນນານກັບລາວມີເຖິງ 1,3 ຕື້ໂດລາ.ນອກນີ້,ແຕ່ລະປີແຂວງຢຸນນານຈະໃຫ້ໂກຕາທຶນສຶກສາຈຳນວນຫຼວງຫຼາຍໃຫ້ແກ່ປະເທດລາວ.ປະຈຸບັນ,ນັກສຶກສາລາວທີ່ຮໍ່າຮຽນຢູ່ວິທະຍາໄລຕ່າງໆຂອງແຂວງຢຸນນານມີເຖິງ 1600 ຄົນ,ນັກສຶກສາຈຳນວນໜຶ່ງທີ່ໄດ້ສິ້ນສຸດການ



ນັກສຶກສາລາວທີ່ສຶກສາຢູ່ຄຸນໝິງສະແດງບົດຟ້ອນທີ່ເປັນມູນເຊື້ອລາວ
老挝在昆留学生表演老挝传统舞蹈



ທ່ານ ບຸນລຽບ ຮຸ່ງວົງສອນ ກົງສຸນໃຫຍ່ລາວທີ່ຄຸນໝິງພ້ອມດ້ວຍພັນລະຍາລຳວົງພ້ອມກັນກັບແຂກຢ່າງອົບອຸ່ນ
老挝驻昆明总领事本廉·洪翁孙及夫人与来宾热情共舞



ສະຖານທີ່ງານຮັບຮອງ
招待会现场



ນັກສຶກສາລາວທີ່ນຸ່ງເຄື່ອງນຸ່ງອາພອນທີ່ເປັນມູນເຊື້ອຂອງລາວ
身着老挝传统服饰的老挝留学生

ຮຽນນັ້ນພວມກາຍເປັນກຳລັງແກ່ນກາງໃນການສ້າງສາພັດທະນາປະເທດລາວ.

ມິດຕະພາບລາວຈີນມີມູນເຊື້ອທີ່ດີງາມມາແຕ່ດົນນານ,ການພັດທະນາຢ່າງປອດໃສຂອງເສດຖະກິດລາວປາສະຈາກການສະໜັບສະໜູນຂອງຈີນບໍ່ໄດ້,ສອງຝ່າຍມີການແລກປ່ຽນ ແລະ ການຮ່ວມມືຢ່າງໃກ້ຊິດໃນດ້ານເສດຖະກິດການຄ້າ,ກະສິກຳ,ການສຶກສາ ແລະ ອື່ນໆ,ໄດ້ຮັບໝາກຜົນຢ່າງອຸດົມສົມບູນ,ຫວັງວ່າສອງຝ່າຍຈະເພີ່ມທະວີການໄປມາຫາສູ່ກັນດ້ານບຸກຄະລາກອນຕື່ມອີກໃນອະນາຄົດ,ຊຸກຍູ້ການແລກປ່ຽນ ແລະ ການຮ່ວມມືໃນດ້ານເສດຖະກິດການຄ້າ,ການທ່ອງທ່ຽວ,ວັດທະນະທຳ,ການສຶກສາ ແລະ ອື່ນໆ,ສືບຕໍ່ເພີ່ມທະວີມິດຕະພາບລະຫວ່າງປະຊາຊົນສອງຊາດ.ຫວັງວ່າວົງການຕ່າງໆຂອງແຂວງຢຸນນານຈະສະໜັບສະໜູນການພັດທະນາຂອງປະເທດລາວຄືເຄີຍເຮັດຜ່ານມາ,ສອງຝ່າຍຮ່ວມມືພັດທະນາພ້ອມກັນ,ແລະ ຍາດເອົາຜົນສຳເລັດອັນໃໝ່ຢ່າງບໍ່ຢຸດຢັ້ງ.

ຫຼັງຈາກນັ້ນ,ທ່ານ ບຸນລຽບ ຮຸ່ງວົງສອນ ຮ່ວມກັບທ່ານ ລິວຮຸ້ຍຢ້ຽນ,ຮອງເຈົ້າແຂວງແຂວງຢຸນນານ ແລະທ່ານໂຈ່ວທົງ,ຫົວໜ້າຫ້ອງການຕ່າງປະເທດອົງການປົກຄອງແຂວງຢຸນນານໄດ້ຕັດເຂົ້າໜົມເຄັກເພື່ອສະແດງຄວາມຊົມເຊີຍ.

ຢູ່ໃນງານລ້ຽງດັ່ງກ່າວ,ຍັງໄດ້ຈັດໃຫ້ມີການສະແດງສິລະປະທີ່ມີສີສັນອັນເຂັ້ມຂຸ້ນຂອງປະເທດລາວ.



文、图 / 老挝驻上海总领事馆

# ສະຖານກົງສຸນໃຫຍ່ລາວທີ່ນະຄອນຊຽງໄຮ້ຈັດຕັ້ງພິທີ ສະເຫຼີມສະຫຼອງວັນຊາດທີ 2 ທັນວາ ຄົບຮອບ 40 ປີ

## 老挝驻上海总领事馆举行老挝建国40周年庆典

2015 年 12 月 2 日，老挝驻上海总领事馆在上海 Renaissance 宾馆举行老挝建国 40 周年庆祝大会。老挝驻上海总领事馆总领事西沙迈・琅占达翁女士在致辞中说到，40 年来，在老挝人民革命党的领导下，老挝各个领域的建设发展均取得了巨大成就。老挝人民生活富裕，国家富强，社会团结和睦、民主、公正和繁荣。



ສະຖານກົງສຸນໃຫຍ່ ແຫ່ງ ສປປ ລາວ ທີ່ ນະຄອນຊຽງໄຮ້ຈັດຕັ້ງພິທີງານລ້ຽງສະເຫຼີມສະຫຼອງວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຄົບຮອບ 40 ປີໃນ ວັນທີ 2 ທັນວາ 2015 ທີ່ ໂຮງແຮມ ຣິແນຊັງ Renaissance ນະຄອນຊຽງໄຮ້,ເປັນກຽດເຂົ້າຮ່ວມມີ ທ່ານ ເສີນຈິງ,ຮອງເລຂາຄະນະພັກນະຄອນຊຽງໄຮ້ພ້ອມທັງແຂກທີ່ມີກຽດຈາກຫລາຍພາກສ່ວນເຊັ່ນ: ພະນັກງານຈາກພາກລັດ ແລະ ເອກະຊົນນະຄອນຊຽງໄຮ້,ແຂວງເຈີຈຽງ,ຈຽງຊູ ແລະ ອານຮຸຍ,ບັນດາກົງສຸນໃຫຍ່ຕ່າງປະເທດທີ່ນະຄອນຊຽງໄຮ້,ພະນັກງານກົງສຸນລາວ ແລະ ນັກສຶກສາລາວລວມທັງໝົດ 225 ຄົນ.

ໃນໂອກາດດັ່ງກ່າວ,ທ່ານນາງ ສີສະໄໝ ຫຼວງຈັນດາວົງ,ກົງສຸນໃຫຍ່ໄດ້ຂຶ້ນກ່າວເຖິງເນື້ອໃນຄວາມໝາຍຄວາມສຳຄັນ ແລະ ປະຫວັດຄວາມເປັນມາຂອງວັນຊາດທີ 2 ທັນວາ 2015 ຄົບຮອບ 40 ປີ ຜົນສຳເລັດແຫ່ງການສ້າງສາ ແລະ ພັດທະນາສປປ ລາວ ໃນຂົງເຂດຕ່າງໆເຊັ່ນ: ການພັດທະນາທາງດ້ານເສດຖະກິດ,ການພັດທະນາທາງດ້ານສັງຄົມ,ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ວຽກງານການຕ່າງປະເທດພາຍໃຕ້ການນຳພາອັນສະຫລາດສ່ອງໄສຂອງພັກປະຊາຊົນປະຕິວັດລາວສາມາດຍາດມາໄດ້ຜົນສຳເລັດໃຫຍ່ຫລວງໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຕາມທິດທາງເຮັດໃຫ້ປະຊາຊົນຮັ່ງມີຜາສຸກ,ປະເທດຊາດມັ່ງຄັ່ງເຂັ້ມແຂງ,ສັງຄົມມີຄວາມສາມັກຄີປອງດອງ,ປະຊາທິປະໄຕ,ຍຸຕິທຳ ແລະສີວິໄລ.

ໃນພິທີງານຄັ້ງນີ້ຍັງໄດ້ມີລາຍການສະແດງສິລະປະວັນນະຄະດີຂອງນັກສຶກສາລາວເຊິ່ງເຮັດໃຫ້ງານສະເຫຼີມສະຫຼອງມີບັນຍາກາດຟົດຟື້ນມ່ວນຊື່ນ ແລະ ເຕັມໄປດ້ວຍໄມຕີຈິດມິດຕະພາບ.

文 / 刘仁和

# ພິທີວາງສີລາລຶກໂຄງການທາງລົດໄຟລາວ-ຈີນໄດ້ຈັດຂຶ້ນທີ່ວຽງຈັນ



刘仁和 图

## 老中铁路项目奠基仪式在万象举行

老中铁路项目奠基仪式于 2015 年 12 月 2 日在万象市赛色塔县班赛村隆重举行。老挝人民革命党中央总书记、国家主席朱马里·赛雅颂，政府总理通辛·塔马冯、国会主席巴妮·雅陶都以及其他各部委领导，中国全国人大常委会委员长张德江，中国驻老挝特命全权大使关华兵，中国铁路总公司总经理盛光祖以及应邀嘉宾等 300 余人参加奠基仪式。

ພິທີວາງສີລາລຶກໂຄງການທາງລົດໄຟລາວ-ຈີນ ໄດ້ຈັດຂຶ້ນໃນວັນທີ 2 ທັນວາ ປີ 2015 ທີ່ບ້ານໄຊເມືອງ ໄຊເສດຖານະຄອນຫຼວງວຽງຈັນຢ່າງຄຶກຄື້ນ.ສະຫາຍ ຈູມມາລີ ໄຊຍະສອນ ເລຂາທິການໃຫຍ່ຄະນະບໍລິຫານ ງານສູນກາງພັກປະຊາຊົນປະຕິວັດລາວ ປະທານປະເທດ ແຫ່ງ ສປປ ລາວ,ທ່ານທອງສິງ ທຳມະວົງ ນາຍົກລັດຖະ ມົນຕີລາວ,ທ່ານນາງປານີ ຢາທໍ່ຕູ້ ປະທານສະພາແຫ່ງ ຊາດລາວ,ການນຳຜູ້ອື່ນໆໃນກະຊວງທະບວງກົມທີ່ກ່ຽວ ຂ້ອງ,ສະຫາຍ ຈາງເຕີຈຽງ ປະທານຄະນະກຳມະການ ປະຈຳສະພາຜູ້ແທນທົ່ວປະເທດແຫ່ງ ສປ ຈີນ,ທ່ານ ກວນ ຮວາປີງ ເອກອັກຄະລັດຖະທູດຜູ້ມີອຳນາດເຕັມ ສປ ຈີນ ປະຈຳລາວ,ທ່ານ ເສີນກວາງຈູ ຜູ້ອຳນວຍການໃຫຍ່ລັດ ວິສາຫະກິດທາງລົດໄຟຈີນ ແລະ ແຂກທີ່ຖືກເຊີນລວມ ມີ 300 ຄົນເຂົ້າຮ່ວມ.

ຕອນເຊົ້າ 11 ໂມງຕົງ,ພິທີວາງສີລາລຶກເລີ່ມຕົ້ນ ຢ່າງເປັນທາງການ.ກ່ອນພິທີວາງສີລາລຶກໄດ້ດຳເນີນ ການສະແດງສິລະປະທີ່ຍອດຢ້ຽມ.

11 ໂມງ 15 ນາທີ,ທ່ານ ສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີລາວຫົວໜ້າຄະນະກຳມະການ ຊີ້ນຳທາງລົດໄຟລາວ-ຈີນຕ່າງໜ້າພັກ ແລະ ລັດຖະບານ ລາວກ່າວຄຳປາໄສໃນພິທີວາງສີລາລຶກ,ທ່ານກ່າວວ່າ, ມື້ນີ້ແມ່ນວັນສາຖະປະນາ ສປປ ລາວຄົບຮອບ 40 ປີ. ເນື່ອງໃນໂອກາດທີ່ມີຄວາມໝາຍປະຫວັດສາດນີ້,ຂ້າ ພະເຈົ້າມີຄວາມເບີກບານມ່ວນຊື່ນເພື່ອຈັດວາງພິທີວາງ ສີລາລຶກໂຄງການທາງລົດໄຟລາວ-ຈີນເຊິ່ງແມ່ນທາງ ລົດໄຟທີ່ມີລະດັບເຕັກນິກສູງສຸດສາຍທຳອິດໃນອາຊີຕາ ເວັນອອກສຽງໃຕ້.ພວກເຮົາກໍຮູ້ໄດ້ວ່າ,ໂຄງການດັ່ງ ກ່າວນີ້ຈະເລີ່ມຕົ້ນຢ່າງສະດວກ,ໄດ້ຕັດສິນດ້ວຍຄວາມ ເອົາໃຈໃສ່ ແລະ ໃຫ້ການສະໜັບສະໜູນຢ່າງອົບອຸ່ນຈາກ ການນຳຊັ້ນສູງທັງສອງປະເທດລາວຈີນ ແລະ ການປະ ສານສົມທົບ,ການຮ່ວມມືກັນຢ່າງແໜ້ນແຟ້ນລະຫວ່າງ ອົງຈັດຕັ້ງທີ່ກ່ຽວຂ້ອງທັງສອງຝ່າຍ.ໃນຂະນະມີຄວາມ ເບີກບານມ່ວນຊື່ນນີ້,ຂ້າພະເຈົ້າຂໍຕາງໜ້າພັກ ແລະ ລັດ ຖະບານລາວ,ປະຊາຊົນທຸກຊົນເຜົ່າຂໍສະແດງຄວາມ ຊາບຊຶ້ງໃຈຢ່າງເລິກເຊິ່ງ ແລະ ຂອບອົກຂອບໃຈຢ່າງ ສຸດໃຈມາຍັງພັກ ແລະ ລັດຖະບານຈີນປະຊາຊົນຈີນໃຫ້ ການຊ່ວຍເຫຼືອ ແລະ ການສະໜັບສະໜູນອັນປະເສີດຢູ່ ຕະຫລອດມາແກ່ໂຄງການດັ່ງກ່າວນີ້.

ທາງລົດໄຟລາວຈີນແມ່ນເລີ່ມຈາກຊາຍແດນຈີນ ລາວຮອດນະຄອນຫຼວງວຽງຈັນເຊື່ອມຕໍ່ຂົວໃໝ່ຂອງໄທ (ລຳຖ້າກໍ່ສ້າງ),ຄວາມຍາວທາງລົດໄຟ 427,2 ກິໂລແມັດ, ແມ່ນທາງລົດໄຟເສັ້ນດຽວມາດຕາຖານຊັ້ນ 1 ທີ່ມີໄລ ຍະຫ່າງທາງລົດໄຟ 1435 mm; ຄວາມໄວທີ່ອອກແບບ ຂອງລົດໄຟແມ່ນ 160 ກິໂລແມັດຕໍ່ຊົ່ວໂມງສຳລັບໂດຍ ສານ. ຢູ່ໃນຕອນທົ່ງພຽງອອກແບບໄວ້ສຳລັບ 200 ກິ ໂລແມັດຕໍ່ຊົ່ວໂມງ,ຄວາມໄວທີ່ອອກແບບສຳລັບຂະບວນ ລົດຂົນສົ່ງສິນຄ້າແມ່ນ 120 ກິໂລແມັດຕໍ່ຊົ່ວໂມງ.ນຳໃຊ້ ກະແສໄຟຟ້າລາກຫົວຈັກ.ເສັ້ນທາງລົດໄຟທັງໝົດສ້າງ ໃຫ້ມີສະຖານີລົດໄຟ 33 ແຫ່ງ,ໃນນັ້ນມີ 21 ແຫ່ງແມ່ນ ສະຖານີຫຼີກລົດ,12 ແຫ່ງແມ່ນສະຖານີດຳເນີນການຂົນ ສົ່ງໂດຍສານ ແລະ ສິນຄ້າ(ລວມທັງສູນການຂົນສົ່ງສິນ ຄ້າ 1 ແຫ່ງ),ໜ້າວຽກພື້ນຖານທີ່ສຳຄັນ: ພື້ນທີ່ທາງລົດ ໄຟ 175 ກິໂລແມັດ,ກວມ 41% ຂອງລວງຍາວ,ຂົວ 170 ແຫ່ງ,ຍາວ 69 ກິໂລແມັດ,ກວມ 16% ຂອງລວງຍາວ; ອຸໂມງ 72 ແຫ່ງ,ລວງຍາວ 183 ກິໂລແມັດ,ກວມ 43% ຂອງລວງຍາວ,ໃນນັ້ນ,ອຸໂມງຍາວສຸດແມ່ນ 9,5 ກິໂລ ແມັດ.ການນຳໃຊ້ທີ່ດິນຂອງໂຄງການແບ່ງອອກເປັນ ສອງພາກສ່ວນ,ຄື:ນຳໃຊ້ທີ່ດິນຍາວນານ ແລະ ນຳໃຊ້ ທີ່ດິນຊົ່ວຄາວ.ນຳໃຊ້ທີ່ດິນຍາວນານເປັນຕົ້ນແມ່ນລຽບ ຕາມທາງລົດໄຟ ແລະ ສະຖານີລົດໄຟ,ນຳໃຊ້ທີ່ດິນລວມ 3058 ເຮັກຕາ; ນຳໃຊ້ທີ່ດິນຊົ່ວຄາວ.ເປັນຕົ້ນແມ່ນແມ່ ໃສ່ສະໜາມເພື່ອເອົາດິນ,ສະໜາມປະຖິ້ມດິນ ແລະ ສະ ໜາມກ້ອນຫີນ ແລະ ໃນເວລາກໍ່ສ້າງຈະຕ້ອງຈັບຈອງ ທີ່ດິນຈຳນວນໜຶ່ງ.ລວມ 803 ເຮັກຕາ.ເຂດປົກປັກຮັກ ສາທາງລົດໄຟແມ່ນເລີ່ມຈາກໃຈກາງທາງລົດໄຟຈີນ



刘仁和 图



ເສົາຫຼັກໝາຍທາງລົດໄຟຈີນ-ລາວ
中老铁路里程桩　新华社图



ວັນທີ 25 ເດືອນ 11,ພະນັກງານກວດເບິ່ງສະຖານທີ່ວາງສີລາລຶກທາງລົດໄຟຈີນ-ລາວທີ່ນະຄອນຫລວງວຽງຈັນ
11 月 25 日，在老挝首都万象，工作人员查看中老铁路奠基仪式现场　新华社图

ເຖິງສອງເບື້ອງໃນຂອບເຂດ 50 ແມັດ.ຄາດຄະເນຍອດການລົງທຶນຂອງໂຄງການດັ່ງກ່າວນີ້ແມ່ນ 3,87 ຕື້ຢວນຈີນ,ສະເລ່ຍຄ່າກໍ່ສ້າງ 1 ກິໂລແມັດ 90,6 ລ້ານຢວນຈີນ, ກະວ່າ 5 ປີ ສ້າງສຳເລັດ.

ທ່ານ ເສີນກວາງຈູ ຜູ້ອຳນວຍການໃຫຍ່ລັດວິສາຫະກິດທາງລົດໄຟຈີນຕາງໜ້າກົມກອງກໍ່ສ້າງ ແລະ ດຳເນີນທຸລະກິດຂຶ້ນກ່າວຄຳປາໄສ.ທ່ານເວົ້າວ່າ,ທາງລົດໄຟຈີນ-ລາວແມ່ນໂຄງການຮ່ວມມືຍຸດທະສາດທີ່ສຳຄັນຂອງການນຳສູງສຸດທັງສອງຝັກລັດຈີນລາວທີ່ໄດ້ຕົກລົງນຳກັນດ້ວຍຕົນເອງ ແລະ ເປັນຜູ້ຊຸກຍູ້ນຳກັນ.ທ່ານ ສີຈິນຜິງ ເລຂາທິການໃຫຍ່ໄດ້ໃຫ້ຄຳຊີ້ນຳຢ່າງຈະແຈ້ງວ່າ, ຈະຕ້ອງເລັ່ງລັດການກໍ່ສ້າງທາງລົດໄຟຈີນລາວໂດຍໄວ,ຈະຂະຫຍາຍການຮ່ວມມືການກໍ່ສ້າງໂຄງລາງພື້ນຖານລະຫວ່າງຈີນລາວ.ມື້ນີ້,ຄະນະຜູ້ແທນຈີນນຳໂດຍສະຫາຍ ຈາງເຕີຈຽງ ປະທານຄະນະກຳມະການປະຈຳສະພາຜູ້ແທນທົ່ວປະເທດແຫ່ງ ສປ ຈີນມາເຂົ້າຮ່ວມພິທີວາງສີລາລຶກໂຄງການທາງລົດໄຟຈີນລາວດ້ວຍຕົນເອງ,ເປັນສັກຂີພິຍານຢືນຢັນໃນຂະນະທີ່ມີຄວາມໝາຍສຳຄັນປະຫວັດສາດແຫ່ງການເປັນຫຼັກໝາຍໃນປະຫວັດສາດສາຍພົວພັນມິດຕະພາບລະຫວ່າງຈີນລາວນີ້.ການນຳທັງສອງປະເທດໃຫ້ຄວາມເອົາໃຈໃສ່ສູງຕໍ່ໂຄງການທາງລົດໄຟຈີນລາວແມ່ນກຳລັງດັນອັນແຂງແຮງແຫ່ງການຊຸກຍູ້ການກໍ່ສ້າງທາງລົດໄຟຈີນລາວດ້ວຍຄວາມສະດວກດີ.ທາງລົດໄຟຈີນລາວເປັນສ່ວນປະກອບທີ່ສຳຄັນຂອງທາງລົດໄຟທົ່ວອາຊີ,ແມ່ນໂຄງລາງພື້ນຖານທີ່ສຳຄັນເຊື່ອມຈອດຈີນລາວທັງສອງປະເທດ. ບໍລິສັດລັດວິສາຫະກິດທາງລົດໄຟຈີນເປັນວິສາຫະກິດນຳໜ້າຕິດຕໍ່,ຈະເສີມຂະຫຍາຍທ່າແຮງດ້ານເຕັກນິກຄຸ້ມຄອງບໍລິຫານ ແລະ ຊັບພະຍາກອນຢ່າງເຕັມສ່ວນ,ຈັດຕັ້ງວິສາຫະກິດສຳຫລວດອອກແບບ,ກໍ່ສ້າງ,ເຄື່ອງອຸປະກອນ ແລະ ຜະລິດຕະກຳພາຍໃນປະເທດດຳເນີນການກໍ່ສ້າງ ແລະ ນຳໃຊ້ທາງລົດໄຟຈີນລາວເປັນຢ່າງດີ.ດັ່ງນັ້ນ,ພວກເຮົາມີຄວາມຮູ້ສຶກເປັນກຽດ ແລະ ມີໜ້າທີ່ໜັກໜ່ວງເປັນຢ່າງຍິ່ງ.

ໃນໄລຍະທີ່ຜ່ານມານີ້,ພວກເຮົາປະສານສົມທົບກັບສະຫາຍຝ່າຍລາວຢ່າງແໜ້ນແຟ້ນ,ເພີ່ມທະວີສ້າງຄວາມເຂົ້າໃຈກັນ,ພະຍາຍາມຊຸກດັນການສ້າງສາ ແລະ ການອອກແບບທາງລົດໄຟຈີນລາວຢ່າງຕັ້ງໜ້າ.ອີງຕາມສະພາບດິນຟ້າອາກາດ ແລະ ເງື່ອນໄຂທາງທໍລະນີສາດຂອງທາງລົດໄຟຈີນລາວ,ພວກເຮົາປັບປຸງແຜນເຕັກໂນໂລຊີໃຫ້ສົມບູນແບບຢ່າງບໍ່ຂາດສາຍ,ເຮັດໃຫ້ການຈັດວາງການກໍ່ສ້າງໃຫ້ດີເລີດ,ເຮັດໃຫ້ວຽກງານກະກຽມປະຕິບັດໂຄງການເປັນຢ່າງດີໃຫ້ປະກົດເປັນຈິງ,ໃນລະຍະທີ່ຜ່ານມານີ້,ໄດ້ຮັບການການປະສານສົມທົບ ແລະ ການສະໜັບສະໜູນຢ່າງແຂງແຮງຈາກພາກສ່ວນຕ່າງໆຂອງລາວ,ນະທີ່ນີ້,ຂ້າພະເຈົ້າຂໍສະແດງຄວາມຂອບອົກຂອບໃຈຢ່າງສຸດໃຈ.

ໃນຕອນທ້າຍພິທີ,ທ່ານ ຈູມມາລີ ໄຊຍະສອນ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ປະທານປະເທດແຫ່ງ ສປປ ລາວ,ທ່ານ ທອງສິງ ທຳມະວົງ ນາຍົກລັດຖະມົນຕີລາວ,ທ່ານນາງ ປານີ ຢາທໍ່ຕູ້ ປະທານສະພາແຫ່ງຊາດລາວ,ສະຫາຍ ຈາງເຕີຈຽງ ປະທານຄະນະກຳມະການປະຈຳສະພາຜູ້ແທນທົ່ວປະເທດແຫ່ງ ສປ ຈີນ,ທ່ານ ກວນຮວາປິງ ເອກອັກຄະລັດຖະທູດຜູ້ມີອຳນາດເຕັມ ສປ ຈີນ ປະຈຳລາວ,ທ່ານ ເສີນກວາງຈູ ຜູ້ອຳນວຍການໃຫຍ່ລັດວິສາຫະກິດທາງລົດໄຟຈີນ ແລະ ການນຳຜູ້ອື່ນໆໃນກະຊວງທະບວງກົມທີ່ກ່ຽວຂ້ອງ,ຂຶ້ນເວທີວາງສີລາລຶກໂຄງການທາງລົດໄຟລາວ-ຈີນ,ທ່ານ ຈູມມາລີ ໄຊຍະສອນ ປະທານປະເທດແຫ່ງ ສປປ ລາວ,ຕີຄ້ອງ 9 ບາດເພື່ອສະແດງຄວາມຊົມເຊີຍແກ່ໂຄງການທາງລົດໄຟລາວ-ຈີນ.

ພິທີວາງສີລາລຶກໂຄງການທາງລົດໄຟລາວ-ຈີນສິ້ນສຸດລົງຢ່າງຈົບງາມໃນທ່າມກາງສຽງຕົບມືຊົມເຊີຍ ແລະ ສຽງຮ້ອງໂຮໄຊໂຍ.



新华社 图

图 / 新华社

# ຈາກດາວທຽມຮອດທາງລົດໄຟ ການຮ່ວມມື ເສດຖະກິດຈີນ-ລາວໃນໄລຍະໃໝ່ຂຶ້ນສູ່ລະດັບສູງ

## 从卫星到铁路 新时期中国老挝经济合作迈向高端

2015 年 11 月 21 日，老挝有史以来的第一颗卫星“老挝一号”在中国西昌卫星发射中心成功发射升空；11 月 13 日，酝酿已久的中老铁路项目正式签订，两国政府间合作协定进入实施阶段……随着中国老挝两国近年来经贸合作的飞速发展，双方经济合作已从早期单纯的货物贸易逐步迈向高端。

ວັນທີ 21 ພະຈິກ 2015,laosat-1 ທີ່ເປັນດາວທຽມດວງທຳອິດໃນປະຫວັດສາດຂອງລາວໄດ້ຂຶ້ນສູ່ວົງໂຄຈອນຢ່າງສຳເລັດຜົນຢູ່ສູນສົ່ງດາວທຽມຊີ່ຊ່າງຂອງຈີນ; ວັນທີ 13 ພະຈິກ ປີ 2015, ໂຄງການທາງລົດໄຟຈີນລາວທີ່ກະກຽມມາເປັນເວລາດົນແລ້ວໄດ້ເຊັນສັນຍາຢ່າງເປັນທາງການ,ສັນຍາຮ່ວມມືລະຫວ່າງລັດຖະບານສອງປະເທດໄດ້ເຂົ້າສູ່ໄລຍະປະຕິບັດຕົວຈິງ.....ຄຽງຄູ່ກັບການພັດທະນາຢ່າງວ່ອງໄວຂອງການຮ່ວມມືດ້ານເສດຖະກິດການຄ້າລະຫວ່າງສອງປະເທດໃນຂຸມປີມານີ້,ການຮ່ວມມືດ້ານເສດຖະກິດລະຫວ່າງສອງຝ່າຍໄດ້ຫັນຈາກການຄ້າສິນຄ້າແຕ່ຢ່າງດຽວໃນເມື່ອກ່ອນນັ້ນກ້າວຂຶ້ນສູ່ລະດັບສູງ.



ພາບລວມບ້ານຍົກຍ້າຍປະຊາຊົນໃໝ່ຂອງບ້ານຜາກິ່ງເມືອງງອຍແຂວງຫລວງພະບາງເຊິ່ງແມ່ນບໍລິສັດໄຟຟ້າລ່ອງນ້ຳອູລາວຂອງກຸ່ມບໍລິສັດກໍ່ສ້າງເຂື່ອນໄຟຟ້າຈີນເປັນຜູ້ກໍ່ສ້າງ
由中国电建集团老挝南欧江流域发电有限公司建设的老挝琅勃拉邦省孟威县帕景村的新移民村全景

ໃນເວລາໃຫ້ສຳພາດຕໍ່ນັກຂ່າວສຳນັກຂ່າວສານຊິນຮວາ,ທ່ານ ຢາວປິນ,ຮອງປະທານປະຈຳສະພາການຄ້າຊາວຈີນຕ່າງດ້າວປະຈຳລາວ,ປະທານຄະນະບໍລິຫານກຸ່ມບໍລິສັດກິດຕະພົງລາວທີ່ໄປທັດສະນະສຶກສາການສົ່ງດາວທຽມ laosat-1ຢູ່ກັບທີ່ຕາມການເຊື້ອເຊີນນັ້ນໄດ້ກ່າວວ່າ,“ນີ້ສະແດງໃຫ້ເຫັນວ່າສາຍພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານ ແລະ ການເປັນກຸ່ມຮ່ວມຊະຕາກຳລະຫວ່າງສອງປະເທດຈີນລາວໄດ້ຮັບການປັບປຸງ ແລະ ຂະຫຍາຍຕົວຕື່ມອີກ.”ໃນຖານະເປັນຜູ້ຊຸກຍູ້ໂຄງການດາວທຽມດັ່ງກ່າວທັງເປັນໜຶ່ງໃນຜູ້ຮ່ວມມືຝ່າຍລາວ, ທ່ານ ຢາວປິນ ເປັນສັກຂີພິຍານໃຫ້ແກ່ທົ່ວຂະບວນການຂອງການດຳເນີນໂຄງການດັ່ງກ່າວເປັນເວລາ 7 ປີ, ເມື່ອເຫັນດາວທຽມຂຶ້ນສູ່ວົງໂຄຈອນຢ່າງສຳເລັດຜົນ, ທ່ານມີຄວາມຮູ້ສຶກຢ່າງເລິກເຊິ່ງ.



ປະເທດຈີນໄດ້ຍິງສົ່ງດາວທຽມສື່ສານ"ໝາຍເລກ 1 ຂອງລາວ"ຢ່າງສຳເລັດຜົນ
中国成功发射“老挝一号”通信卫星

ໃນຖານະເປັນວິສາຫະກິດທີ່ມີສາຍສຳພັນທີ່ດີ ແລະ ມີຊື່ສຽງຢູ່ປະເທດລາວ,ກຸ່ມບໍລິສັດກິດຕະພົງບໍ່ພຽງແຕ່ມີສ່ວນຮ່ວມໃນໂຄງການດາວທຽມເທົ່ານັ້ນ,ຍັງໄດ້ມີສ່ວນຮ່ວມເຂົ້າໃນວຽກງານຊຸກຍູ້ການກະກຽມໂຄງການດັ່ງກ່າວໃນໄລຍະເບື້ອງຕົ້ນ,ໄດ້ອະທິບາຍ ແລະ ແນະນຳຕໍ່ລັດຖະບານລາວກໍ່ຄືຊັ້ນຄົນ ແລະ ວົງການຕ່າງໆໃນສັງຄົມລາວກ່ຽວກັບອະນາຄົດແຫ່ງການພັດທະນາຂອງທາງລົດໄຟຈີນລາວກໍ່ຄືປະສິດທິຜົນດ້ານເສດຖະກິດ ແລະ ສັງຄົມທີ່ຈະເກີດມາຕາມຫຼັງ.

ວັນທີ 31 ສິງຫາ ປີ 2015,ລັດຖະບານສອງປະເທດຈີນລາວໄດ້ລົງນາມໃນ“ແຜນລວມຮ່ວມກັນສ້າງເຂດຮ່ວມມືເສດຖະກິດບໍ່ຫານຈີນ-ບໍ່ເຕັນລາວ”ຢ່າງເປັນທາງການ,ນີ້ເປັນເຂດຮ່ວມມືເສດຖະກິດຂ້າມຊາດແຫ່ງທີ 2 ທີ່ຈີນຮ່ວມກັບປະເທດອ້ອມຂ້າງສ້າງຂຶ້ນເຊິ່ງຮອງຈາກຈີນກັບກາຊັກສະຖານຮ່ວມກັນສ້າງສູນຮ່ວມມືຊາຍແດນສາກົນໂຮກົສຈີນ-ກາຊັກສະຖານ,ເປັນມາດຕະການອັນສຳຄັນທີ່ສອງປະເທດຈີນລາວປະດິດສ້າງຮູບການຮ່ວມ



ຫໍປະຊຸມແຫ່ງຊາດລາວເຊິ່ງແມ່ນບໍລິສັດຫຸ້ນສ່ວນກໍ່ສ້າງຈີນຈຳກັດເປັນຜູ້ຮັບເໝົາກໍ່ສ້າງ
由中国建筑股份有限公司承建的老挝国家会议中心

ມືອັນໃໝ່ ແລະ ເລັ່ງລັດບາດກ້າວເປີດປະຕູສູ່ພາຍນອກ. ປະຈຸບັນ,ຢູ່ຝາກບໍ່ເຕັນຂອງລາວ,ເຂດການຄ້າ ແລະ ການທະນາຄານ,ເຂດວັດທະນະທຳ ແລະ ການທ່ອງທ່ຽວ,ເຂດປຸງແຕ່ງສິນຄ້າ ແລະ ການຈໍລະຈອນສິນຄ້າໄດ້ສ້າງສຳເລັດໃນຂັ້ນພື້ນຖານແລ້ວ,ຈຳນວນໜຶ່ງໄດ້ເລີ່ມນຳໃຊ້ຕົວຈິງແລ້ວ,ເຊິ່ງໄດ້ສ້າງພື້ນຖານອັນໜັກແໜ້ນໃຫ້ແກ່ການພັດທະນາຂອງເຂດເສດຖະກິດຂ້າມຊາດ,ກໍ່ໄດ້ອຳນວຍຄວາມສະດວກຫຼາຍກວ່າເກົ່າໃຫ້ແກ່ການຜ່ານດ່ານເຂົ້າອອກເມືອງຂອງບຸກຄະລາກອນ ແລະ ສິນຄ້າທີ່ນັບມື້ນັບຫຼາຍຂຶ້ນ.

ບໍ່ພຽງແຕ່ແມ່ນເຂດເສດຖະກິດຂ້າມຊາດແຫ່ງນີ້ເທົ່ານັ້ນ,ຢູ່ເຂດພັດທະນາແບບກວມລວມໄຊເສດຖາທີ່ຫ່າງຈາກເທສະບານນະຄອນຫຼວງວຽງຈັນ 21 ກິໂລແມັດເຊິ່ງເປັນໂຄງການຮ່ວມມືກໍ່ສ້າງຂອງສອງປະເທດຈີນລາວນັ້ນ,ປະຈຸບັນມີວິສາຫະກິດ 19 ແຫ່ງໄດ້ເຊັນສັນຍາ,ໃນນັ້ນ,ໂຄງການກັ່ນນ້ຳມັນເຊື້ອໄຟລາວຂອງບໍລິສັດເຄມີນ້ຳມັນເຊື້ອໄຟຕົ່ງຢຽນ,ເຂດຈໍລະຈອນສິນຄ້າ DSG ຂອງໄທ,ບໍລິສັດໃບຢາສູບລາວ ແລະ ໂຄງການອື່ນໆລ້ວນແຕ່ໄດ້ລົງມືກໍ່ສ້າງ.ເຂດພັດທະນາດັ່ງກ່າວໄດ້ກາຍເປັນໂຄງການໜຶ່ງທີ່ສຳຄັນໃນການກໍ່ສ້າງ "ໜຶ່ງແລວທາງ ໜຶ່ງເສັ້ນທາງ",ເປັນອົງເຂດອັນໃໝ່ທີ່ກຸ່ມບໍລິສັດວິສະວະກຳການກໍ່ສ້າງຢຸນນານບັນລຸການພັດທະນາແບບຍືນຍົງ ແລະ ທຸລະກິດຄົບວົງຈອນໂດຍຮ່ວມມືເສດຖະກິດກັບຝ່າຍລາວຫຼັງຈາກເຂົ້າສູ່ຕະຫຼາດລາວເປັນເວລາເກືອບ 20 ປີມານີ້.

ໃນເວລາໃຫ້ສຳພາດຕໍ່ນັກຂ່າວຊິນຮວາ,ທ່ານ ວາງປຸນຊ່ວນ,ຮອງຜູ້ອຳນວຍການໃຫຍ່ພາກໂຄງການສາກົນກຸ່ມບໍລິສັດວິສະວະກຳການກໍ່ສ້າງຢຸນນານ,ທັງເປັນຜູ້ອຳນວຍການໃຫຍ່ເຂດປະເທດລາວກ່າວວ່າ, "ໃນຖານະເປັນວິສາຫະກິດຈີນທີ່ເຂົ້າສູ່ປະເທດລາວກ່ອນໝູ່,ກຸ່ມບໍລິສັດວິສະວະກຳການກໍ່ສ້າງຢຸນນານໄດ້ເປັນສັກຂີພິຍານໃຫ້ແກ່ການເຕີບໂຕຂອງວິສາຫະກິດຈີນທີ່ມາພັດທະນາທຸລະກິດຢູ່ລາວໃນ 20 ປີຜ່ານມາ.ສອງປະເທດຈີນລາວມີຄວາມຮັບຮູ້ດ້ານການເມືອງຕໍ່ກັນໃນລະດັບສູງ,ການຮ່ວມມືດ້ານເສດຖະກິດມີພື້ນຖານທີ່ໜັກແໜ້ນ,ຊາວຈີນມີຊື່ສຽງທີ່ດີ ແລະ ໄດ້ຮັບໄມຕີຈິດມິດຕະພາບທີ່ດີຈາກສັງຄົມລາວ.ຍ້ອນວ່າສັງຄົມລາວມີລະດັບການພັດທະນາອ່າວຫຼ້າຫຼັງ,ວິສາຫະກິດ ແລະ ນັກລົງທຶນຈີນສາມາດເສີມຂະຫຍາຍທ່າແຮງຂອງຕົນ,ຍາດໄດ້ທ່າໄດ້ປຽບໃນການແຂ່ງຂັນໃນຕະຫຼາດ.ພາຍໃຕ້ແຮງຊຸກຍູ້ຂອງຂໍ້ລິເລີ່ມ ໜຶ່ງແລວທາງ ໜຶ່ງເສັ້ນທາງ,ພ້ອມດ້ວຍປະຊາຊົນສອງຊາດປາຖະໜາການຮ່ວມມືແບບຕ່າງຝ່າຍຕ່າງມີຜົນປະໂຫຍດ,ການຮ່ວມມືດ້ານເສດຖະກິດລະຫວ່າງສອງປະເທດຈີນລາວຈະໄດ້ຮັບການຂຸດຄົ້ນໃຫ້ເລິກເຊິ່ງກວ່າເກົ່າ ແລະ ກວ້າງຂວາງກວ່າເກົ່າ."



ໜອງຝາຍນຳຮ່ອງຂອງໂຄງການລະບາຍນ້ຳໄຊເກີດ-ເຊສະລະລອງແຂວງສະຫວັນນະເຂດເຊິ່ງແມ່ນກຸ່ມບໍລິສັດຫຸ້ນສ່ວນເກີໂຈວບາຈີນເປັນຜູ້ຮັບເໝົາກໍ່ສ້າງ
由中国葛洲坝集团股份有限公司承建的老挝沙湾拿吉省色萨拉龙—赛格灌溉项目引水干渠

ນອກຈາກວິສາຫະກິດແຂວງຢຸນນານທີ່ຢູ່ໃກ້ກັບປະເທດລາວຄືກຸ່ມບໍລິສັດວິສະວະກຳການກໍ່ສ້າງຢຸນນານແລ້ວ,ລັດວິສາຫະກິດຂະໜາດໃຫຍ່ຂອງຈີນຫຼາຍແຫ່ງກໍ່ໄດ້ຮັບຜົນສຳເລັດຢ່າງຫຼວງຫຼາຍໃນຊຸມປີມານີ້.ໃນເດືອນພະຈິກ ປີ 2015 ພຽງເດືອນດຽວນັ້ນ,ນອກຈາກໂຄງການດາວທຽມ ແລະ ໂຄງການທາງລົດໄຟແລ້ວ,ຍັງມີ 5 ໂຄງການຂະໜາດໃຫຍ່ໄດ້ປະກາດສິ້ນສຸດການກໍ່ສ້າງ,ເລີ່ມລົງມືກໍ່ສ້າງຫຼືສຳເລັດຂັ້ນຕອນອັນສຳຄັນໃນໂຄງການ.

ທ່ານ ຈ້າວເວີນອີ,ທີ່ປຶກສາເສດຖະກິດການຄ້າຂອງສະຖານທູດຈີນປະຈຳລາວບອກນັກຂ່າວວ່າ,ຄຽງຄູ່ກັບການພັດທະນາຢ່າງວ່ອງໄວຂອງເສດຖະກິດຈີນ,ການຮ່ວມມືດ້ານເສດຖະກິດລະຫວ່າງສອງປະເທດຈີນລາວກໍ່ມີເນື້ອໃນເພີ່ມຂຶ້ນເລື້ອຍໆ,ກວມອົງເຂດນັບມື້ນັບກວ້າງຂວາງກວ່າເກົ່າ, ໂດຍສະເພາະແມ່ນໄດ້ຂະຫຍາຍໄປສູ່ອົງເຂດໄຮເທັກ,ເຊື່ອໝັ້ນວ່າຄຽງຄູ່ກັບການສົ່ງດາວທຽມຂອງລາວ ແລະ ການລົງມືກໍ່ສ້າງທາງລົດໄຟຈີນລາວ,ການຮ່ວມມືດ້ານເສດຖະກິດການຄ້າລະຫວ່າງສອງປະເທດຈະນັບມື້ນັບດີຂຶ້ນ.



ລາດຊະວົງພລາຊາລາວທີ່ກຳລັງກໍ່ສ້າງຢູ່ເຊິ່ງແມ່ນບໍລິສັດພັດທະນາເຄຫາສະຖານທີ່ດິນຟາງເຕີຈົງຊິງຈີນຈຳກັດຮ່ວມມືກັບກະຊວງປ້ອງກັນປະເທດລາວເປັນຜູ້ກໍ່ສ້າງ
由中国重庆方德房地产开发有限公司与老挝国防部合作正在建设的老挝拉萨翁广场建筑场

# ບໍລິສັດ ກວາງໂຈວກົງເຊີນ ຂົນສົ່ງຈຳກັດ

## ກວາງໂຈວຈີນ ວຽງຈັນລາວ ບໍລິການຂົນສົ່ງດ່ວນ 4 ມື້

-ບໍລິສັດ ກວາງໂຈວ ກົງເຊີນຂົນສົ່ງ ຈຳກັດ ເລີ່ມສະໜອງບໍລິການຂົນສົ່ງ ແລະ ຊຳລະດ່ານ ລະຫວ່າງລາວກັບຈີນແຕ່ປີ 2008 ເປັນຕົ້ນມາ.ບໍລິສັດເຮົາໄດ້ສ້າງສຳນັກງານຂຶ້ນທີ່ ແຂວງກວາງໂຈວ, ນະຄອນຫລວງວຽງຈັນ, ເມືອງຍິວູ, ເມືອງນານນີງ, ເມືອງພິງຊຽງ, ເມືອງຄຸນໝິງ, ເມືອງມໍ່ຫານ ແລະ ມີຕາໜ່າງຄອບຄຸມຢ່າງຮອບດ້ານ. ບໍລິສັດເຮົາມີທີມງານບໍລິການທີ່ປະກອບດ້ວຍຄົນຈີນ, ຄົນລາວ, ຄົນ ໄທ ແລະ ຄົນຫວຽດນາມປະມານ 60 ກ່າວຄົນ. ບໍລິສັດເຮົາໄດ້ເປີດເສັ້ນທາງແຕ່ຈີນ-ລາວ ໂດຍຜ່ານຫວຽດນາມໃນເມື່ອປີ 2011, ເຮັດໃຫ້ເວລາ ຂົນສົ່ງແຕ່ 15 ມື້ຢູ່ນເປັນ 4 ມື້ ແລະ ສຳຄັນ ແມ່ນໄດ້ສົ່ງເສີມການຄ້າລະຫ່ວາງປະເທດລາວກັບປະເທດຈີນອີກດ້ວຍ.

-ບໍລິສັດເຮົາໄດ້ສະໜອງບໍລິການ ທາງດ້ານວິສະວະກຳໃຫ້ແກ່ເຂື່ອນໄຟຟ້າ, ສະຖານທີ່ກໍ່ສ້າງ, ໄຟຟ້າ,ການຄຸດຄົ້ນແຮ່ທາດແລະອື່ນໆ.ທອດຖອນບົດຮຽນດ້ານຈໍລະຈອນຢ່າງສົມບູນ. ໂດຍສະເພາະແມ່ນບົດຮຽນມຈາກໂຄງການ ຂົນສົ່ງ ກໍ່ສ້າງຫໍປະຊຸມ ASEM ລາວ, ຍ້ອນບໍລິການຂົນສົ່ງທີ່ປອດໄພ ແລະ ໃຊ້ເວລາອັນສັ້ນຊຶ່ງໄດ້ຮັບການຕີລາຄາສູງຈາກຂະແໜງການທີ່ກ່ຽວຂ້ອງ.

ບໍລິສັດເຮົາສະໜອງບໍລິການດັ່ງລຸ່ມນີ້:

-ກວາງໂຈວຈີນຮອດວຽງຈັນລາວຂົນສົ່ງດ່ວນ 4 ມື້

-ບໍລິການຂົນສົ່ງສິນທິບທາງທະເລ ແລະ ທາງບົກຈາກກວາງໂຈວຈີນຫາວຽງຈັນລາວໂດຍຜ່ານບາງກອກ

-ບໍລິການຂົນສົ່ງ ຈາກປະເທດລາວໄປຫາປະເທດຈີນອື່ນໆ

ໂທລະສັບຈີນ: 86 20 36517965

ໂທລະສັບລາວ: 020 98000013

ພາສາລາວ: 020 98209598

EMAIL: ocean@transgz.com

ເວບໄຊ:www.transgz.com



广州共成运输代理有限公司

## 中国广州—老挝万象 4天快运服务

——广州共成运输代理有限公司从2008年开始提供中国和老挝之间的运输与清关服务。我司在广州、万象、义乌、南宁、凭祥、昆明、磨憨等都设有办事处，网络全面。 公司有一支60多名包括中国、老挝、泰国、越南籍同事组成的服务团队。

——我司在2011年初开辟的中国经越南到老挝线路，把原本需要15天物流的时间缩短到了4天，大大促进了中老贸易。

——我司多次为水电站、建筑工地、电力、矿山等提供工程物流服务，积累了丰富的项目物流经验。特别是老挝欧亚峰会场馆的建设项目运输，我们安全快速的运输服务得到了相关部门高度赞扬。

我司提供的服务项目：

——中国广州到老挝万象4天汽车快运

——中国广州经曼谷到万象的海陆联运服务

——老挝出口到中国等国家的物流服务

中国热线：86 20 36517965

老挝热线：020-98000013

老挝文： 020-28140016

EMAIL:ocean@transgz.com

网址：www.transgz.com




ລາວກາເຟ™

老咖啡

LAO COFFEE



ແກ່ນກາເຟດີທີ່ສຸດ ຜະລິດຈາກສວນກາເຟ ແຂວງຜົ້ງສາລີ ສປປ ລາວ

## 咖啡豆源自老挝丰沙里精品咖啡庄园



## 咖啡改变生活

### ——昌胜达“替代种植“扶贫成效显著

在老挝北部这片土地上，禁毒、扶贫是一种大爱；对于昌胜达而言，这更是一份伟大的事业。如今，这份凝聚大爱的事业已经在悄然改变着这里。

昌胜达18万亩咖啡种植项目，如今已完成了5万余亩的种植面积，涉及130个村庄，带动老挝人口超过30000人，有超过1500个农户从中得到收益。昌胜达在老挝境内修路超过100余公里，而公司雇佣的员工中，有70%是老挝人。

**云南昌胜达投资有限公司**

图 / 新华社

# "ໜຶ່ງແລວທາງ ໜຶ່ງເສັ້ນທາງ" ເກີດປະສິດທິຜົນຂັ້ນເບື້ອງຕົ້ນ

## "一带一路"效应初显

中国国家主席习近平近日在亚太经合组织工商领导人峰会的主旨演讲中提到：两年来，"一带一路"得到 60 多个国家和国际组织积极响应和参与，势头已起，效应初显。

两年内，中国与相关国家达成了一系列的共识和合作协议，实施了一批重点项目，形成了一套支撑保障体系。

ໜ່າງບໍ່ດົນມານີ້,ທ່ານ ສີຈິ້ນຜິງ,ປະທານປະເທດຈີນ ໄດ້ເຂົ້າຮ່ວມກອງປະຊຸມສຸດຍອດອຸດສາຫະກຳການຄ້າ ຂອງອົງການຮ່ວມມືເສດຖະກິດອາຊີປາຊີຟິກ ແລະ ໄດ້ ກ່າວປາຖະກະຖາວ່າ,ໃນ 2 ປີຜ່ານມາ,"ໜຶ່ງແລວທາງ ໜຶ່ງເສັ້ນທາງ"ໄດ້ຮັບສຽງຕອບຮັບ ແລະ ສ່ວນຮ່ວມຈາກ 60 ກວ່າປະເທດ ແລະ ອົງການຈັດຕັ້ງສາກົນ,ມີທ່າອ່ຽງ ຂະຫຍາຍຕົວທີ່ດີ,ແລະ ບັງເກີດຜົນໃນຂັ້ນເບື້ອງຕົ້ນ.

ພາຍໃນເວລາ 2 ປີ,ຈີນກັບປະເທດທີ່ກ່ຽວຂ້ອງໄດ້ ບັນລຸຄວາມເຫັນເປັນເອກະພາບກັນ ແລະ ເຊັນສັນຍາ ຮ່ວມມືຕ່າງໆ,ໄດ້ຈັດຕັ້ງປະຕິບັດໂຄງການສຳຄັນຈຳ ນວນໜຶ່ງ,ແລະ ມີລະບົບຄໍ້າປະກັນກຳເນີດເກີດຂຶ້ນ.

ການນຳຂັ້ນສູງຊຸກຍູ້ໃຫ້ຍຸດທະສາດຂອງບັນດາປະ ເທດເຊື່ອມໂຍງເຂົ້າກັນ

ພໍແຕ່ການສະເໜີຂໍ້ລິເລີ່ມ"ໜຶ່ງແລວທາງ ໜຶ່ງເສັ້ນ ທາງ",ຫຼາຍປະເທດກໍ່ໄດ້ສະແດງຄວາມສົນໃຈ ແລະ ຄວາມຄອງຄອຍເປັນຢ່າງສູງ. ໂດຍສະເພາະໃນເດືອນ ມີນາປີ 2015,ລັດຖະບານຈີນໄດ້ປະກາດ"ວິໄສທັດ ແລະ ແຜນການດຳເນີນງານກ່ຽວກັບຊຸກຍູ້ຮ່ວມກັນສ້າງສາ ແລວທາງເສດຖະກິດເສັ້ນທາງສາຍໄໝ ແລະ ເສັ້ນທາງ ສາຍໄໝທາງທະເລສະຕະວັດທີ 21",ໄດ້ກຳນົດຢ່າງຈະ ແຈ້ງກ່ຽວກັບຫຼັກການວ່າດ້ວຍການສ້າງສາຮ່ວມກັນ, ໂຄງຮ່າງແນວຄິດ,ຈຸດສຸມແຫ່ງການຮ່ວມມື,ແລະ ກົນ ໄກການຮ່ວມມື. ໃນການຊຸກຍູ້ຕົວຈິງນັ້ນ,ລັດຖະບານຈີນ ໄດ້ໃຊ້ວິທີທີ່ເຮັດໃຫ້ແຜນຍຸດທະສາດ"ໜຶ່ງແລວທາງ ໜຶ່ງ ເສັ້ນທາງ"ເຊື່ອມໂຍງເຂົ້າກັບແຜນຍຸດທະສາດພັດທະນາ ຂອງບັນດາປະເທດຢູ່ລຽບຕາມແລວທາງ,ເຮັດໃຫ້"ໜຶ່ງ ແລວທາງ ໜຶ່ງເສັ້ນທາງ"ໄດ້ຮັບຄວາມຮັບຮູ້ ແລະ ສ່ວນ ຮ່ວມນັບມື້ນັບຫຼາຍຂຶ້ນຈາກບັນດາປະເທດ.

ປະຈຸບັນ,ຍຸດທະສາດ"ໜຶ່ງແລວທາງ ໜຶ່ງເສັ້ນທາງ" ໄດ້ມີການເຊື່ອມຕໍ່ກັບແຜນຍຸດທະສາດຂອງຫຼາຍປະເທດ ແລະ ເຂດແຄວ້ນ,ເຊັ່ນ:ສະຫະພັນເສດຖະກິດຣັດເຊຍ-ເອີລົບອາຊີ,ຍຸດທະສາດ"ເສັ້ນທາງທົ່ງຫຍ້າ"ຂອງມົງໂກ ເລຍ,"ເສັ້ນທາງສະຫວ່າງ"ຂອງກາຊັກສະຖານ,"ແຜນ ການລົງທຶນຢັງຄີ"ຂອງເອີລົບ,"ສອງແລວທາງ ໜຶ່ງວົງ ຮອບ"ຂອງຫວຽດນາມ,ແລະ ອື່ນໆ,ເຊິ່ງໄດ້ຕອບສະໜອງ ກັບຄວາມຮຽກຮ້ອງຕ້ອງການດ້ານການພັດທະນາຂອງ ປະຊາຄົມໂລກ.



ກອງປະຊຸມສຳມະນາການລົງທຶນຈີນ-ເອີລົບ ແລະ ເຊື່ອມຕໍ່ກັນເຊື່ອມຈອດກັນລວມຈຸດ "ໜຶ່ງ ແລວທາງ ໜຶ່ງເສັ້ນທາງ"
中欧投资与互联互通研讨会聚焦"一带一路"

ນອກນີ້,ຈີນກັບຣັດເຊຍ,ຮົງກາລີ,ມົງໂກລີ,ຕວກກີ, ສິງກະໂປ,ສ.ເກົາຫຼີ ແລະ ປະເທດອື່ນໆໄດ້ເຊັນສັນຍາ ຮ່ວມມືຕ່າງໆ,ເພື່ອຊຸກຍູ້ການຮ່ວມມືທີ່ສຳຄັນໃນຂົງເຂດ ຕ່າງໆພາຍໃຕ້ຂອບ"ໜຶ່ງແລວທາງ ໜຶ່ງເສັ້ນທາງ".

ຈັດຕັ້ງປະຕິບັດໂຄງການສຳຄັນຕ່າງໆຢ່າງແທ້ຈິງ

ຂໍ້ມູນຈາກກະຊວງການຄ້າຈີນສະແດງໃຫ້ເຫັນວ່າ, ແຕ່ເດືອນມັງກອນຫາເດືອນກັນຍາປີ 2015,ມູນຄ່າການ ຄ້າສອງຝ່າຍລະຫວ່າງຈີນກັບປະເທດລຽບຕາມ "ໜຶ່ງ ແລວທາງ ໜຶ່ງເສັ້ນທາງ"ໄດ້ມີເຖິງ 742,8 ຕື້ໂດລາ,ກວມ ເອົາ 25,6% ຂອງຍອດມູນຄ້າການຄ້າຂາເຂົ້າຂາອອກ ຂອງຈີນໃນໄລຍະດຽວກັນ. ໃນດ້ານການດຶງດູດທຶນຕ່າງ



ການກໍ່ສ້າງ "ຊ່ອງທາງນານນິນ-ສິງກາໂປ" ໄດ້ສ້າງບົດໃໝ່ແຫ່ງການພັດທະນາເຂດການຄ້າເສລີຈີນ-ອາຊຽນ
"南新通道"建设勾勒中国－东盟自贸区发展新篇章

ປະເທດ,ປະເທດລຽບຕາມ"ໜຶ່ງແລວທາງ ໜຶ່ງເສັ້ນທາງ" ໄດ້ລົງທຶນສ້າງວິສາຫະກິດ 1604 ແຫ່ງ,ມູນຄ່າລົງທຶນຂອງຕ່າງປະເທດມີເຖິງ 6,12 ຕື້ໂດລາ,ເພີ່ມຂຶ້ນ 18,4% ເມື່ອທຽບກັບໄລຍະດຽວກັນຂອງປີ 2014.ໃນດ້ານການລົງທຶນຢູ່ຕ່າງປະເທດ,ວິສາຫະກິດຈີນໄດ້ລົງທຶນໂດຍກົງຢູ່ 48 ປະເທດລຽບຕາມ"ໜຶ່ງແລວທາງ ໜຶ່ງເສັ້ນທາງ", ມູນຄ່າລົງທຶນທັງໝົດ 12 ຕື້ 30 ລ້ານໂດລາ,ເພີ່ມຂຶ້ນ 66,2% ເມື່ອທຽບກັບໄລຍະດຽວກັນຂອງປີ 2014.

ຢູ່ເບື້ອງຫຼັງຕົວເລກດັ່ງກ່າວນັ້ນແມ່ນການຈັດຕັ້ງປະຕິບັດໂຄງການຕ່າງໆຢ່າງແທ້ຈິງ,ເຊິ່ງໄດ້ປະຕິບັດໂຄງການຮ່ວມມືສຳຄັນຕ່າງໆທີ່ມີເງື່ອນໄຂພຽບພ້ອມ, ເຊັ່ນ,ພື້ນຖານໂຄງລ່າງທີ່ເຊື່ອມຕໍ່ ແລະ ເຊື່ອມໂຍງກັນ, ການລົງທຶນໃສ່ຜະລິດຕະກຳ,ການບຸກເບີກຊັບພະຍາກອນ, ການຮ່ວມມືດ້ານເສດຖະກິດການຄ້າ,ການຮ່ວມມືດ້ານການເງິນ,ການແລກປ່ຽນວັດທະນະທຳ,ການອະນຸລັກສິ່ງແວດລ້ອມ,ການຮ່ວມມືເທິງທະເລ ແລະ ອື່ນໆ.

ປະຈຸບັນ, ໂຄງການທາງລົດໄຟຄວາມໄວສູງຕອນທຳອິດລະຫວ່າງມົສກູກັບປັກກິ່ງໄດ້ເລີ່ມລົງມືປະຕິບັດແລ້ວ,ທາງລົດໄຟຄວາມໄວສູງທີ່ມີໄລຍະຍາວ 770 ກິໂລແມັດນັ້ນແມ່ນໄດ້ນຳໃຊ້ເຕັກນິກຂອງຈີນ,ໃນໄລຍະເບື້ອງຕົ້ນຫຼັງຈາກທາງລົດໄຟຄວາມໄວສູງສາຍນີ້ເປີດບໍລິການນັ້ນ,ຄາດວ່າຈຳນວນຜູ້ໂດຍສານຈະມີເຖິງ 10 ລ້ານ 5 ແສນເທື່ອຄົນຕໍ່ປີ.

ລະບົບຄ້ຳປະກັນກຳເນີດເກີດຂຶ້ນ

ນັບແຕ່ການສະເໜີ"ໜຶ່ງແລວທາງ ໜຶ່ງເສັ້ນທາງ" ເປັນຕົ້ນມາ,ວຽກງານຄ້ຳປະກັນທີ່ກ່ຽວຂ້ອງກໍ່ໄດ້ດຳເນີນໄປຢ່າງເປັນລະບຽບຮຽບຮ້ອຍ.

ພາກສ່ວນຕ່າງໆຂອງລັດຖະບານຈີນໄດ້ປະກາດໃຊ້ ແລະ ຈັດຕັ້ງປະຕິບັດຄຳເຫັນກ່ຽວກັບແຜນຍຸດທະສາດ"ໜຶ່ງແລວທາງ ໜຶ່ງເສັ້ນທາງ",ວຽກງານຮຽບຮຽງແຜນການລາຍສະເພາະໃນຂົງເຂດຕ່າງໆ,ເຊັ່ນ, ພະລັງງານ,ກະສິກຳ,ການອະນຸລັກສິ່ງແວດລ້ອມ,ການ


ການກໍ່ສ້າງ "ແລວທາງເສດຖະກິດຈີນ-ປາກິສະຖານ "ຍູ້ແຮງການພັດທະນາໄຟຟ້າຂອງປາກິສະຖານ
"中巴经济走廊" 建设助力巴基斯坦电力发展





ພະນັກງານຫ້ອຍປ້າຍສັນຍະລັກໃຫ້ຂະບວນຕູ້ລົດໄຟຂົນສົ່ງສິນຄ້າສາກົນ "ອີອູ-ຊິນຈຽງ-ເອີຣົບ "ທີ່ເປີດຖ້ຽວປະຖົມມະເລີກ
工作人员为首班开行的"义新欧"国际货运列车挂上标牌

ສຶກສາ,ການຮ່ວມມືດ້ານວັດທະນະທຳ ແລະ ອື່ນໆໄດ້ເລີ່ມຕົ້ນປະຕິບັດຕົວຈິງ. ໂດຍສະເພາະໃນຂໍ້ສະເໜີຂອງແຜນການ 5 ປີຄັ້ງທີ 13 ຂອງຈີນໄດ້ສະເໜີຢ່າງຈະແຈ້ງວ່າ, ຈີນຈະຊຸກຍູ້ການກໍ່ສ້າງ"ໜຶ່ງແລວທາງ ໜຶ່ງເສັ້ນທາງ". ສຳລັບຢູ່ຂັ້ນທ້ອງຖິ່ນ,ແຮ່ງໄດ້ກຳແໜ້ນໂອກາດດັ່ງກ່າວເພື່ອເຊື່ອມຕໍ່ ແລະ ເຊື່ອມໂຍງເຂົ້າ,ກຳນົດແຜນດຳເນີນງານທີ່ກ່ຽວຂ້ອງທີ່ມີສ່ວນຮ່ວມເຂົ້າໃນການກໍ່ສ້າງ"ໜຶ່ງແລວທາງ ໜຶ່ງເສັ້ນທາງ".

ແລວທາງເສດຖະກິດທີ່ສຳຄັນ ແລະ ໂຄງການສຳຄັນສອງຝ່າຍຫຼືຫຼາຍຝ່າຍຈຳນວນຫຼວງຫຼາຍພວມດຳເນີນໄປຢ່າງໜັ້ນທ່ຽງ,ແມ່ນໄດ້ຮັບການຄ້ຳຊູຈາກລະບົບການທະນາຄານ.ນັບຮອດເດືອນ ຕຸລາ ປີ 2015,ໄດ້ມີ 53 ປະເທດໄດ້ເຊັນສັນຍາທະນາຄານລົງທຶນພື້ນຖານໂຄງລ່າງອາຊີຢ່າງເປັນທາງການ,ເຊິ່ງເອທີລົງທຶນ ແລະ ລະດົມທຶນແບບໃໝ່ດັ່ງກ່າວຈະສ້າງຕັ້ງຂຶ້ນຢ່າງເປັນທາງການກ່ອນທ້າຍປີນີ້,ຈະໃຫ້ການສະໜັບສະໜູນດ້ານການລະດົມທຶນແກ່ໂຄງການສຳຄັນຈຳນວນຫຼວງຫຼາຍ.ໃນໜຶ່ງປີທີ່ຜ່ານມາ,ກອງທຶນເສັ້ນທາງສາຍໄໝໄດ້ເລັ່ງລັດການກະກຽມ ແລະ ສ້າງຕັ້ງຂຶ້ນ,ຕິດຕາມ ແລະ ຄັດເລືອກໂຄງການຢ່າງກວ້າງຂວາງ,ເລັ່ງລັດບາດກ້າວລົງທຶນໃສ່ໂຄງການຕົວຈິງ,ເຂື່ອນໄຟຟ້ານ້ຳຕົກຄາລົດຂອງປາກິສະຖານກາຍເປັນໂຄງການລົງທຶນທຳອິດຂອງກອງທຶນເສັ້ນທາງສາຍໄໝ.ນອກນີ້,ແຕ່ຕົ້ນປີນີ້ມາ,ມູນຄ່າຊຳລະບັນຊີດ້ວຍເງິນຢວນຈີນຂ້າມຊາດໃນລາຍການທຳມະດາລະຫວ່າງຈີນກັບປະເທດ ແລະ ເຂດແຄວ້ນລຽບຕາມ "ໜຶ່ງແລວທາງ ໜຶ່ງເສັ້ນທາງ" ນັ້ນໄດ້ຫຼາຍກວ່າ 2630 ຕື້ຢວນ,ໄດ້ເຊັນສັນຍາແລກປ່ຽນເງິນຕາສອງຝ່າຍກັບ 15 ປະເທດທີ່ຢູ່ລຽບຕາມ"ໜຶ່ງແລວທາງ ໜຶ່ງເສັ້ນທາງ".

图 / 新华社

# ຢາກໄປຮຽນຢູ່ຕ່າງປະເທດ,ກໍ່ໄປຮຽນຢູ່ປະເທດຈີນ

## 留学，到中国去！

随着中国综合国力不断提升，文化向心力、文化辐射力日益增强，越来越多的外国学生选择到中国留学。最新数据显示，中国已经超过法国，成为继美国、英国之后的世界第三大留学生输入国。中国，正像一个磁极，吸引着越来越多的有识之士，“留学，到中国去！”成为许许多多各国学生的主动选择。



ຄວາມຝັນຈີນຂອງເດັກຍິງມາດາກາສະກາ
马达加斯加女孩的中国梦

ຄຽງຄູ່ກັບກຳລັງສັງລວມແຫ່ງຊາດຈີນສູງຂຶ້ນເລື້ອຍໆ,ແຮງຈູງໃຈ ແລະ ອິດທິພົນຂອງວັດທະນະທຳຈີນກໍ່ນັບມື້ນັບເພີ່ມຂຶ້ນ,ນັກສຶກສາຕ່າງປະເທດນັບມື້ນັບຫຼາຍໄດ້ເລືອກຮຽນຕໍ່ຢູ່ປະເທດຈີນ.ສະຖິຕິຫຼ້າສຸດສະແດງໃຫ້ເຫັນວ່າ,ຈີນໄດ້ແຊງໜ້າຝຣັ່ງ,ກາຍເປັນປະເທດໃຫຍ່ທີ 3 ຂອງໂລກທີ່ມີຈຳນວນນັກສຶກສາຕ່າງປະເທດເຂົ້າໄປຮຽນຕໍ່ຫຼາຍທີ່ສຸດ,ເຊິ່ງຮອງຈາກອາເມລິກາ ແລະ ອັງກິດ.

ຄວາມຈິງແລ້ວ,ນັບແຕ່ວັນສ້າງຕັ້ງປະເທດຈີນໃໝ່,ຈີນກໍ່ໄດ້ເລີ່ມຮັບນັກສຶກສາຕ່າງປະເທດມາຮຽນຢູ່ຈີນ.ມາຮອດປະຈຸບັນ,ຈຳນວນນັກສຶກສາຕ່າງປະເທດທີ່ມາຮຽນຢູ່ຈີນໄດ້ເພີ່ມຈາກຫຼາຍສິບຄົນໃນໄລຍະເບື້ອງຕົ້ນ,ເພີ່ມຂຶ້ນເປັນ 3 ແສນ 7 ໝື່ນ 7 ພັນກວ່າຄົນໃນປີ 2014; ແຫຼ່ງທີ່ມາຂອງນັກສຶກສາຕ່າງປະເທດກໍ່ຫັນຈາກ 3 ປະເທດສັງຄົມນິຍົມເອີລົບຕາເວັນອອກໃນໄລຍະເບື້ອງຕົ້ນ,ເພີ່ມຂຶ້ນເປັນ 203 ປະເທດ ແລະ ເຂດແຄ້ວນໃນປະຈຸບັນ; ຫັນຈາກມີແຕ່ມະຫາວິທະຍາໄລຊິງຮວາ,ມະຫາວິທະຍາໄລປັກກິ່ງ ແລະ ອື່ນໆທີ່ເປັນຈຳນວນບໍ່ຫຼາຍຮັບນັກສຶກສາຕ່າງປະເທດນັ້ນ,ກາຍມາເປັນໂຮງຮຽນຊັ້ນສູງ,ສະຖາບັນຄົ້ນຄວ້າວິທະຍາສາດ ແລະ ອົງການສຶກສາອື່ນໆ 775 ແຫ່ງໃນປະຈຸບັນ.ຈີນເໝືອນດັ່ງແມ່ເຫຼັກ,ພວມດຶງດູດຄົນຜູ້ມີຄວາມຮັບຮູ້ຢ່າງຈະແຈ້ງນັບມື້ນັບຫຼາຍຂຶ້ນ,"ຢາກໄປຮຽນຢູ່ຕ່າງປະເທດ,ກໍ່ໄປຮຽນຢູ່ປະເທດຈີນ!" ໄດ້ກາຍເປັນທາງເລືອກຂອງນັກສຶກສາຫຼາຍໆປະເທດ.

### ກຳລັງແຮງຂອງຈີນ,ປ່ຽນແປງສະພາບການຮ່ຳຮຽນຢູ່ຕ່າງປະເທດ

"ຂ້າພະເຈົ້າເລືອກມາຮຽນຢູ່ຈີນ,ແມ່ນຍ້ອນວ່າເຄີຍຮຽນພາສາຈີນໜ້ອຍໜຶ່ງຢູ່ປະເທດຕົນ,ແລະ ມີຄວາມສົນໃຈຫຼາຍຕໍ່ຈີນ.ຂ້າພະເຈົ້າຮຽນວິຊາການຄ້າສາກົນ,ຂ້າພະເຈົ້າຮູ້ສຶກວ່າເສດຖະກິດຈີນມີຄວາມເຂັ້ມແຂງຫຼາຍ."ນັກສຶກສາຜູ້ຊາຍຜູ້ນີ້ມາຈາກອົສຕຼາລີ,ມີຄວາມສົນໃຈຫຼາຍທີ່ສຸດຕໍ່ວັດທະນະທຳຈີນ,ແລະ ຕັ້ງຊື່ຈີນໃຫ້ແກ່ຕົນເອງວ່າເຮີ້ໂມ້ຊິ່ວ,ປະຈຸບັນພວມຮຽນປະລິນຍາເອກຢູ່ມະຫາວິທະຍາໄລປັກກິ່ງ.ລາວເວົ້າວ່າ, "ປະຈຸບັນຂ້າພະເຈົ້າມີແຟນເປັນຄົນຈີນ,ຢາກສ້າງຄອບຄົວຢູ່ຈີນ,ຫຼື ກັບຄືນສູ່ອົສຕຼາລີແລ້ວຊອກວຽກຢູ່ໃນບໍລິສັດການຄ້າອົສຕຼາລີ-ຈີນ."

ຫຼັງຈາກການປະຕິຮູບ ແລະ ເປີດປະຕູສູ່ພາຍນອກເປັນເວລາ 30 ກວ່າປີມານີ້,ຈີນໄດ້ກາຍເປັນຫົວຈັກອັນສຳຄັນໃນການເຕີບໂຕຂອງເສດຖະກິດໂລກ,ການພັດທະນາຢ່າງໄວວາຂອງຈີນໄດ້ປ່ຽນແປງແຜນທີ່ດ້ານການເມືອງ ແລະ ເສດຖະກິດຂອງໂລກ. ຄຽງຄູ່ກັບຈີນມີກຳລັງແຫ່ງຊາດເຂັ້ມແຂງຂຶ້ນ,ນັກສຶກສາຕ່າງປະເທດນັບມື້ນັບຫຼາຍເລືອກຮຽນຫຼັກສູດປະລິນຍາຢູ່ຈີນ.

ຜູ້ຮັບຜິດຊອບເວັບໄຊສຳລັບນັກສຶກສາຕ່າງປະເທດທີ່ມາຮຽນຢູ່ຈີນໃຫ້ຮູ້ວ່າ,"ຢູ່ອາຊີ,ນັກສຶກສາຕ່າງປະເທດທີ່ບໍ່ແມ່ນມາຈາກຍີ່ປຸ່ນ ແລະ ສ.ເກົາຫຼີນັ້ນມີ 72% ເລືອກຮຽນຫຼັກສູດປະລິນຍາ." ນີ້ແມ່ນຍ້ອນວ່ານອກຈາກຍີ່ປຸ່ນ ແລະ ສ.ເກົາຫຼີແລ້ວ,ຈີນມີທ່າແຮງຫຼາຍສົມຄວນໃນດ້ານຊັບພະຍາກອນ ແລະ ລະດັບການສຶກສາຫຼາຍກວ່າປະເທດອາຊີອື່ນໆ,ຄ່າໃຊ້ຈ່າຍກໍ່ຕ່ຳກວ່າການໄປຮຽນຢູ່ເອີລົບ ແລະ ອາເມລິກາ.ອາຟຼິກາເປັນເພື່ອນມິດເກົ່າຂອງຈີນ,ນັກສຶກສາປະເທດອາຟຼິກາ 84% ທີ່ມາຮຽນຈີນຢູ່ນັ້ນໄດ້ເລືອກຮຽນຫຼັກສູດປະລິນຍາ.ນີ້ກໍ່ເປັນເລື່ອງທີ່ເຂົ້າໃຈໄດ້ງ່າຍ. "ການລົງທຶນຂອງຈີນຕໍ່ອາຟຼິກາໄດ້ເຕີບໂຕຢ່າງໄວວາ,ໃນໄລຍະລະຫວ່າງປີ 2003 ຮອດປີ 2013,ໄດ້ເພີ່ມຂຶ້ນ 50 ເທົ່າ,ການໄປມາຫາສູ່ກັນດ້ານເສດຖະກິດລະຫວ່າງຈີນກັບອາຟຼິກາກໍ່ນັບມື້ນັບໃກ້ຊິດກວ່າເກົ່າ."

### ຄວາມມີສະເໜ່ຂອງຈີນດຶງດູດຜູ້ມີຄວາມຮູ້ຄວາມສາມາດຈາກທົ່ວໂລກ

ທ່ານ ປັກຈຸນຈົງ,ອາຍຸ 26 ປີ,ມາຈາກນະຄອນໄດ



ນັກສຶກສາຈົບການຮຽນຕ່າງປະເທດຈຳນວນໜຶ່ງໄດ້ໂຍນໝວກນັກສຶກສາຂຶ້ນໃນເວລາຖ່າຍຮູບເປັນທີ່ລະນຶກຢູ່ໜ້າສະໂມສອນຂອງໂຮງຮຽນ
一批外国留学生毕业生在学校礼堂前合影时抛起学士帽



ນັກສຶກສາຫວຽດນາມສະແດງການຂຽນຕົວໜັງສືຈີນຂອງເຂົາເຈົ້າໃນຫ້ອງຮຽນ
越南学生展示她们在课堂上书写的汉字

ຈຽນຂອງສ.ເກົາຫຼີ,ໄດ້ຮຽນວິຊາວັນນະຄະດີ ແລະ ພາສາຈີນຄະນະວັນນະຄະດີຂອງມະຫາວິທະຍາໄລສ້າງຄູປັກກິ່ງເປັນເວລາ 3 ປີແລ້ວ.“ໃນເວລາຮຽນໃນໂຮງຮຽນມັດທະຍົມຊັ້ນປາຍ,ໄດ້ຟັງຂ່າວວ່າຈີນໄດ້ພັດທະນາຢ່າງໄວວາ,ເສດຖະກິດນັບມື້ນັບເຂັ້ມແຂງ,ການທ່ອງທ່ຽວກໍ່ມີຄວາມຈະເລີນທີ່ສຸດ.”ຜູ້ບ່າວ ສ.ເກົາຫຼີ ຜູ້ນີ້ຍັງຈື່ໄດ້ສະພາບການທີ່ທຳອໍ້ຕົກລົງໃນເມື່ອກ່ອນ.“ສິ່ງທີ່ມີແຮງດຶງດູດສຳລັບຂ້າພະເຈົ້າ,ແມ່ນດິນແດນອັນກວ້າງຂວາງ ແລະ ຄວາມອຸດົມສົມບູນຂອງປະເທດຈີນ,ມີວັດທະນະທຳປະຫວັດສາດເປັນເວລາຫຼາຍພັນປີ.”

“ໃນເມື່ອກ່ອນ,ມີແຕ່ຜູ້ທີ່ຢາກກາຍເປັນນັກຄົ້ນຄວ້າຈີນຈຶ່ງຈະມາຂຸດຄົ້ນຮູ້ກ່ຽວກັບວັດທະນະທຳຈີນ,ຜູ້ອື່ນບໍ່ມີຄວາມສົນໃຈເລີຍ.”ເມື່ອທົບທວນຄືນອະດີດ,ທ່ານເສີງໄອ້ມິນ,ອະທິການບໍດີຄະນະການສຶກສາຕ່າງປະເທດຂອງມະຫາວິທະຍາໄລນານກິ່ງມີຄວາມຮູ້ສຶກອັນເລິກເຊິ່ງ,“ປະຈຸບັນເປັນສະພາບທີ່ແຕກຕ່າງກັນແລ້ວ,ປະເທດຈີນນັບມື້ນັບເຂັ້ມແຂງຂຶ້ນ,ເສດຖະກິດພັດທະນາຢ່າງໄວວາ,ອິດທິພົນທາງດ້ານວັດທະນະທຳກໍ່ນັບມື້ນັບແຂງແຮງຂຶ້ນ.”

ເປັນຫຍັງຈຶ່ງເລືອກປະເທດຈີນ?ນາງລິນລີ້ຊິ່ງທີ່ມາຈາກສິງກະໂປມີຄຳຕອບແບບງ່າຍດາຍ,ຄື: ຄວາມມີສະເໜ່ຂອງວັດທະນະທຳຈີນ.ນາງພວມຮຽນປະລິນຍາເອກວິຊາວິທະຍາເອກະສານບູຮານຄະນະວັນນະຄະດີມະຫາວິທະຍາໄລສ້າງຄູປັກກິ່ງ.ໃນເວລາຮຽນໃນໂຮງຮຽນມັດທະຍົມຊັ້ນຕົ້ນ,ໃນຫ້ອງຮຽນພາສາຈີນທີ່ຮຽນສອງຕອນຕໍ່ອາທິດນັ້ນນາງກໍ່ໄດ້ເກີດມີຄວາມສົນໃຈຢ່າງຫຼວງຫຼາຍຫຼັງຈາກໄດ້ອ່ານບົດກາບກອນ ແລະ ຄະຕິເຕືອນໃຈທີ່ມ່ວນຫູທີ່ວ່າ “ເຄົາລົບຜູ້ສູງອາຍຸໃນຄອບຄົວຂອງຕົນກໍ່ເຄົາລົບຜູ້ສູງອາຍຸຂອງຄອບຄົວອື່ນພ້ອມ,ຮັກແພງລູກຫຼານຂອງຕົນກໍ່ຮັກແພງລູກຫຼານຂອງຜູ້ອື່ນພ້ອມ” “ສິ່ງທີ່ຕົວເອງບໍ່ມັກນັ້ນ,ຢ່າຊູ່ບັງຄັບໃສ່ຜູ້ອື່ນ”ນາງເວົ້າວ່າ,ບົດເຫຼົ່ານີ້ອ່ານແລ້ວຮູ້ສຶກອອນຊອນມ່ວນຫູ,ປະໂຫຍກຫາກໄດ້ລວມທັງຄວາມໝາຍຢ່າງເລິກເຊິ່ງ,ວັດທະນະທຳຈີນຈຶ່ງແມ່ນເປັນຕາສົນໃຈຫຼາຍ.

ວັດທະນະທຳປັດຊະຍາຂົງຈື້ມີອິດທິພົນອັນເລິກເຊິ່ງຕໍ່ປະເທດອາຊີຕາເວັນອອກສຽງໃຕ້.ໃນຊຸມປີມໍ່ໆມານີ້,ຈຳນວນນັກສຶກສາຂອງປະເທດອາຊີຕາເວັນອອກສຽງໃຕ້ທີ່ມາຮຽນຢູ່ຈີນໄດ້ເພີ່ມຂຶ້ນຢ່າງໄວວາ.ຕົວຢ່າງວ່າ,ຈຳນວນນັກສຶກສາໄທທີ່ມາຮຽນຢູ່ຈີນໄດ້ເພີ່ມຂຶ້ນເກືອບ 6 ເທົ່າພາຍໃນເວລາ 10 ປີ.

ຈີນໃນອະນາຄົດ,ຈະເປັນສາງລ້ຳຄ່າທີ່ເຕົ້າໂຮມຜູ້ມີຄວາມຮູ້ຄວາມສາມາດ

ຫວ່າງກ່ອນນີ້ບໍ່ດົນ,ທ່ານ ຈ່າງອີ້ປິ່ນ,ເລຂາຄະນະພັກມະຫາວິທະຍາໄລນານກິ່ງໄດ້ໄປຢ້ຽມຢາມອັງກິດ,ໄດ້ພົບກັບນັກສຶກສາພິເສດຜູ້ໜຶ່ງ,ທີ່ເປັນນັກການທູດຂອງອັງກິດ,ລາວເຄີຍເຂົ້າຮ່ວມຊຸດອົບຮົມນັກການທູດຢູ່ມະຫາວິທະຍາໄລນານກິ່ງ.ລາວບອກທ່ານຈ່າງອີ້ປິ່ນວ່າ,ຫວັງວ່າຕົວເມືອງອັງກິດ ແລະ ຕົວເມືອງຂອງຈີນຈະມີການແລກປ່ຽນຫຼາຍກວ່າເກົ່າ.

ເມື່ອສັງເກດບັນຊີລາຍຊື່ຂອງສິດເກົ່າຫຼືນັກສຶກສາທີ່ເຄີຍມາຮຽນຢູ່ຈີນແລ້ວຈະເຫັນວ່າຜູ້ທີ່ມີຊື່ສຽງຢ່າງຫຼວງຫຼາຍ,ເຊັ່ນ,ທ່ານມາຊີມົຝ,ນາຍົກລັດຖະມົນຕີກາຊັກສະຖານ,ທ່ານ ມູລາຕູ,ປະທານາທິບໍດີເອທິໂອປີ,ເຈົ້າຍິງສິລິນທອນຂອງໄທ,ເຈົ້າຍິງລາຍປາຂອງຊອກດານີ,ແລະອື່ນໆ.ອີງຕາມສະຖິຕິທີ່ບໍ່ຄົບຖ້ວນ,ໃນນັກສຶກສາຕ່າງປະເທດທີ່ຮຽນຈົບຈາກປະເທດຈີນແລ້ວກັບຄືນສູ່ປະເທດຂອງຕົນນັ້ນ,ມີ 40 ກວ່າເທື່ອຄົນດຳລົງຕຳແໜ່ງລະດັບລັດຖະມົນຕີຊ່ວຍວ່າການຂຶ້ນໄປ,ປະມານໜຶ່ງຮ້ອຍຄົນເຄີຍດຳລົງຕຳແໜ່ງເອກອັກຄະລັດຖະທູດ ຫຼື ທີ່ປຶກສາປະຈຳຈີນຕາມກັນ,ຍັງມີຄົນຈຳນວນໜຶ່ງໄດ້ກາຍເປັນສາສະດາຈານ ແລະ ນັກທຸລະກິດທີ່ມີຊື່ສຽງ,ແລະ ຍິ່ງຫຼາຍກວ່າເກົ່າໄດ້ກາຍເປັນກຳລັງຫຼັກແຫຼ່ງໃນການພັດທະນາຂອງປະເທດຕົນ.

ນາງລິນລີ້ຊິ່ງຫວັງວ່າຮຽນຈົບຈາກຈີນກັບຄືນສູ່ປະເທດຊາດແລ້ວຈະກາຍເປັນອາຈານສອນໃນມະຫາວິທະຍາໄລ.ນາງເວົ້າວ່າ,“ຂ້າພະເຈົ້າຢາກເຜີຍແຜ່ວັດທະນະທຳຈີນ,ແລະ ສະຕິປັນຍາຈີນທີ່ສະເທືອນໃຈຂ້າພະເຈົ້າຫຼາຍທີ່ສຸດນັ້ນໃຫ້ກວ້າງອອກໄປ.”ປະຈຸບັນ,ນາງ ລິນລີ້ຊິ່ງມີຄວາມກະຕືລືລົ້ນຫຼາຍ,ລາວເວົ້າວ່າ,ຢູ່ສິງກະໂປ,ຄອບຄົວຂອງໝູ່ເພື່ອນມີລູກຜູ້ໜຶ່ງທີ່ມີອາຍຸ 4 ປີ,ທຸກເທື່ອພົບກັບລູກຜູ້ນີ້ກໍ່ຈະສອນການຂຽນໜັງສືຈີນ,ຍັງສອນໃຫ້ໝູ່ເພື່ອນຮູ້ຈັກກັບຕາຕະລາງປະຫວັດສາດຈີນ.

ຄຽງຄູ່ກັບໂລກາພິວັດເສດຖະກິດພັດທະນາຢ່າງບໍ່ຢຸດຢັ້ງ,ການເຊື່ອມໂຍງເຂົ້າສູ່ປະເທດຈີນເທື່ອລະກ້າວ,ນັກສຶກສາຕ່າງປະເທດທີ່ມາຮ່ຳຮຽນຢູ່ຈີນເໝືອນດັ່ງແກ່ນພືກສາ,ຫຼັງຈາກຮຽນຈົບກັບຄືນສູ່ປະເທດຂອງຕົນແລ້ວ,ບໍ່ພຽງແຕ່ຈະຊຸກຍູ້ການພັດທະນາຂອງປະເທດຊາດເທົ່ານັ້ນ,ແຕ່ຍັງຈະນຳເອົາວັດທະນະທຳຈີນກັບເມືອໄປເຜີຍແຜ່ໃຫ້ກວ້າງອອກ;ບໍ່ພຽງແຕ່ຈະສົ່ງເສີມຄວາມເຂົ້າໃຈລະຫວ່າງຈີນກັບປະເທດຕ່າງໆໃນໂລກເທົ່ານັ້ນ,ແຕ່ຍັງຈະຍົກສູງພາບພົດ ແລະ ບົດບາດຂອງຈີນໃນສາກົນຕື່ມອີກ.



ນັກສຶກສາຕ່າງປະເທດໄປຮັບສະໝັກທີ່ຮາເອີປິງ
外国留学生哈尔滨赶场招聘会



ນັກສຶກສາຕ່າງປະເທດທີ່ສຶກສາຢູ່ມະຫາວິທະຍາໄລທຽນສິນກຳລັງຫໍ່ກຽ້ວເພື່ອຕ້ອນຮັບປີໃໝ່
天津大学留学生包饺子迎新春

# ແຂວງຢູນນານ:ເສັ້ນທາງສະດວກສະບາຍ,ປະຊາຊົນກົມກຽວ, ການເປີດປະຕູສູ່ພາຍນອກມີການພັດທະນາແບບກ້າວກະໂດດ

## 云南：路畅人和 开放跨步

路通到哪里，哪里就有新改变、新机遇。云南的一个个大项目让城乡焕发生机，使天堑变为通途。一路走来，云南路畅人和、内通外联，对外开放的脚步愈发清晰而坚定。

ເດືອນ ມັງກອນ ປີ 2015,ໃນເວລາກວດກາວຽກງານຢູ່ແຂວງຢູນນານ,ທ່ານ ສີຈິ້ນຜິງ,ເລຂາທິການໃຫຍ່ສູນກາງພັກຄອມມູນິດຈີນຊີ້ອອກວ່າ,ຫວັງວ່າຢູນນານ"ພະຍາຍາມກາຍເປັນສູນເປີດປະຕູສູ່ອາຊີໃຕ້ ແລະ ອາຊີຕາເວັນອອກສຽງໃຕ້." ດັ່ງນັ້ນ,ແຂວງຢູນນານໄດ້ມີໜ້າທີ່ປະຫວັດສາດອັນໃໝ່,ຕ້ອງການໃຊ້ມາດຕະການທີ່ແຂງແຮງກວ່າເກົ່າເພື່ອເພີ່ມທະວີການກໍ່ສ້າງພື້ນຖານໂຄງລ່າງ, ໂດຍສະເພາະແມ່ນການກໍ່ສ້າງຄົມມະນາຄົມ, ແລະ ບັນລຸການພັດທະນາຂອງຕົນ,ພ້ອມທັງຮັບໃຊ້ ແລະ ເຊື່ອມໂຍງເຂົ້າສູ່ຍຸດທະສາດພັດທະນາແຫ່ງຊາດ.

ຄຽງຄູ່ກັບການກໍ່ສ້າງທາງລົດໄຟຈີນ-ໄທໃກ້ຈະເລີ່ມຕົ້ນ,ການກໍ່ສ້າງ "ເຂດໃໝ່ຕ່ຽນຈົ່ງ"ແລະ"5 ເຄືອຂ່າຍ" ໄດ້ຮັບຈັດເຂົ້າໃນແຜນຍຸດທະສາດອັນສຳຄັນຫຼາຍໂຄງການຂອງລັດຖະບານ.ຖ້າຢາກສຳເລັດໜ້າທີ່ອັນສຳຄັນເຫຼົ່ານີ້ໃຫ້ດີ,ຕ້ອງການມີການຄ້ຳປະກັນອັນໜັກແໜ້ນຈາກຄົມມະນາຄົມສັງລວມ.

### ການເຊື່ອມຈອດທາງບົກກັບທາງທະເລ

ສະຖານີລົດໄຟໃຕ້ຄຸນມິງເປັນຈຸດເລີ່ມຂອງທາງລົດໄຟພາກພື້ນທົ່ວອາຊີທີ່ອ່າຍໜ້າສູ່ອາຊີຕາເວັນອອກສຽງໃຕ້ໃນແຜນຍຸດທະສາດ "ໜຶ່ງແລວທາງ ໜຶ່ງເສັ້ນທາງ", ກໍ່ແມ່ນຂຸມທາງອັນສຳຄັນໃນເຄືອຂ່າຍທາງລົດໄຟຂອງແຂວງຢູນນານທີ່ໄປສູ່" 8 ແຂວງ,4 ປະເທດ". ຈາກນີ້ເດີນທາງໄປນະຄອນຊາງຊ່າໃຊ້ເວລາພຽງແຕ່ 4 ຊົ່ວໂມງເທົ່ານັ້ນ,ໄປຮອດນະຄອນຊຽງໄຮໃຊ້ເວລາພຽງແຕ່ 8 ຊົ່ວໂມງເທົ່ານັ້ນ.ຄຽງຄູ່ກັບແຜນຍຸດທະສາດ"ໜຶ່ງແລວທາງ ໜຶ່ງເສັ້ນທາງ"ກຳນົດຢູນນານໃຫ້ເປັນສູນອ່າຍໜ້າສູ່ອາຊີໃຕ້ ແລະ ອາຊີຕາເວັນອອກສຽງໃຕ້,ແຂວງຢູນນານຈະແບກຫາບພາລະໜ້າທີ່ອັນສຳຄັນທີ່ເປັນຂຸມທາງຄົມມະນາຄົມຍຸກປະຈຸບັນຢູ່ພາກຕາເວັນຕົກຂອງຈີນກໍ່ຄືລະຫວ່າງເຂດໃນກັບເຂດແຄມທະເລຂອງຈີນ.

ທາງລົດໄຟຈີນ-ໄທເປັນຕອນກາງຂອງທາງລົດໄຟພາກພື້ນທົ່ວອາຊີ.ຫຼັງຈາກເສັ້ນທາງລົດໄຟສາຍນີ້ສ້າງສຳເລັດແລ້ວ,ຈະເຊື່ອມຈອດແຂວງຢູນນານກັບອາຊີຕາເວັນອອກສຽງໃຕ້,ຈົນຮອດມະຫາສະໝຸດປາຊີຟິກ.ເວົ້າສຳລັບແຂວງຢູນນານແລ້ວ,ການເລີ່ມກໍ່ສ້າງທາງລົດໄຟຈີນ-ໄທເປັນ"ໂອກາດຮອບສະຕະວັດ".

ປະຈຸບັນ,ຈາກຄຸນມິງໄປສູ່ນະຄອນຫຼວງບາງກອກມີຖ້ຽວບິນໂດຍກົງ,ກໍ່ແມ່ນທາງຫຼວງຄຸນມິງ-ບາງກອກ. ຫຼັງຈາກທາງລົດໄຟຈີນ-ໄທເລີ່ມແລ່ນລົດແລ້ວ,ຢູ່ລະຫວ່າງສອງຕົວເມືອງຈະຈໍ່ຕົວມີເຄືອຂ່າຍຄົມມະນະຄົມທີ່ມີທາງລົດໄຟ,ທາງຫຼວງ ແລະ ເສັ້ນທາງການບິນ,ດັ່ງນັ້ນ,ການທ່ອງທ່ຽວ,ການຈໍລະຈອນສິນຄ້າ ແລະ ການຄ້າຈະມີຄວາມສະດວກສະບາຍກວ່າເກົ່າ.

ນອກນີ້,ທາງລົດໄຟອີ້ຊີ່-ບໍ່ຫານທີ່ເປັນພາກສ່ວນອັນສຳຄັນໃນສາຍກາງຂອງທາງລົດໄຟອາຊີໄດ້ເລີ່ມກໍ່ສ້າງໃນວັນທີ 31 ສິງຫາ ທີ່ຜ່ານມາ,ປີນີ້ຈະສຳເລັດໜ້າທີ່ດ້ານການລົງທຶນ ແລະ ການກໍ່ສ້າງເກີນຄາດໝາຍ.ທ່ານ ຕົ່ງຊ້າວຊຽງ ໃຫ້ຮູ້ວ່າ, "ທາງລົດໄຟອີ້ຊີ່-ບໍ່ຫານເປັນພາກສ່ວນອັນສຳຄັນໃນສາຍກາງຂອງທາງລົດໄຟອາຊີ,ເປັນໂຄງການແບບຢ່າງໃນການສ້າງສາສູນອ່າຍໜ້າສູ່ອາຊີຕາເວັນອອກສຽງໃຕ້ ແລະ ອາຊີໃຕ້,ກໍ່ເປັນໂຄງການອັນສຳຄັນທີ່ນຳພາປະຊາຊົນບັນດາເຜົ່າຢູ່ແຫ່ງຕ່າງໆຕາມທາງລົດໄຟພັດທະນາພ້ອມກັນ ແລະ ເປີດປະຕູສູ່ພາຍນອກ."



ພາບວິວກາງຄືນສະໜາມບິນຊາງສຸຍຄຸນໝິງ
昆明长水国际机场夜景 新华社 图



ວັນທີ 20 ເດືອນ 5 ປີ 2013,ວິສະວະກຳກໍ່ສ້າງທາງລົດໄຟໃຕ້ດິນຄຸນໝິງສາຍເລກ 1 ເລກ 2 ໄດ້ດຳເນີນການບັນຈຸແຂກທົດລອງແລ່ນລົດ,ນີ້ແມ່ນທາງລົດໄຟໃຕ້ດິນພູພຽງສາຍທຳອິດພາຍໃນປະເທດຈີນ
2013 年 5 月 20 日昆明地铁 1、2 号线首期工程进行载客试运营，这也是国内开通的首条高原地铁 半 清 图

ຟ້າກັບດິນເຊື່ອມຕໍ່ກັນ

ແຂວງຢຸນນານຢູ່ເຂດໃນຂອງຈີນ,ມີພູຜາແມ່ນ້ຳສະຫຼັບຊັບຊ້ອນກັນ,ຄວາມຫຼ້າຫຼັງດ້ານຄົມມະນາຄົມເປັນສິ່ງກີດຂວາງອັນໜັກໜ່ວງຕໍ່ການເປີດປະຕູ ແລະ ການແລກປ່ຽນກັບພາຍນອກ.ໃນເມື່ອກ່ອນ,ຢູ່ເຂດຕູໂລງຈ່ຽງ,ແຕ່ລະປີມີເວລາເຄິ່ງປີແມ່ນຖືກປິດລ້ອມດ້ວຍຫິມະໜັກ,ເປັນເຂດທີ່ຫຼ້າຫຼັງທີ່ສຸດຂອງແຂວງຢຸນນານກໍ່ຄືທົ່ວປະເທດ.

ປີ 2014,ມີຄົນນອກກຸ່ມໜຶ່ງໄດ້ປາກົດຕົວຢູ່ຕາແສງຕູໂລງຈ່ຽງ.ພວກເຂົາເຈົ້າໄດ້ເດີນທາງທາງຫຼວງຕູໂລງຈ່ຽງທີ່ເປັນທາງຜ່ານສາຍດຽວ,ຜ່ານຊອດພູກາວລີກົງ,ພົບພໍ້ກັບເຜົ່າຕູໂລງທີ່ຫ່າງເຫີນຈາກໂລກພາຍນອກ.ສຳລັບເສັ້ນທາງສາຍນີ້,ກໍ່ແມ່ນສາຍເລືອດເນື້ອທີ່ສຳຄັນທີ່ສຸດສຳລັບການພັດທະນາເສດຖະກິດຂອງເຜົ່າຕູໂລງ.ປະຈຸບັນ,ມີນັກທ່ອງທ່ຽວມາທ່ຽວຊົມໂດຍຂີ່ລົດເອງ.ແຕ່ລະມື້,ທ່ານ ກາວເຕີຢົງ ທີ່ເປັນເຈົ້າຂອງເຮືອນພັກ "ຄອບຄົວຕູໂລງ"ຕ້ອງຕື່ນແຕ່ເຊົ້າເພື່ອກຽມເຂົ້າເຊົ້າໃຫ້ແກ່ແຂກທີ່ມາທ່ອງທ່ຽວ.ລາວບອກວ່າ,"ເວົ້າສຳລັບພວກເຮົາແລ້ວ,ຈັ່ງແມ່ນມີຊີວິດການເປັນຢູ່ທີ່ດີຂຶ້ນແລ້ວ."

ໃນຊຸມປີມໍ່ໆມານີ້,ຢຸນນານອາໄສທ່າແຮງດ້ານດ່ານເຂົ້າອອກເມືອງ ແລະ ບົດບາດເຕົ້າໂຮມຂອງສະໜາມບິນ,ຖືການບິນເປັນສິ່ງນຳໜ້າ,ເລັ່ງລັດກໍ່ສ້າງລະບົບຄົມມະນາຄົມທີ່ລວມທັງທາງຫຼວງ,ທາງລົດໄຟ ແລະ ທາງນ້ຳ, "ທາງຜ່ານໃຫຍ່ສາກົນ"ໄດ້ຫັນຈາກແຜນການມາເປັນຄວາມຈິງ.

ຫຼັງຈາກທຳຄວາມພະຍາຍາມເປັນເວລາ 5 ປີ,ຢູ່ທຸກກິ່ງແຂວງ ແລະ ນະຄອນໃນທົ່ວແຂວງຢຸນນານລ້ວນແຕ່ຈະມີທາງດ່ວນ,ເຄືອຂ່າຍທາງລົດໄຟຈະປົກຫຸ້ມທຸກກິ່ງແຂວງ ແລະ ນະຄອນ;ສຳລັບເມືອງໃຫຍ່ດ້ານເສດຖະກິດທີ່ມີປະຊາກອນ 5 ແສນຄົນຂຶ້ນໄປ,ວົງເສດຖະກິດຕົວເມືອງຢູ່ພາກກາງແຂວງຢຸນນານ,ຈະມີທາງດ່ວນຕາມທຸກເມືອງ.ເຄືອຂ່າຍທາງດ່ວນທີ່ອອກໄປສູ່" 7 ແຂວງ,5 ປະເທດ",ເຄືອຂ່າຍທາງລົດໄຟທີ່ອອກໄປສູ່ "8 ແຂວງ,4 ປະເທດ",ພ້ອມດ້ວຍທາງນ້ຳທີ່ອອກໄປສູ່ "2 ແຂວງ,3 ປະເທດ"ນັ້ນຈະສ້າງສຳເລັດໃນຂັ້ນພື້ນຖານ,ປາກົດມີເຄືອຂ່າຍເສັ້ນທາງການບິນທາງພາຍໃນ ແລະ ສາກົນຢ່າງກວ້າງຂວາງ.

ຮອດປີ 2020,ໄລຍະຍາວຂອງເສັ້ນທາງຄົມມະນາຄົມຢູ່ທົ່ວແຂວງຢຸນນານຈະມີເຖິງ 2 ແສນ 5 ໝື່ນກິໂລແມັດ,ທາງດ່ວນທີ່ແລ່ນລົດໄດ້ຈະມີເຖິງ 6000 ກິໂລແມັດ,ທາງລົດໄຟມີເຖິງ 5000 ກິໂລແມັດ,ທາງເດີນເຮືອຕາມແມ່ນ້ຳມີເຖິງ 5000 ກິໂລແມັດ;ສະໜາມບິນຈະມີເຖິງ 20 ແຫ່ງ,ຈະເປີດບໍລິການເສັ້ນທາງການບິນທັງພາຍໃນ ແລະ ສາກົນຫຼາຍກວ່າ 410 ສາຍ.

ພັດທະນາພ້ອມກັນຢ່າງຂະໜາດໃຫຍ່

ໃນເດືອນກັນຍາປີນີ້,ເຂດໃໝ່ພາກກາງຢຸນນານໄດ້ຮັບການອະນຸມັດ.ພື້ນຖານໂຄງລ່າງເປັນສິ່ງນຳໜ້າຂອງອະແໜງການ,ການກໍ່ສ້າງຕົວເມືອງແບບໃໝ່ ແລະ ການກໍ່ສ້າງເຄືອຂ່າຍເສັ້ນທາງຄົມມະນາຄົມຂອງຢຸນນານຈະຈໍ່ຕົວເປັນພາກສ່ວນແຫ່ງການພັດທະນາແບບເຊື່ອມໂຍງເຂົ້າກັນ,ເພີ່ມທະວີບົດບາດຕໍ່ພາຍນອກຂອງເສດຖະກິດຕົວເມືອງພາກກາງຢຸນນານ, ໂຄງການກໍ່ສ້າງເຄືອຂ່າຍຄົມມະນາຄົມງວດໜຶ່ງຈະສະໜັບສະໜູນ ແລະ ຮັບໃຊ້ການພັດທະນາຂອງເຂດໃໝ່ພາກກາງຢຸນນານ.

ວັນທີ 26 ກັນຍາທີ່ຜ່ານມາ,ທ່ານ ສີຈິ້ນຜິງ,ປະທານປະເທດຈີນໄດ້ເຂົ້າຮ່ວມກອງປະຊຸມສະຫະປະຊາຊາດເພື່ອການພັດທະນາ,ແລະ ກ່າວປາໄສທີ່ມີຫົວຂໍ້ວ່າ "ສະແຫວງຫາການພັດທະນາແບບມີສ່ວນຮ່ວມ ແລະ ຍືນຍົງ,ເປັນຄູ່ຮ່ວມມືແບບຕ່າງຝ່າຍຕ່າງມີຜົນປະໂຫຍດ". ທ່ານກ່າວເນັ້ນວ່າ,ຮ່ວມກັນເດີນຕາມເສັ້ນທາງພັດທະນາທີ່ສະເໝີພາບ,ເປີດກວ້າງ,ຮອບດ້ານ ແລະ ປະດິດສ້າງໃໝ່,ພະຍາຍາມບັນລຸການພັດທະນາພ້ອມກັນຂອງບັນດາປະເທດ.

ພາຍໃຕ້ຫົວຂໍ້ທີ່ວ່າສັນຕິພາບ ແລະ ການພັດທະນາທີ່ເປັນຫົວຂໍ້ຫຼັກຂອງຍຸກສະໄໝ,ແຂວງຢຸນນານຖືການເລັ່ງລັດກໍ່ສ້າງທາງຜ່ານສາກົນເປັນພື້ນຖານ, ໂດຍຜ່ານຈາກພັດທະນາຄົມມະນາຄົມຮອບດ້ານເພື່ອຄ້ຳຊູບົດບາດຕໍ່ພາຍນອກ,ຮ່ວມກັບປະເທດຕ່າງໆສ້າງປະຊາຄົມຮ່ວມຊະຕາກຳທີ່ຮ່ວມທຸກຮ່ວມສຸກ.

ເສັ້ນທາງໄປຮອດບ່ອນໃດ,ກໍ່ຈະເກີດມີການປ່ຽນແປງໃໝ່ ແລະ ໂອກາດໃໝ່ຢູ່ບ່ອນນັ້ນ.ໂຄງການໃຫຍ່ຕ່າງໆຂອງຢຸນນານໄດ້ເຮັດໃຫ້ຕົວເມືອງ ແລະ ຊົນນະບົດເກີດມີພະລັງຊີວິດໃໝ່,ເຮັດໃຫ້ອຸປະສັກຫັນມາເປັນທາງຜ່ານທີ່ຮາບພຽງ.ເມື່ອພັດທະນາມາຮອດປະຈຸບັນ,ຢູ່ແຂວງຢຸນນານມີເສັ້ນທາງທີ່ສະດວກສະບາຍປະຊາຊົນມີຄວາມກົມກຽວ,ເຊື່ອມຕໍ່ກັນລະຫວ່າງພາຍໃນກັບພາຍນອກ,ມີບາດກ້າວທີ່ຈະແຈ້ງ ແລະ ໜັກແໜ້ນໃນການເປີດປະຕູສູ່ພາຍນອກ.



ທາງຢາງພາຍໃນເຂດແດນຢຸນລິນເມືອງເຕີຊິນກິ່ງແຂວງເຜົ່າຕີເບດຕີຊິນແຂວງຢຸນນານທີ່ຢູ່ເໜືອລະດັບນ້ຳທະເລ 3000 ກວ່າແມັດ
海拔 3000 多米的云南省迪庆藏族自治州德钦县云岭乡境内的柏油公路 新华社 图

文、图 / 云南建工集团有限公司

# ໃນເວລາດຳເນີນການສຳຫລວດສຶກສາກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ ທ່ານ ເຊີນຮາວ ໄດ້ເນັ້ນວ່າ: ຍົກສູງກຳລັງແກ່ງແຍ້ງທີ່ເປັນແກ່ນສານ,ດຳເນີນການ ປະຕິຮູບປະດິດສ້າງໃຫມ່ເພື່ອຊຸກຍູ້ການພັດທະນາ

## 陈豪在云南建工集团调研时强调：提升核心竞争力 改革创新促发展

2015 年 12 月 1 日，云南省委副书记、省长陈豪，副省长董华到云南建工集团调研，充分肯定云南建工集团改革发展成绩，殷切希望云南建工集团争做云南省国有企业转型升级的一面旗帜、改革创新的一面旗帜、“走出去”的一面旗帜。



ທ່ານ ເຊີນຮາວ ອະດີດຮອງເລຂາຄະນະພັກແຂວງ,ເຈົ້າແຂວງຢຸນນານໄປກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານດຳເນີນການສຳຫຼວດຄົ້ນຄ້ວາ ແລະ ໃຫ້ຄຳໂອ້ອາດທີ່ສຳຄັນ
云南省委副书记、省长陈豪到云南建工集团调研，并作重要讲话

ວັນທີ 1 ທັນວາ ປີ 2015,ທ່ານ ເຊີນຮາວ ຮອງເລຂາຄະນະພັກແຂວງຢຸນນານເຈົ້າແຂວງຢຸນນານ,ທ່ານ ຕົ໋ງຮວາ ຮອງເຈົ້າແຂວງເດີນທາງໄປກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານເພື່ອດຳເນີນການສຳຫລວດຄົ້ນຄວ້າ,ໄດ້ຢືນຢັນຜົນງານປະຕິຮູບ ແລະ ການພັດທະນາຂອງກຸ່ມບໍລິສັດດັ່ງກ່າວນີ້,ຫວັງຢ່າງຍິ່ງວ່າກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈະຍາດເອົາເປັນຄັນທຸງຄັນໜຶ່ງຂອງລັດວິສາຫະກິດຢຸນນານຫັນຮູບແບບເລື່ອນຊັ້ນ,ເປັນຄັນທຸງຄັນໜຶ່ງທີ່ປະຕິຮູບ ແລະ ປະດິດສ້າງໃໝ່,ເປັນຄັນທຸງຄັນໜຶ່ງໃນການອອກໄປຕ່າງປະເທດ”,ຍົກສູງກຳລັງແກ່ງແຍ້ງທີ່ເປັນແກ່ນສານຂອງວິສາຫະກິດ,ປະກອບສ່ວນເຂົ້າໃນການຊຸກຍູ້ທົ່ວແຂວງພັດທະນາແບບກ້າວກະໂດດ.

ທ່ານ ເຊີນຮາວ ຍ່າງເຂົ້າສູ່ພາກສະໜາມກໍ່ສ້າງ ແລະ ເຂດນ້ອຍ,ໄດ້ສຳຫລວດຕົວຈິງໂຄງການເຮືອນພັກລັກສະນະຮັບປະກັນ ແລະ ການກໍ່ສ້າງຕົວເມືອງໃໝ່ໃນເຂດພັດທະນາເສດຖະກິດເຕັກນິກແຫ່ງຊາດຄຸນໝິງທີ່ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານເປັນຜູ້ຮັບເໝົາກໍ່ສ້າງ ແລະ ຮຽກປະຊຸມສົນທະນາສຳຫຼວດຄົ້ນຄວ້າທີ່ອາຄານພັດທະນາຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ. ທ່ານ ເຊີນຮາວ ກ່າວວ່າ,ຈຸດປະສົງສຳຄັນທີ່ມາສຳຫລວດຄົ້ນຄວ້າກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານໃນຄັ້ງນີ້ແມ່ນລົງເລິກຮ່ຳຮຽນ ແລະ ເສີມຂະຫຍາຍນ້ຳໃຈກອງປະຊຸມໃຫຍ່ຂອງພັກຄັ້ງທີ່ 5 ສະໄໝທີ 18,ຄົ້ນຄວ້າການພັດທະນາໃນໄລຍະແຜນການ 5 ປີ ຄັ້ງທີ 13 ຈົນເຖິງການພັດທະນາຍິ່ງຍາວນານ.ທ່ານເວົ້າວ່າ,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານແມ່ນ 1 ໃນວິສາຫະກິດຫຼັກແຫຼ່ງທີ່ສຳຄັນຂຶ້ນກັບແຂວງເຊິ່ງແມ່ນຄະນະກຳມະການຊັບສິນຂອງລັດເປັນຜູ້ຄຸ້ມຄອງ.ຄະນະພັກແຂວງຢຸນນານ ແລະ ປົກຄອງແຂວງຢຸນນານໄດ້ຝາກຄວາມຫວັງໜັກໜາຕໍ່ການພັດທະນາຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ,ຫວັງຢ່າງຍິ່ງວ່າ,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານສາມາດເລັ່ງລັດການພັດທະນາໂດຍໄວ,ສະເໜີອອກຈິດສຳນຶກແຫ່ງການພັດທະນາແບບໃໝ່ ແລະ ຄວາມຮັອງຂໍທີ່ທ່ານ ສີຈິນຜິງ ເລຂາທິການໃຫຍ່ສະເໜີອອກໃນເວລາສຳຫຼວດຢຸນນານນັ້ນຕາມນ້ຳໃຈຂອງກອງປະຊຸມໃຫຍ່ຂອງພັກຄັ້ງທີ່ 5 ສະໄໝທີ 18,ພ້ອມກັນບັນລຸການພັດທະນາແບບກ້າວກະໂດດຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ ແລະ ຂອງແຂວງຢຸນນານໃຫ້ປະກົດເປັນຈິງ.



ທ່ານ ຕົ໋ງຮວາ ຮອງເຈົ້າແຂວງຢຸນນານພາເຈົ້າແຂວງ ເຊີນຮາວ ໄປກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານດຳເນີນການສຳຫຼວດຄົ້ນຄ້ວາ
云南省副省长董华陪同陈豪省长到云南建工集团调研


ທ່ານ ເຊີນເວີນຊານ ເລຂາຄະນະພັກ ປະທານກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຕາງໜ້າກຸ່ມບໍລິສັດລາຍງານວຽກງານ
云南建工集团公司党委书记、董事长陈文山代表集团作工作汇报

ທ່ານ ເຊີນຮາວ ຊີ້ອອກວ່າ:ຄັນບໍ່ມີການພັດທະນາແບບກ້າວກະໂດດຂອງວິສາຫະກິດກໍຍາກທີ່ບັນລຸເຖິງການພັດທະນາແບບກ້າວກະໂດດຂອງແຂວງຢຸນນານໄດ້.”ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານສ້າງຕັ້ງຂຶ້ນເປັນເວລາ 64 ປີມານີ້,ໄດ້ກ້າວໄປໜ້າເປັນກ້າວໆ,ໂດຍສະເພາະຫວ່າງປີມໍ່ໆມານີ້,ປະເຊີນໜ້າຕໍ່ກັບການແກ່ງແຍ້ງຕະຫລາດຢ່າງດຸເດືອດພະນັກງານພະລາກອນອັນໄພສານຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຕັ້ງໜ້າເສີມຂະຫຍາຍການຈັດວາງນະໂຍບາຍຂອງສູນກາງ ແລະ ຂອງຄະນະພັກແຂວງ ແລະ ການປົກຄອງແຂວງ,


ທ່ານ ເຊີນຮາວ ຮອງເລຂາຄະນະພັກເຈົ້າແຂວງຢຸນນານຊົມເບິ່ງຮູບຈຳລອງເຮືອນພັກໂຄງປະກອບເຫຼັກປະຊາຊົນຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ
云南省委副书记、省长陈豪参观云南建工集团钢结构民居模型

ເຮັດໃຫ້ວຽກງານທຸກປະການໃຫ້ສົມບູນແບບຢ່າງບໍ່ຂາດສາຍ,ບຸກທະລຸປ້ອມແຂງຜ່ານຜາຄວາມຫຍຸ້ງຍາກ,ຊຸກດັນກຸ່ມບໍລິສັດພັດທະນາກາຍເປັນວິສາຫະກິດການກໍ່ສ້າງຂະໜາດໃຫຍ່ທີ່ມີຜົນສະທ້ອນພາຍໃນ ແລະ ພາຍນອກປະເທດ,ໄດ້ປະກອບສ່ວນທີ່ສຳຄັນເຂົ້າໃນການພັດທະນາເສດຖະກິດໃນທົ່ວແຂວງ.

ທ່ານ ເຊີນຮາວ ຢືນຢັນຜົນງານ ທີ່ໄດ້ຮັບທາງດ້ານການເລັ່ງລັດຊຸກຍູ້ຫັນຮູບແບບເລື່ອນຊັ້ນ,ສືບຕໍ່ຍົກສູງຄວາມສາມາດຮັບເໝົາລວມການກໍ່ສ້າງ,ເພີ່ມທະວີຄວາມສາມາດການລົງທຶນ ແລະ ລະດົມທຶນເທື່ອລະກ້າວ,ເລັ່ງລັດບາດກ້າວ"ອອກໄປຕ່າງປະເທດ"ຢ່າງບໍ່ຂາດສາຍ ແລະ ອື່ນໆ,ຫວັງວ່າ,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານກຳແໜ້ນກາລະໂອກາດ,ສົ່ງເສີມທ່າແຮງ,ປຸກລະດົມກຳລັງບົ່ມຊ້ອນ,ຫັນຮູບແບບເລື່ອນຊັ້ນ,ອອກແຮງແກ້ໄຂບັນຫາຍາກທາງດ້ານໃນການຍົກສູງກຳລັງແກ່ງແຍ້ງທີ່ເປັນແກ່ນສານ,ບຸກເບີກຕະຫລາດສາກົນ,ເພີ່ມທະວີການປະຕິຮູບ ແລະ ປະດິດສ້າງໃໝ່ ແລະ ສ້າງລະບອບວິສາຫະກິດທັນສະໄໝໃຫ້ສົມບູນແບບ,ຊຸກດັນຈັດທຳວິສາຫະກິດໃຫ້ໃຫຍ່ ແລະ ເຂັ້ມແຂງ,ສ້າງສາກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານກາຍເປັນກຸ່ມກໍ່ສ້າງການລົງທຶນຢ່າງຂະໜາດໃຫຍ່ທີ່ມີຜົນສະທ້ອນສາກົນ.ທ່ານໄດ້ສະເໜີຄຳຮ້ອງຂໍຢ່າງຈະແຈ້ງຕໍ່ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານໃນຂັ້ນຕໍ່ໄປ: ໜຶ່ງແມ່ນລົງເລິກຮໍ່າຮຽນ ແລະ ເສີມຂະຫຍາຍນໍ້າໃຈກອງປະຊຸມຄົບຄະນະຄັ້ງທີ 5 ສະໄໝທີ 18 ຂອງພັກ,ປະກອບສ່ວນເຂົ້າໃນການພັດທະນາແບບກ້າວກະໂດດຂອງແຂວງຢຸນນານ.ຈະຕ້ອງເຂົ້າຮ່ວມການກໍ່ສ້າງເຮືອນພັກລັກສະນະຮັບປະກັນ ແລະ ການດັດສ້າງເຂດເຮືອນຕູບໄມ້ຢ່າງຕັ້ງໜ້າ,ເພື່ອຊຸກຍູ້ການພັດທະນາກິດຈະກຳເຄຫາສະຖານ ແລະ ທີ່ດິນຢ່າງແຂງແຮງໃນທົ່ວແຂວງ,ຊຸກດັນການສ້າງສາແບບຕົວເມືອງໃໝ່ຂອງຢຸນນານ, ໂດຍສະເພະແມ່ນຕົວເມືອງລະບາຍນໍ້າເສຍ,ປະຢັດພະລັງງານ,ປົກປັກຮັກສາສິ່ງແວດລ້ອມ,ຕົວເມືອງທີ່ສະຫຼາດມີສະຕິປັນຍາ,ບໍລິການສາທາລະນະ ແລະ ການຄຸ້ມຄອງເຂດນ້ອຍ ແລະ ດ້ານອື່ນໆນຳໜ້າເປັນຕົວແບບ.ຍົກສູງລະດັບ ແລະ ມູນສ່ວນບັນຈຸແຫ່ງການວາງແຜນແມ່ບົດຕົວເມືອງ,ການສ້າງສາ,ການຄຸ້ມຄອງຢ່າງຕໍ່ເນື່ອງ;ສອງແມ່ນເລັ່ງລັດຫັນຮູບແບບເລື່ອນຊັ້ນໂດຍໄວ,ເພີ່ມທະວີກຳລັງແກ່ງແຍ້ງທີ່ເປັນແກ່ນສານຂອງກຸ່ມບໍລິສັດ.ຖືເອົາການຮັບເໝົາລວມ,ການລົງທຶນ ແລະ ລະດົມທຶນ,"ອອກໄປຕ່າງປະເທດ",ຄວາມສາມາດຄຸ້ມຄອງສັງລວມກາຍເປັນກຳລັງແກ່ງແຍ້ງທີ່ເປັນແກ່ນສານຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ,ໂດຍຜ່ານການປະດິດສ້າງໃໝ່ໂດຍເຕັກໂນໂລຊີ ແລະ ການສ້າງສາແບບຂໍ້ມູນຂ່າວສານນຳເຂົ້າຄູ່ຮ່ວມມືຍຸດທະສາດຢ່າງຕັ້ງໜ້າ,ຂຶ້ນສູ່ລະດັບໃໝ່ອີກທາງດ້ານຂະໜາດການພັດທະນາ ແລະ ປະສິດທິພາບ,ເພີ່ມທະວີກຳລັງແກ່ງແຍ້ງສັງລວມ ແລະ ຜົນສະທ້ອນສາກົນຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ; ສາມແມ່ນເລັ່ງລັດບາດກ້າວປະຕິຮູບ ແລະ ປະດິດສ້າງໃໝ່,ສ້າງຕັ້ງລະບອບວິສາຫະກິດທັນສະໄໝໃຫ້ສົມບູນແບບ.ຊຸກດັນການປັບປຸງໂຄງປະກອບການຈັດຕັ້ງພາຍໃນຂອງວິສາຫະກິດດ້ວຍຍຸດທະສາດໃຫຍ່,ກຳລັງເດັດຂາດໃຫຍ່,ມາດຕາການໃຫຍ່,ເລັ່ງລັດການປັບເຂົ້າກັບພື້ນແຜ່ນກິດຈະການ,ເຮັດໃຫ້ກົນໄກບໍລິຫານຄຸ້ມຄອງບຸກຄົນ,ຊັບສົມບັດ ແລະ ວັດຖຸສິ່ງຂອງໃຫ້ສົມບູນແບບ,ເນັ້ນໜັກການກໍ່ສ້າງລະບອບຈິດໃຈຊື່ສັດສຸດຈະລິດ ແລະ ມີສະອາດຂອງວິສາຫະກິດ.ກາຍເປັນກົນໄກກະຕຸ້ນຊຸກຍູ້ ແລະ ການຜູກມັດປະສານສົມທົບເຊິ່ງກັນ ແລະ ກັນ,ເພື່ອບຳລຸງກໍ່ສ້າງວັດທະນະທຳວິສາຫະກິດທີ່ດີເລີດ,ເຮັດໃຫ້ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານກາຍເປັນຄັນທຸງຄັນໜຶ່ງຂອງລັດວິສາຫະກິດຂອງແຂວງເຮົາຫັນຮູບແບບເລື່ອນຊັ້ນ,ປະຕິຮູບປະດິດສ້າງໃໝ່.



ທ່ານ ເຊີນຮາວ ຮອງເລຂາຄະນະພັກເຈົ້າແຂວງຢຸນນານຢ້ຽມຊົມຮູບຈຳລອງໂຄງການສະຖານທີ່ທ່ອງທ່ຽວເລກ 1 ມິງຫູວັນກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ
云南省委副书记、省长陈豪参观云南建工集团明湖湾 1 号旅游地产项目模型

ທ່ານ ຕົ້ງຮວາ ຊີ້ອອກວ່າ,ຫວ່າງປີມໍ່ໆມານີ້,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານໄດ້ພັດທະນາໂດຍໄວຫຼາຍ, ໂດຍສະເພາະແມ່ນກຳໄດ້ກາລະໂອກາດອັນສຳຄັນທີ່ເປັນລະບົບເຊັ່ນ:ເຂດເຮືອນຕູບໄມ້ ແລະ ເຮືອນພັກຮັບປະກັນ ແລະ ອື່ນໆ,ເລັ່ງລັດການຫັນຮູບແບບເລື່ອນຊັ້ນຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ,ໄດ້ຍົກສູງຄວາມສາມາດທັງສີ່ ແລະ ຄວາມສາມາດທຸລະກິດການຜະລິດຢ່າງເດັ່ນຊັດ.ທ່ານຊີ້ອອກວ່າ,ໜຶ່ງແມ່ນກຳໄດ້ກາລະໂອກາດສຳຄັນແຫ່ງການສ້າງສາ"ຫ້າເຄືອຂ່າຍ",ຈັດທຳວິສາຫະກິດໃຫ້ໃຫຍ່ ແລະ ຍອດຢ້ຽມ.ສອງແມ່ນກຳແໜ້ນກາລະໂອກາດລົງເລິກປະຕິຮູບ,ເຮັດໃຫ້ກົນໄກ ແລະ ລະບົບເປັນລະບຽບຮຽບຮ້ອຍ,ປະຕິບັດຕາມຖານະ ແລະ ຄຳຮ້ອງຂໍ,ກໍ່ສ້າງຮູບແບບວິສາຫະກິດຄືນໃໝ່,ອີງຕາມພື້ນແຜ່ນກິດຈະການດຳເນີນການປັບເຂົ້າທຶນຮອນ ແລະ ຊັບສົມບັດຄືນໃໝ່;ສາມແມ່ນເຮັດໃຫ້ລະບອບວິສາຫະກິດທັນສະໄໝໃຫ້ສົມບູນແບບ, ໂດຍຜ່ານການປະຕິຮູບເພື່ອເໝາະສົມກັບການພັດທະນາເສດຖະກິດໂດຍໄວ ແລະ ວິສາຫະກິດພັດທະນາໂດຍໄວ,ກຳໄວ້ກາລະໂອກາດແຫ່ງການຫັນປ່ຽນຮູບແບບເລື່ອນຊັ້ນ,ກໍ່ສ້າງຮູບແບບການພັດທະນະແບບໃໝ່ຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ;ສີ່ແມ່ນເລັ່ງລັດຄວາມແຮງແຫ່ງການ"ອອກໄປຕ່າງປະເທດ",ເພື່ອຍົກສູງຄວາມສາມາດດຳເນີນງານແບບສາກົນ ແລະ ຄວາມສາມາດບຸກເບີກການຕະຫລາດ,ຊອກຫາທິດທາງກິດຈະກຳໃຫ້ຄັກແນ່,ເປີດຍີ່ຫໍ້ດັງຢູ່ຕ່າງປະ



ທ່ານ ເຊິນຮາວ ຮອງເລຂາຄະນະພັກເຈົ້າແຂວງຢຸນນານ ຢ້ຽມຊົມລະບຽງວັດທະນະທຳຫ້ອງການຊັ້ນ 3 ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ
云南省委副书记、省长陈豪参观云南建工集团办公三楼文化走廊

ເທດ, ໂດຍຜ່ານການພັດທະນາຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຊັກນຳການພັດທະນາຂອງວິສາຫະກິດສັງກັດແຂວງ,ຊຸກດັນແຂວງຢຸນນານພັດທະນະຍິ່ງດີຍິ່ງໄວກວ່າເກົ່າ.

ທ່ານ ເຊິນເວິນຊານ ເລຂາຄະນະພັກ,ປະທານກຸ່ມບໍລິສັດກ່າວວ່າ,ທ່ານເຈົ້າແຂວງ ເຊິນຮາວ ມາສຳຫລວດຄົ້ນຄວ້າ ແລະ ຊີ້ນຳວຽກງານຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ, ແມ່ນໃຫ້ຄວາມເອົາໃຈໃສ່ ແລະ ຮັກຫອມຕໍ່ກຸ່ມບໍລິສັດພວກເຮົາ.ຢູ່ໃນວຽກງານໃນຂັ້ນຕໍ່ໄປ, ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ;ຈະຕ້ອງປະຕິບັດຕາມການຈັດວາງ ແລະ ຄວາມຮ້ອງຂໍຂອງຄະນະພັກແຂວງ ແລະ ຄະນະປົກຄອງແຂວງ,ຍຶດໝັ້ນຈິດສຳນຶກບຸກເບີກຕະຫລາດພາຍນອກ,ເພີ່ມທະວີການຄຸ້ມຄອງພາຍໃນ,ພະຍາຍາມເປັນເຈົ້າການເຊື່ອມໂຍງເຂົ້າກັບຍຸດທະສາດ" 1 ແລວທາງ 1 ເສັ້ນທາງ"ຂອງລັດ ແລະ ຍຸດທະສາດພັດທະນາຢຸນນານ,ອອກແຮງເພີ່ມທະວີການສ້າງສາວັດທະນະທຳວິສາຫະກິດ ແລະ ການກໍ່ສ້າງຖັນແຖວບຸກຄະລາກອນ ແລະ ພະນັກງານ,ລົງເລິກການປະຕິຮູບ ແລະ ການພັດທະນາ ແລະ ຊຸກຍູ້ຫັນຮູບແບບເລື່ອນຂັ້ນ. ສ້າງສາກຸ່ມບໍລິສັດກາຍເປັນກຸ່ມບໍລິສັດການກໍ່ສ້າງຂະໜາດໃຫຍ່ທີ່ມີຄວາມສາມາດການລົງທຶນ,ຄວາມສາມາດການກໍ່ສ້າງ,ຄວາມສາມາດຄຸ້ມຄອງທຸລະກິດ,ແລະ ມີໂຄງປະກອບກິດຈະກຳຫຼາຍຂັ້ນລະດັບ,ມີກຳລັງແກ່ງແຍ້ງແບບສາກົນ.

ທ່ານ ລີອີເຜີ ຫົວໜ້າເລຂາທິການປົກຄອງແຂວງຢຸນນານ,ທ່ານ ລີເວີນປີງ ຫົວໜ້າພະແນກເຄຫາສະຖານກໍ່ສ້າງແຂວງ,ທ່ານ ທຳໂປ ຫົວໜ້າພະແນກຄົມມະນາຄົມ ແລະ ຂົນສົ່ງແຂວງ,ທ່ານ ອູ່ນຈຽນ ເລຂາຄະນະພັກຄະນະກຳມະການຊັບສິນທີ່ດິນແຫ່ງຊາດແຂວງ,ທ່ານ ຈາງເມົາກົງ ຫົວໜ້າຫ້ອງການຄົ້ນຄວ້າປົກຄອງແຂວງພາທາງດຳເນີນການຄ້ຳຄູນ.



文 / 楚 然 图 /CFP

# ພູວ້ານໂຟ(ພູພະຫມື່ນອົງ)



## 万佛山

万佛山位于湖南怀化市通道侗族自治县，因主峰老佛顶似弥勒大佛面南盘坐，气势宏伟，俊秀的群峰拱卫其四周，形成诸佛拜祖之景观，还有因万佛山中，悬崖绝壁之上拥有天然“万佛山”三字奇观而得山名之说。

ພູວ້ານໂຟຕັ້ງຢູ່ເມືອງປົກຄອງຕົນເອງເຜົ່າຕົງທົງ ຕາວນະຄອນຮວາຍຮວ້າແຂວງຫູນານ,ຍ້ອນວ່າຈອມພູຫຼັກມີຮູບຄືພະເມດໄຕນັ່ງປິ່ນໜ້າສູ່ທາງໃຕ້,ມີທ່າທາງທີ່ສະຫງ່າງາມ,ແລະ ມີຈອມພູອື່ນໆຫຼາຍແຫ່ງທີ່ສວຍງາມຢູ່ອ້ອມຮອບ,ເຊິ່ງເປັນຮູບວິວໄຫວ້ພະຢ່າງອັດສະຈັນ,ນອກນີ້ຢູ່ເທິງໜ້າຜາອັນໃນພູວ້ານໂຟນັ້ນມີຕົວໜັງສືຈີນ“ວ້ານໂຟສ່ານ”ທີ່ປາກົດຕົວຂຶ້ນແບບທຳມະຊາດ,ຈຶ່ງໄດ້ຕັ້ງຊື່ໃຫ້ເປັນພູວ້ານໂຟ.

ພູວ້ານໂຟຕັ້ງຢູ່ເຂດອ້ານຜ່ານທີ່ຈາກພູພຽງຢຸນນານ-ກຸ້ຍໂຈ່ວໄປສູ່ເຂດພູດອຍນານລິງ,ຍ້ອນການເຄື່ອນໄຫວຂອງເປືອກໜ່ວຍໂລກຍົກຂຶ້ນ ແລະ ການເຊາະຊຶມຈາກນ້ຳ,ກະແສລົມ,ແລະ ການຫັກພັງລົງຍ້ອນນ້ຳໜັກເປັນເວລາຍາວນານ,ຈຶ່ງຈໍ່ຕົວເປັນພູມີທັດຕ່ານເຊຍ(Danxia landform)ທີ່ມີພູດ້ານດຽວເປັນຫຼັກ ແລະ ມີຮູບຊົງແປກປະຫຼາດທີ່ສຸດ.ຢູ່ໃນເຂດນີ້,ພູມີທັດລັກສະນະເປັນກ້ອນ,ຮູບແຫຼມ,ຮູບກຳແພງ,ແລະ ຮູບເສັ້ນແຈກຢາຍຢ່າງເປັນລະບຽບ,ແລະ ເຕົ້າໂຮມກັນໂດຍທຽບຖານຢູ່ໃນບໍລິເວນໃດໜຶ່ງ,ຄວາມຖີ່ກັບຄວາມຫ່າງສະຫຼັບຊັບຊ້ອນກັນ,ເຊິ່ງມີທິວທັດທຳມະຊາດພູມີທັດຕ່ານເຊຍຫຼາຍແຫ່ງ,ເຊັ່ນ,ກຳແພງສີແດງ,ຈອມພູຫີນ,ບ້ານຫີນ,ເສົາຫີນ,ຂົວຫີນ,ຮ່ອມແຄມ,ແລະ ອື່ນໆ.

ຢູ່ໃນເຂດແຫຼ່ງທ່ອງທ່ຽວມີຈອມພູຕ່ານເຊຍແຈກຢາຍຢ່າງເປັນລະບຽບ,ດຸດັ່ງຮູບແຕ້ມແຜ່ນຍາວແບບທຳມະຊາດ.ເມື່ອຂຶ້ນສູ່ຈອມພູຫຼັກຂອງພູວ້ານໂຟ,ກໍ່ເຫັນຈອມພູຕ່າງໆທີ່ມີຄວາມສະຫງ່າຜ່າເຜີຍ.ເມື່ອນອງເບິ່ງໄປທາງຕາເວັນຕົກສ່ຽງໃຕ້ຈະໄດ້ເຫັນຜາຫີນຄືເຕົ່າສັກສິດຢ່າງມີຊີວິດຊີວາ; ເມື່ອນອງໄປທິດເໜືອຈະໄດ້ເຫັນຈອມທຽນ ແລະ ໂງ່ນຫີນຮູບຜົວເມຍ; ເບິ່ງໄປທິດໃຕ້ຈະໄດ້ເຫັນຈອມພູຫຼັກຂອງພູຈອມທັບພ້ອມດ້ວຍຈອມຫອຍໃນແຫຼ່ງທ່ອງທ່ຽວພູຈອມທັບ,ແລະ ຈອມຫຼັກຂອງພູຕ້າໄຈ້ ແລະ ຈອມຫຼັກພູເທວະດາໃນແຫຼ່ງທ່ອງທ່ຽວຖ້ຳເທວະດາ.

ຢູ່ເຂດພູມີທັດຕ່ານເຊຍພູວ້ານໂຟມີລະບົບນ້ຳຢ່າງອຸດົມສົມບູນ,ມີຫ້ວຍນ້ຳສະຫຼັບສັບຊ້ອນກັນ.ຢູ່ໃນບໍລິເວນນີ້,ນ້ຳໃສສະອາດ,ບໍ່ໄດ້ຖືກມົນລະພິດ.ປະລິມານຝົນຕົກຫຼາຍເຮັດໃຫ້ມີແຫຼ່ງນ້ຳຢ່າງພຽງພໍ,ເຊິ່ງໄດ້ອຳນວຍສະພາບແວດລ້ອມທີ່ດີໃຫ້ແກ່ປ່າໄມ້ທຳມະຊາດ ແລະ ຊີວະຊາດທີ່ເປັນແນວພັນອັນລ້ຳຄ່າ.

ແຫຼ່ງທ່ອງທ່ຽວພູວ້ານໂຟຍັງເປັນບ່ອນລີ້ໄພສຳລັບພິດປະເພດດຶກດຳບັນ,ຢູ່ໃນແຫຼ່ງທ່ອງທ່ຽວໄດ້ຮັກສາພືດປະເພດດຶກດຳບັນຫຼາຍຊະນິດ.ຢູ່ໃນແຫຼ່ງທ່ອງທ່ຽວມີຈອມພູສູງເດັ່ນຢ່າງຫຼວງຫຼາຍ,ເຊິ່ງມີຮູບຊົງຫຼາຍຢ່າງຫຼາຍແນວ,ມີພຶກສາຢ່າງຕຶບໜາ,ແລະ ໄດ້ຮັບນາມມະຍົດວ່າ “ກຳແພງເມືອງຈີນສີຂຽວ”.

ພູວ້ານໂຟສູງກວ່າໜ້ານ້ຳທະເລ 629,1 ແມັດ,ມີທ່າທາງທີ່ສະຫງ່າງາມ.ຢູ່ທິດໃຕ້ມີຈອມຜາດ່ຽວຂອງພູຈອມທັບ,ຢູ່ທິດຕາເວັນຕົກມີເຕົ່າສັກສິດ,ແລະ ອ້ອມຮອບດ້ວຍຜ່າຫີນແປກປະຫຼາດຕ່າງໆ.ຮູບວິວຕາເວັນອອກ,ຕາເວັນຕົກ,ກະແສລົມ,ທະເລເມກ,ນ້ຳໝອກ,ນ້ຳຝົນ,ຫິມະຕົກ,ດວງຈັນດວງດາວລ້ວນແຕ່ມີຄວາມສວຍສົດງົດງາມຢ່າງໜ້າອອນຊອນໃຈ,ຢູ່ພູວ້ານໂຟ,ພູຈອມທັບ,ແລະ ຈອມຜາດ່ຽວມີທິວທັດຕາເວັນອອກ,ນ້ຳໝອກລະດູບານໃໝ່ ແລະ ຫິມະຕົກໃນລະດູໜາວທີ່ໜ້າສົນໃຈທີ່ສຸດ.ເມື່ອລະດູໜາວວຽນມາເຖິງໃນທຸກປີ,ອຸນຫະພູມຫຼຸດຕ່ຳລົງ,ໃນຕົ້ນລະດູໜາວກໍ່ຈະໄດ້ເຫັນສີເງິນເຕັມລົ້ນໜ້າດິນ,ຢູ່ປາຍກິ່ງໄມ້ເຕັມໄປດ້ວຍເຂັມນ້ຳກ້ານ;ເມື່ອຮອດໄລຍະທີ່ໜາວທີ່ສຸດ,ກໍ່ເໝືອນດັ່ງພາບວິວຢູ່ພາກເໜືອຂອງຈີນ,ເຊິ່ງເປັນດິນແດນທີ່ເຕັມໄປດ້ວຍຫິມະທັງໝົດ.

ແຫຼ່ງທ່ອງທ່ຽວພູວ້ານໂຟມີດິນຟ້າອາກາດທີ່ດີ,ແລະມີປະລິມານນ້ຳຝົນຢ່າງພຽງພໍ,ນອກຈາກມີຈຸດພິເສດທີ່ວ່າ“ແປກປະຫຼາດ,ສູງຊັນ,ອອນຊອນ ແລະ ສວຍງາມ”ແລ້ວ,ຍັງມີທິວທັດປ່າໄມ້ລະຫວ່າງຮ່ອມພູ,ແລະ ທິວທັດລະບົບນິເວດສີຂຽວທີ່ມີສວນນາອ້ອມຮອບ.ເມື່ອເດີນທາງຕາມທາງຫຼວງຂັ້ນແຂວງ S241,ຈາກເຊັ້ຍຊ່ຽງຮອດຊ່ານມູຊຽວປະມານ 40 ກວ່າກິໂລແມັດ,ຈະໄດ້ເຫັນສວນນາແຜ່ນໃຫຍ່,ປ່າໄມ້ຕົ້ນຢາງທີ່ມີສີສັນປ່ຽນແປງຕາມລະດູການ,ປະສົມປະສານກັບພູຕ່ານເຊຍທີ່ຢຽດຍາວ,ດຸດັ່ງລະບຽງຮູບແຕ້ມທີ່ສວຍງາມ.ເມື່ອໄປທ່ຽວຊົມດ້ວຍຕົນເອງແລ້ວ,ຈະໄດ້ສຳຜັດກັບຄວາມສະຫງົບຂອງສວນນາ,ເປັນທາງເລືອກທີ່ດີສຳລັບການພັກຜ່ອນຢ່ອນໃຈ ແລະ ການທ່ອງທ່ຽວຢູ່ເຂດຊົນນະບົດ.



图 /CFP

# ຫໍພິພິທະພັນຊຽງໄຮ: ໂຮງຫໍທີ່ເຕົ້າໂຮມປະຫວັດສາດ ແລະ ອະລິຍະທຳ

## 上海博物馆 凝聚历史与文明的殿堂

在上海的市中心，坐落着一幢形如铜鼎、暗合中国天圆地方宇宙观的建筑——上海博物馆。

始建于 1952 年的上海博物馆，是世界闻名的中国古代艺术博物馆之一。位于上海人民广场的新馆，则建成于 1996 年。这幢建筑地面展览层有四层，拥有馆藏文物百余万件，其中珍贵文物 14 万件。藏品涵盖青铜器、陶瓷器、书法、绘画、玉牙器、竹木漆器、甲骨、玺印、钱币、少数民族工艺等 21 个门类。

ຫໍພິພິທະພັນຊຽງໄຮຕັ້ງຢູ່ໃຈກາງນະຄອນຊຽງໄຮ ເປັນສິ່ງປູກສ້າງຮູບແບບຄືໝໍ້ກະທະທອງ(ມີ 3 ຂາ)ຄ້າຍຄືສະຖາປັດຕະຍະກຳວົງມົນອະວະກາດຂອງຈີນ.

ຫໍພິພິທະພັນຊຽງໄຮທີ່ເລີ່ມສ້າງແຕ່ປີ 1952 ແມ່ນ 1 ໃນຫໍພິພິຕະພັນສິລະປະກຳບູຮານຈີນທີ່ມີຊື່ສຽງໂດ່ງດັງໃນໂລກ.ຫໍໃໝ່ທີ່ຕັ້ງຢູ່ສະໜາມຫລວງປະຊາຊົນຊຽງໄຮນັ້ນໄດ້ສ້າງຂຶ້ນໃນປີ 1996.ຊັ້ນວາງສະແດງໃນໜ້າດິນສິ່ງປູກສ້າງຫລັງນີ້ມີ 4 ຊັ້ນ,ເຊິ່ງໄດ້ມີວັດຖຸບູຮານສະສົມໄວ້ໃນຫໍມີ 1 ລ້ານກວ່າລາຍການ,ໃນນັ້ນ,ວັດຖຸບູຮານທີ່ປະເສີດເລີດລ້ຳ 140 ພັນກວ່າລາຍການ.ວັດຖຸບູຮານໃນຫໍລວມທັງມີເຄື່ອງທອງສຳລິດ,ເຄື່ອງເຄືອບເຄື່ອງປັ້ນດິນດາກຂາວ,ສິລະປະການຂຽນໜັງສືຈີນ,ພາບແຕ້ມ,ເຄື່ອງຫຍົກງ່າຊ້າງ,ເຄື່ອງໄມ້ໄຜ່ ແລະ ເຄື່ອງນ້ຳສີ,ກະດູກປາຝາ,ກາປະທັບ,ເງິນທອງ,ຫັດຖະກຳຊົນເຜົ່າເປັນຕົ້ນ 21 ໝວດປະເພດ.

ການວາງສະແດງປະຈຳ:

ຖືເອົາການວາງສະແດງເຄື່ອງທອງສຳລິດ,ເຄື່ອງປັ້ນດິນ ແລະ ເຄື່ອງປັ້ນດິນດາກຂາວເປັນສີສັນພິເສດ.

ບໍ່ວ່າເຂົ້າປະຕູໃຕ້ຫຼືປະຕູເໜືອສູ່ຫໍພິພິຕະພັນຊຽງໄຮກໍຕາມຜູ້ຊົມກໍ່ສາມາດເບິ່ງເຫັນພາກສ່ວນວາງສະແດງທີ່ເປັນຫົວກະທິສຸດຂອງຫໍດັ່ງກ່າວນີ້ໂດຍໄວໄດ້,ຫໍທອງສຳລິດບູຮານຈີນ ແລະ ຫໍປະຕິມະກຳບູຮານຈີນທີ່ຕັ້ງຢູ່ຊັ້ນ 1 ແລະ ຫໍວາງສະແດງທີ 1 ໃນການແລກປ່ຽນກັນຊົ່ວຄາວນັ້ນໄດ້.ໃນນັ້ນ,ຜົນງານປະຕິມະກຳ 120 ກວ່າລາຍການໃນຫໍປະຕິມະກຳບູຮານຈີນໄດ້ວາງສະແດງໃຫ້ເຫັນການປ່ຽນແປງ ແລະ ການພັດທະນາສິລະປະປະຕິມະກຳຈີນສະໄໝຈ້ານກົວເຖິງລາຊະວົງໝິງຊິງ,ຜົນງານບົດປະພັນເປັນຈຳນວນຫຼວງຫຼາຍແມ່ນປະຕິມະກຳສາດສະໜາພຸດ.

ການວາງສະແດງທີ່ສຳຄັນໃນຫໍຊຽງໄຮແມ່ນຫໍທອງສຳລິດບູຮານຈີນ.ບ່ອນນີ້ໄດ້ວາງສະແດງປະຈຳປີແມ່ນທອງສຳລິດທີ່ເປັນຂອງປະເສີດ 400 ກວ່າລາຍການ.ເມື່ອເຂົ້າປະຕູແລ້ວ,ກໍແມ່ນເຄື່ອງທອງສຳລິດອັນໜຶ່ງໃນໄລຍະເລີ່ມເກີດຂຶ້ນ—ຂວານຫຼຽມລາຍ(ອາວຸດແນວໜຶ່ງ)ທ້າຍລາຊະວົງເຊຍ.ຍ່າງໄປລະຍະໜຶ່ງ,ແມ່ນເຄື່ອງທອງສຳລິດທີ່ເປັນໂລແມນຕິກລາຍໜຶ່ງ.ເອີ້ນວ່າຈານຈຽງຈີຈົ່ງ,ຫລໍ່ຫລອມແຕ່ໄລຍະຕົ້ນສະໄໝຊຸນຊຽວ.

"ນີ້ແມ່ນພາຊະນະໃສ່ນ້ຳອັນໜຶ່ງຂອງນາຍໃຫຍ່ຜູ້ໜຶ່ງຫລໍ່ໃຫ້ເມຍ,ສຳລັບລ້າງມື,ທ່ານເບິ່ງດູ,ມີ 3 ຕີນເສືອຕົວນ້ອຍໆໃນພາຊະນະ,ລ້ວນແຕ່ໂຕສັດນ້ອຍທຸກຊະນິດເຊັ່ນ:ເປັດ,ປາ,ຄັນຄາກ,ເປັນຕົ້ນ.ປ່ອຍນ້ຳເຂົ້າໃນ,ຈະໝູນວຽນກັບທີ່,ມີໄຫວພິກແທ້."ທ.ເຈີນອຸ່ນເລີຍ ຜູ້ອາສາສະໝັກໃນຫໍພິພິຕະພັນຊຽງໄຮມີຄວາມຮູ້ສຶກວ່າ,"ດຽວນີ້ກົງານຄືຈົ່ງຊີ,ບໍ່ຄິດກໍ່ຮູ້ວ່າເວລານັ້ນຍິ່ງມີຄວາມສວຍງາມຫຼາຍແທ້ໆ."



ຫໍພິພິຕະພັນຊຽງໄຮເປີດໃຫ້ນັກທ່ອງທ່ຽວຈີນ ແລະ ຕ່າງປະເທດສະເຫວີຍງານລ້ຽງດ້ານວັດທະນະທຳທີ່ເປັນມູນເຊື້ອຈີນໂດຍບໍ່ເສຍຄ່າເກືອບ 8 ປີ.
上海博物馆免费开放已近 8 年 中外游客尽享中国传统文化盛宴

ການວາງສະແດງໃນຊັ້ນ 2 ຖືເອົາເຄື່ອງປັ້ນດິນ ແລະ ເຄື່ອງປັ້ນດິນດາກຂາວເປັນຫຼັກ,ທາງເທິງເກີດມາຈາກຍຸກສະໄໝຫີນໃໝ່ທາງຫລັງຮອດທ້າຍລາຊະວົງຊິງ,ປະຫວັດເຄື່ອງປັ້ນດິນດາກຂາວເປັນເວລາ 8000 ປີໄດ້ເລືອກເອົາຫົວກະທິເຄື່ອງປັ້ນດິນ 500 ກວ່າລາຍ,ເຕົ້າໂຮມຜົນງານດີເດັ່ນອອກຈາກເຕົາຊື່ສຽງໃນປະຫວັດສາດສະໄໝຕ່າງໆໄດ້ເລົ່ານິທານເທບນິຍາຍແຫ່ງດິນກັບໄຟຕອນໜຶ່ງ.ຍ່າງເຂົ້າສູ່ຊັ້ນ 2 ແມ່ນຫໍເຄື່ອງປັ້ນດິນ ແລະ ເຄື່ອງປັ້ນດິນດາກຂາວບູຮານຈີນ,ນອກຈາກຂວດພົ້ນຫລຽມ,ຂວດໃສ່ນຳເອົາເອງງວດໜຶ່ງໃນໄລຍະວັດທະນະທຳຢາງຊາວຈະເຫັນໄດ້ພາຊະນະເຄື່ອງປັ້ນດິນດາກຂາວລາຊະວົງໝິງໂດຍໄວໄດ້.ມີຕຶກຄອຍດິນປັ້ນເຄືອບສີຂຽວຫລັງໜຶ່ງ,ຕຶກມີຄວາມສູງ 3 ຊັ້ນ .ຄອກໝູ,ຫ້ອງນ້ຳ,ທະນູທີ່ວາງຢູ່ 4 ແຈ,ແລະ ອື່ນໆ,ໄດ້ສະແດງໃຫ້ເຖິງອົກເຖິງໃຈ.ພາຊະນະຄືຂວດລາຍເຄືອບສີຄາມບູຮານຂອງລາຊະວົງຊາງ,ແມ່ນ 1 ໃນເຄື່ອງປັ້ນດິນດາກຂາວດີທີ່ສຸດທີ່ມີຮູບຮ່າງງາມທີ່ສຸດໃນເຄື່ອງປັ້ນດິນດາກຂາວປະຖົມປະຖານໃນທົ່ວໂລກ.ຜູ້ຊົມທັງຫຼາຍຢ່າພາດເວລານີ້ເນີ້!ຕໍ່ມາກໍ່ແມ່ນ"ຖັງຊານໄຊ (tangsancai)ທີ່ມີຄວາມ



ພາບນອກຫໍພິພິຕະພັນຊຽງໄຮ
上海博物馆外景

ຕູ້ກຣົບອັນຈຳນວນໜຶ່ງ."

ແຫ່ງນີ້ມີຖ້ວຍປັ້ນດິນປັ້ນກັບສີເຫຼືອງແກ່,ຄາຍຄືຖ້ວຍໄໜ້ໜ້ອຍໜຶ່ງທີ່ມີຊີວິດຊີວາ,ມີຈານປັ້ນດິນດາກຂາວອອກຈາກເຕົາ ແລະ ພາຊະນະລ້າງມືແມ່ນ 1 ໃນ 5 ເຕົ້າໃຫຍ່ທີ່ມີຊື່ສຽງ ແລະ ເປັນຄວາມທະນົງໃຈຂອງຫໍພິພິຕະພັນຊຽງໄຮ;ຍັງມີ 1 ໃນຫໍ"ຂອງປະເສີດປະຈຳຫໍພິພິຕະພັນ"ແລະ ມີຂວດໝາກຄຳປອງລາຍໝາກຄາຍສີເຫຼືອງອ່ອນຈີ້ນເຕີເຈີນເຈົ້າຊີວິດຢົງເຈີນຮວາງເຕທີ່ເປັນມູນຄ່າ 41 ລ້ານ 5 ແສນ ຢວນຮົງກົງຍັງມີເຄື່ອງໃຊ້ປາກກາ ແລະ ນ້ຳເມິກສີໝາກຖົ່ວຍັກຂອງຄັງຊີຮວາງເຕ,ສີດັ່ງກ່າວນີ້ຜະລິດອອກໄດ້ຍາກທີ່ສຸດ...ທຸກໆຢ່າງກໍ່ເປັນສິ່ງປະເສີດໝົດ,ງາມນັບບໍ່ຖ້ວນ.

ຫໍພິພິຕະພັນຊັ້ນທີ 3 ຖືເອົາພາບແຕ້ມ,ກາປະທັບ,ສິລະປະການຂຽນໜັງສືຈີນເປັນຫຼັກ,ໃນນັ້ນ,ຫ້ອນໂຮມພາບແຕ້ມລາຍມືແທ້ຂອງນັກແຕ້ມພາບທີ່ມີຊື່ສຽງໃນລາຊະວົງຖັງສົງຢວນໝິງຊິງຂອງຫໍແຕ້ມພາບໃນສະໄໝບູຮານຂອງຈີນ,ຂອງລ້ຳຄ່າພາບແຕ້ມ 100 ກວ່າໃບເຕົ້າໂຮມຢູ່ນຳກັນ.ຫໍກາປະທັບສະໄໝບູຮານຂອງຈີນໄດ້ຄັດເລືອກເອົາຜະລິດຕະພັນ 500 ຢ່າງມາວາງສະແດງ,ລ້ວນແຕ່ເປັນຕົວແທນພາບພົດເອກະລັກສະເພາະຂອງຍຸກສະໄໝນັ້ນ.ຫໍແຕ້ມພາບໃນສະໄໝບູຮານຂອງຈີນໂດຍໜັງສືກະດູກປາຟາ,ໜັງສືຈີນເປັນລິເລີ່ມ,ໄດ້ມີແປ້ນໄມ້ໄຜ່,ຄວັດຫີນ,ລວມທັງລາຍມືຕົວຂຽນຂອງທ່ານ 2 ຫວາງ (ຫວາງຊີຈື,ຫວາງຊຽນຈືເຊິ່ງເປັນມະຫານັກຂຽນສິລະປະຂຽນໜັງສືຈີນໃນລາຊະວົງຕົງຈິ່ງ).

ຊັ້ນ 4 ມີການວາງສະແດງທີ່ຍອດຢ້ຽມເຊັ່ນກັນ.ແຫ່ງນີ້ໄດ້ເຕົ້າໂຮມມີຫໍສິລະປະຫັດຖະກຳຊົນຊາດສ່ວນໜ້ອຍຂອງຈີນ,ຫໍຢົກສະໄໝບູຮານຂອງຈີນ,ຫໍເຟີນີເຈີລາຊະວົງໝິງຊິງຂອງຈີນ,ຫໍເງິນອັດສະໄໝບູຮານຂອງຈີນ ແລະ ຫ້ອງວາງສະແດງພິເສດເງິນອັດບູຮານຂອງຈີນ



ແລະ ອາຊີໃນເສັ້ນທາງສາຍໄໝ ແລະ ອື່ນໆ.

ກາງວາງສະແດງສະເພາະ:

ການກະກຽມຢ່າງລະອຽດ,ຈະສາມາດພາໃຫ້ດັງສະເທືອນເລື່ອນລັ່ນໄດ້.

ການວາງສະແດງສະເພາະ,ກໍແມ່ນສີສັນຂອງຫໍພິພິຕະພັນຊຽງໄຮເຊັ່ນກັນ.ການວາງສະແດງສະເພາະຂອງຫໍພິພິຕະພັນຊຽງໄຮມີຊື່ສຽງໂດ່ງດັງ,ຍ້ອນວ່າ,ການວາງສະແດງສະເພາະທຸກຄັ້ງລ້ວນແຕ່ຜ່ານການກະກຽມໄວ້ຢ່າງລະອຽດລະອໍ,ໄດ້ມີການຄົ້ນຫາດ້ານວິຊາການດົນນານ ແລະ ຄວາມຈິງໃຈເຕັມທີ່ຕໍ່ຜູ້ຊົມຂອງຝ່າຍເຈົ້າພາບ.ຍ້ອນວ່າ,ການວາງສະແດງສະເພາະທຸກຄັ້ງຂອງຫໍພິພິຕະພັນຊຽງໄຮລ້ວນແຕ່ເຮັດໃຫ້ທົ່ວເມືອງຊຽງໄຮດັງສະເທືອນເລື່ອນລັ່ນໄດ້.

ການວາງສະແດງສະເພາະທຳມະດາຈັດວາງຢູ່ໃນຫໍສະແດງຊົ່ວຄາວທຸກຊັ້ນຂອງຫໍພິພິຕະພັນຊຽງໄຮ.ປັດຈຸບັນນີ້,ງານວາງສະແດງເຄື່ອງປັ້ນດິນດາກຂາວລາຊະວົງໝິງຊິນໃນຫໍພິພິຕະພັນຊຽງໄຮ,ສະຖາບັນຫໍພິພິຕະພັນກູກົງຂອງຫໍວາງສະແດງທີ 2 ຊັ້ນ 2 ເລີ່ມຕົ້ນແຕ່ວັນທີ 7 ສິງຫາ,ຈົນຮອດວັນທີ 4 ເດືອນ 1 ປີ 2016,ຜະລິດຕະພັນວາງສະແດງແມ່ນຄັດເລືອກເອົາຈາກຂອງລ້ຳຄ່າໃນສະຖາບັນຫໍພິພິຕະພັນກູກົງ ແລະ ຫໍພິພິຕະພັນຊຽງໄຮ,ເຊັ່ນມີເຄື່ອງປັ້ນດິນດາກຂາວທີ່ເປັນການຄ້າໃນສະໄໝລາຊະວົງໝິງຊິນ 160 ກວ່າລາຍການ.ຈຸດປະສົງການວາງສະແດງຄັ້ງນີ້ແມ່ນສະແດງໃຫ້ເຫັນສະພາບການຂອງເຄື່ອງປັ້ນດິນດາກຂາວຈີນສົ່ງອອກຈຳໜ່າຍຢູ່ຕ່າງປະເທດ.ເຄື່ອງປັ້ນດິນດາກຂາວທີ່ເປັນການຄ້າໃນສະໄໝລາຊະວົງໝິງຊິນທີ່ວາງສະແດງນັ້ນທັງມີພາ



ຫໍພິພິຕະພັນຊຽງໄຮ: ກວດລາຍສີແດງເຄືອບດອກຊ້ຳເຕົາຈີນເຕີເຈີນ
上海博物馆，景德镇窑青花釉里红缠枝花纹瓶

ຊະນະສືບທອດມາຈາກຟີລິບປິນ,ຊີລີ ແລະ ເອີລົບ ແລະ ມີເຄື່ອງພາຊະນະຍີ່ປຸ່ນສະເພາະຈ່ອງເຜົ່າ,ຍັງມີເຄື່ອງປັ້ນດິນດາກຂາວທີ່ລ້ຳຄ່າທີ່ເອົາອອກມາຈາກກຳປັ່ນທີ່ຄວ່ຳຢູ່ທະເລ.

ນອກເໜືອຈາກນອນຢູ່ໃນຄັງປະເສີດອະລິຍະທຳປະຫວັດສາດມວນມະນຸດກໍບໍ່ຫລົງລືມສະບາຍອົກສະບາຍໃຈໃນຊົ່ວຂະນະ,ຍັງມີຄຳເຕືອນນ້ອຍໜຶ່ງ,ເມື່ອຊົມເບິ່ງໝົດມືສິ້ນສຸດລົງແລ້ວ,ຈະໄປເລາະເບິ່ງຮ້ານສິລະປະກຳໃນຊັ້ນທີ 1 ຂອງຫໍພິພິຕະພັນຊຽງໄຮ,ແຫ່ງນີ້ໄດ້ມີສະລະບານຮູບພາບວັດຖຸບູຮານຂະໜາດໃຫຍ່ທຸກປະເພດ ແລະ ຜະລິດຕະພັນຜະລິດອອກຈາກວັດຖຸບູຮານເປັນຕົ້ນ.ການອອກແບບງາມຕາທີ່ສຸດ,ໜ້າຊື້ອັນໜຶ່ງສອງອັນກັບບ້ານ.

文/楚然 图/CFP




ສະຖານທີ່ຈັດງານສະເຫຼີມສະຫຼອງການສ້າງຕັ້ງວິທະຍາຄານກິລາຊຽງໄຮຄົບຮອບ 60 ປີ
上海体育学院建校六十周年庆典大会现场

# ວິທະຍາໄລກິລາຊຽງໄຮ

## 上海体育学院

上海体育学院建于 1952 年，是新中国成立后创建最早的体育高等学府。经过六十年的建设与发展，学校已成为一所以体育学为特色，具有教育学、文学、管理学 3 个主要学科门类的多科性大学，形成了涵盖本科、硕士、博士在内的完整办学层次。

ວິທະຍາໄລກິລາຊຽງໄຮສ້າງຕັ້ງຂຶ້ນໃນປີ 1952, ແມ່ນໂຮງຮຽນຊັ້ນສູງດ້ານກາຍະສຶກສາທີ່ສ້າງຂຶ້ນກ່ອນໝູ່ຫຼັງການສະຖາປະນາປະເທດຈີນໃໝ່. ຫຼັງຈາກການກໍ່ສ້າງພັດທະນາເປັນເວລາ 60 ປີ, ໂຮງຮຽນໄດ້ກາຍເປັນມະຫາວິທະຍາໄລຫຼາຍວິຊາທີ່ມີກາຍະສຶກສາເປັນສີສັນພິເສດ,ແລະ ມີ 3 ປະເພດວິຊາຕົ້ນຕໍ,ຄື:ສຶກສາສາດ, ວັນນະຄະດີ,ແລະ ການບໍລິຫານ,ເຊິ່ງໄດ້ກວມລວມການສຶກສາປະລິນຍາຕີ,ປະລິນຍາໂທ ແລະ ປະລິນຍາເອກຢ່າງຄົບຖ້ວນ.

ໂຮງຮຽນໄດ້ສ້າງລະບົບຮັບປະກັນຄຸນນະພາບການສຶກສາ,ດຳເນີນການປະເມີນຄຸນນະພາບການສຶກສາພາຍໃນໂຮງຮຽນຢ່າງເປັນປົກກະຕິ,ໃນຊຸມປີມໍ່ໆມານີ້, ໂດຍປະຕິບັດຕາມຄວາມຮຽກຮ້ອງທີ່ບຳລຸງສ້າງຜູ້ມີແນວຄິດປະດິດສ້າງ,ຄຸນນະພາບແຫ່ງການບຳລຸງສ້າງຜູ້ມີຄວາມຮູ້ຄວາມສາມາດໄດ້ຍົກສູງຂຶ້ນເລື້ອຍໆ,ໄດ້ສ້າງ“ສະຖາບັນຢຸ້ນຮຸ້ຍ”ທີ່ເປັນອົງການສຶກສາທີ່ອົບຮົມຜູ້ມີແນວຄິດປະດິດສ້າງທີ່ດີເດັ່ນ,ທັງຊອກຄົ້ນຮູບການບຳລຸງສ້າງຜູ້ມີຄວາມຮູ້ຄວາມສາມາດທີ່ມີແນວຄິດປະດິດສ້າງດ້ານກາຍະສຶກສາ.

ໂຮງຮຽນໄດ້ຍຶດໝັ້ນການກໍ່ສ້າງວິຊາການກັບຄວາມຕ້ອງການດ້ານການພັດທະນາຂອງສັງຄົມເຊື່ອມໂຍງເຂົ້າກັນ,ຍຶດໝັ້ນການຄົ້ນຄວ້າທິດສະດີພື້ນຖານກັບການບໍລິການປະດິດສ້າງໃໝ່ດ້ານວິທະຍາສາດເຕັກນິກເຊື່ອມໂຍງເຂົ້າກັນ,ຍຶດໝັ້ນການຮ່ວມມືພາຍໃນປະເທດກັບການຮ່ວມມືກັບສາກົນເຊື່ອມໂຍງເຂົ້າກັນ,ຍຶດໝັ້ນຍົກລະດັບຄວາມສາມາດດ້ານການຄົ້ນຄວ້າວິທະຍາສາດວິຊາການໃນການຮັບໃຊ້ຍຸດທະສາດແຫ່ງຊາດ ແລະ ການພັດທະນາເສດຖະກິດສັງຄົມຂອງທ້ອງຖິ່ນ.ໃນງານກິລາໂອລິມປິກທີ່ຈັດຂຶ້ນຢູ່ປັກກິ່ງ ແລະ ລອນດອນນັ້ນ,ໃນຈຳນວນຫຼຽນຄຳຂອງຄະນະຜູ້ແທນຈີນນັ້ນ,ຢ່າງໜ້ອຍມີຫຼາຍກວ່າ 10 ຫຼຽນແມ່ນມີການພົວພັນໂດຍກົງກັບການຄົ້ນຄວ້າວິທະຍາສາດ ແລະ ການບໍລິການດ້ານວິທະຍາສາດເຕັກນິກຂອງໂຮງຮຽນ, ໂຮງຮຽນຍັງໄດ້ຮັບລາງວັນທີ 1 ໜຶ່ງລາງວັນດ້ານການບໍລິການປະດິດສ້າງວິທະຍາສາດເຕັກນິກຂອງງານກິລາໂອລິມປິກປັກກິ່ງ.

ໃນຊຸມປີມໍ່ໆມານີ້, ໂຮງຮຽນໄດ້ປະຕິບັດຕາມຫຼັກການລວມທີ່“ສ້າງການສຶກສາໃຫ້ມີສີສັນພິເສດ,ສ້າງການສຶກສາໃຫ້ມີລະດັບສູງ”,ຕັ້ງໜ້າຊຸກຍູ້ການກໍ່ສ້າງທາງເນື້ອໃນ,ເຊິ່ງໄດ້ຮັບໝາກຜົນພິເສດຈຳນວນໜຶ່ງແບບບໍ່ມີບ່ອນອື່ນເຮັດໄດ້ພາຍໃນປະເທດ,ໄດ້ນຳໜ້າສ້າງຕັ້ງສະຖາບັນປິ່ງປົວທີ່ມີແຕ່ແຫ່ງດຽວພາຍໃນປະເທດຈີນ;ໄດ້ນຳໜ້າສ້າງວາລະສານວິຊາການກາຍະສຶກສາສະບັບພາສາອັງກິດ《Journal of Sport and Health Science》ທີ່ຈຳໜ່າຍໃນສາກົນ,ເຊິ່ງເປັນພຽງສະບັບໜຶ່ງດຽວພາຍໃນປະເທດຈີນ;ນຳໜ້າສ້າງ“ສວນສາທິດວິທະຍາສາດເຕັກນິກກາຍະສຶກສາ”ທີ່ມີພຽງແຕ່ແຫ່ງດຽວພາຍໃນປະເທດ ແລະ ຕັ້ງຊື່ໂດຍກົມໃຫຍ່ກິລາແຫ່ງຊາດຈີນ;ໄດ້ນຳໜ້າສ້າງຫໍພິພິທະພັນອູຊູຈີນທີ່ເປັນພຽງແຫ່ງດຽວພາຍໃນປະເທດຈີນ.

ໃນດ້ານກິລາປະເພດແຂ່ງຂັນນັ້ນ, ໂຮງຮຽນເຄີຍໄດ້ຮັບຫຼຽນຄຳ 2 ຫຼຽນ ແລະ ຫຼຽນທອງ 3 ຫຼຽນໃນງານກິລາໂອລິມປິກ,ຊີງໄດ້ 25 ຫຼຽນຄຳໃນງານແຂ່ງຂັນຊີງແຊມໂລກ,ໄດ້ຮັບ 38 ຫຼຽນຄຳໃນງານອາຊີເກມ,ແລະງານແຂ່ງຂັນຊີງແຊມອາຊີ;ມີ 3 ຄົນເຄີຍທຳລາຍສະຖິຕິໂລກ 3 ເທື່ອ,2 ຄົນທຳລາຍສະຖິຕິອາຊີ 12 ເທື່ອ;ເຄີຍຊີງໄດ້ 15 ຫຼຽນຄຳໃຫ້ນະຄອນຊຽງໄຮໃນງານມະຫະກຳກິລາທົ່ວປະເທດຈີນ.ແລະ ໄດ້ອົບຮົມຄູຝຶກຈຳນວນໜຶ່ງທີ່ມີຊື່ສຽງໃນສາກົນ.

ໃນຖານະເປັນໂຮງຮຽນທີ່ມີຄຸນວຸດທິຮັບນັກສຶກສາທີ່ໄດ້ທຶນສຶກສາລັດຖະບານຈີນ,ແລະ ໂຮງຮຽນຈຸດທົດລອງທີ່ສາມາດຮັບສະໝັກນັກສຶກສາທີ່ໄດ້ຮັບທຶນສຶກສາລັດຖະບານຈີນເຊິ່ງກຳນົດໂດຍກະຊວງສຶກສາທິການຈີນ(ເປັນພຽງແຫ່ງດຽວໃນໂຮງຮຽນກາຍະສຶກສາທົ່ວປະເທດຈີນ),ໄດ້ອົບຮົມນັກສຶກສາຫຼັກສູດສົມບູນ 260 ກວ່າຄົນໃຫ້ແກ່ 16 ປະເທດ,ເຊັ່ນ,ອາເມລິກາ,ຝຣັ່ງ,ເຢຍລະມັນ,ອີຕາລີ,ອົສຕຼາລີ,ການາດາ,ຍີ່ປຸ່ນ,ສ.ເກົາຫຼີ ແລະ ອື່ນໆ.ໄດ້ສ້າງສາຍພົວພັນການຮ່ວມມືກັບໂຮງຮຽນຊັ້ນສູງ 50 ກວ່າແຫ່ງຂອງ 18 ປະເທດ ແລະ ເຂດແຄວ້ນ. ມີສູນຄົ້ນຄວ້າການຮ່ວມມືດ້ານກາຍະສຶກສາໂຮງຮຽນຈີນ-ອາເມລິກາ 1 ແຫ່ງ,ສູນຄົ້ນຄວ້າການຮ່ວມມືດ້ານກາຍະສຶກສາແບບປຽບທຽບຈີນ-ເອີລົບແຫ່ງໜຶ່ງ.ໄດ້ເຊື້ອເຊີນນັກວິຊາການ ແລະ ຜູ້ຊ່ຽວຊານທີ່ມີຊື່ສຽງໃນສາກົນ,ເຊັ່ນ,ທ່ານໂອຈີ,ທູດພິເສດດ້ານກິລາຂອງທ່ານໂກຟີອານນານ,ອະດີດເລຂາທິການໃຫຍ່ສະຫະປະຊາຊາດ ແລະ ທ່ານອື່ນໆມາເປັນສາສະດາຈານກິຕິມະສັກຫຼືສາສະດາຈານຮັບເຊີນ;ຖືການຄົ້ນຄວ້າໂຄງການເປັນເວທີ,ໄດ້ເຊື້ອເຊີນອາຈານຄົນຕ່າງປະເທດຜູ້ມີຊື່ສຽງ 2 ທ່ານຢ່າງເປັນທາງການ,ຮ່ວມກັນດຳເນີນການຮ່ວມມືຄົ້ນຄວ້າ ແລະ ການອົບຮົມຜູ້ມີຄວາມຮູ້ຄວາມສາມາດ.

ໃນຕໍ່ໜ້ານີ້, ໂຮງຮຽນຈະສືບຕໍ່ປະຕິບັດຕາມແນວຄວາມຄິດດຳເນີນການສຶກສາທີ່“ຮ່າງກາຍກັບຈິດໃຈເຊື່ອມໂຍງເປັນເອກະພາບກັນ,ຄຸນສົມບັດ ແລະ ເຕັກນິກເຕີບໂຕພ້ອມກັນ,ຮ່ຳຮຽນວັນນະຄະດີກັບວິທະຍາສາດພ້ອມກັນ,ຮັບໃຊ້ສັງຄົມ”,ຍຶດໝັ້ນຖືການອົບຮົມນັກສຶກສາເປັນພື້ນຖານ,ສຸມໃສ່ການພັດທະນາໝົດຊີວິດຂອງຄູອາຈານ ແລະ ນັກສຶກສາ,ຖືການປະຕິຮູບ ແລະ ການປະດິດສ້າງໃໝ່ເປັນແຮງຊຸກຍູ້,ຖືການຍົກສູງຄຸນນະພາບເປັນໃຈກາງ,ລົງເລິກການກໍ່ສ້າງດ້ານເນື້ອໃນ,ຊຸກຍູ້ການພັດທະນາແບບຍືນຍົງ ແລະ ຮອບດ້ານຂອງໂຮງຮຽນຢູ່ຈຸດເລີ່ມຕົ້ນໃໝ່ດ້ານປະຫວັດສາດ.

文 / 楚 然 图 / 新华社

# ບຸນລ້າງຕົມເຜົ່າຢ້າວທີ່ມ່ວນຊື່ນ

## 欢乐的洗泥节

湖南江永县兰溪瑶族乡黄家村勾蓝瑶寨是中国的历史文化名村之一，这里的勾蓝瑶在每年的农历五月十三，都会举行盛大的有着千年传统的洗泥节。



ໝູ່ບ້ານເຜົ່າຢ້າວໂກ່ວລານບ້ານຫວງເຈ່ຍຕາແສງເຜົ່າຢ້າວລານຊີ່ເມືອງຈ່ຽງຢົ່ງແຂວງຫູນານເປັນບ້ານວັດທະນະທຳປະຫວັດສາດທີ່ມີຊື່ສຽງຂອງຈີນ.ໃນມື້ຂຶ້ນ 13 ຄ່ຳເດືອນ 5 ຕາມຈັນທະຄະຕິຈີນທຸກໆປີ,ຢູ່ແຫ່ງນີ້ເຜົ່າຢ້າວໂກ່ວລານຈະຈັດບຸນລ້າງຕົມ,ບຸນປະເພນີທີ່ສືບທອດກັນມາເປັນເວລາພັນປີຢ່າງໃຫຍ່ໂຕມະໂຫລານ.

ຕາມເລົ່າລືກັນວ່າ,ແຕ່ກີ້ແຕ່ກ່ອນ,ດິນໜ້າຂອງປະຊາຊົນເຜົ່າຢ້າວໂກ່ວລານຫ່າງຈາກໝູ່ບ້ານປະມານ 5 ກິໂລແມັດ,ໃນໄລຍະຫຍຸ້ງນຳວຽກໄຮ່ການນາ,ຜູ້ຊາຍກໍ່ຈະອາໄສຢູ່ໃນເຮືອນຍົກພື້ນສອງຊັ້ນທີ່ປຸກຂຶ້ນຢູ່ໃກ້ດິນນາຂອງຄອບຄົວຕົນເອງ,ເຮືອນແບບນີ້ບໍ່ມີຝາຂັ້ນໄວ້,ຕຽງແມ່ນຕິດກັນ; ຢູ່ຊັ້ນເທິງແມ່ນບ່ອນຢູ່ອາໄສ ແລະ ບ່ອນແຕ່ງກິນ,ຢູ່ຊັ້ນລຸ່ມແມ່ນບ່ອນລ້ຽງງົວຄວາຍ.ໃນເດືອນ 5 ຕາມຈັນທະຄະຕິຈີນໃນທຸກປີ,ຫຼັງຈາກສິ້ນສຸດວຽກໄຮ່ການນາໄລຍະລະດູໃບໄມ້ປົ່ງແລ້ວ,ຜູ້ຊາຍກໍ່ຈະລ້າງຕົມຢູ່ເທິງຕີນໃຫ້ສະອາດ,ແລະ ກັບເມືອພັກຜ່ອນຢູ່ບ້ານ.ເຂົາເຈົ້າຈະຍ້າຍເຄື່ອງມືປູກຝັງ,ຈູງຄວາຍໄຖນາ,ລ້າງຕົມຢູ່ເທິງຮ່າງກາຍໃຫ້ສະອາດ,ເມື່ອບ້ານເພື່ອເຕົ້າໂຮມກັບຄອບຄົວ.ສະນັ້ນ,ໃນມື້ຂຶ້ນ 13 ຄ່ຳເດືອນ 5 ຕາມຈັນທະຄະຕິຈີນ,ກໍ່ໄດ້ກາຍເປັນບຸນລ້າງຕົມທີ່ເປັນບຸນປະເພນີຂອງເຜົ່າຢ້າວໂກ່ວລານ.

ບຸນລ້າງຕົມ,ເປັນມື້ບຸນທີ່ປະຊາຊົນເຜົ່າຢ້າວໂກ່ວລານສະເຫຼີມສະຫຼອງຜູ້ຊາຍກັບບ້ານ ແລະ ຄອບຄົວເຕົ້າໂຮມກັນ.ໃນມື້ນັ້ນ,ຄົນທັງຫຼາຍຈະໃສ່ຊຸດວັນບຸນ,ສະແດງມວຍ ແລະ ອູຊູ,ເຊີດມັງກອນ ແລະ ສິງໂຕ,ຮ້ອງເພງເຜົ່າຢ້າວ,ແລະ ຈັດກິດຈະກຳສະເຫຼີມສະໜອງລວມໝູ່.ເຊັ່ນ,ຈັດ“ງານລ້ຽງໝາກໄຂ່”ເພື່ອຕ້ອນຮັບພີ່ນ້ອງໝູ່ເພື່ອນ.

ໃນບຸນລ້າງຕົມ,ປະຊາຊົນເຜົ່າຢ້າວໂກ່ວລານທີ່ໃສ່ຊຸດວັນບຸນນັ້ນຈະຈັດພິທີກາບໄຫວ້ຫໍກຳແພງຢ່າງໃຫຍ່ໂຕມະໂຫລານຢູ່ປະຕູໃຫຍ່ທີ່ສ້າງຂຶ້ນໃໝ່ໃນໝູ່ບ້ານ.ຄຽງຄູ່ກັບສຽງຮ້ອງວ່າ“ມັງກອນກັບສິງໂຕມາກາບໄຫວ້ຫໍກຳແພງແລ້ວ!” ຢູ່ທ່າມກາງສຽງກອງທີ່ຟົດຟື້ນ,ມັງກອນສີຄຳທີ່ເຊີດໂດຍ 12 ຄົນ,ຈະລອຍຢູ່ລະຫວ່າງຫໍກຳແພງຂອງຄອບຄົວນາມສະກຸນຕ່າງໆ,ຈຸດປະສົງແມ່ນເພື່ອເຊີນຊວນປະຊາຊົນເຜົ່າຢ້າວນາມສະກຸນຕ່າງໆອອກມາສະຫຼອງບຸນລ້າງຕົມຮ່ວມກັນ,ອະທິຖານໃຫ້ມີຜົນເກັບກ່ຽວຢ່າງອຸດົມສົມບູນ.ປະຊາຊົນເຜົ່າຢ້າວນາມສະກຸນຕ່າງໆຈະເອົາເຫຼົ້າປະໄວ້ຢູ່ໜ້າປະຕູເພື່ອຕ້ອນຮັບທີມເຊີດມັງກອນ.ການກາບໄຫວ້ຫໍກຳແພງ,ໄດ້ສະແດງໃຫ້ເຫັນເຖິງມູນເຊື້ອທີ່ສາມັກຄີ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ.ໃນເວລານີ້,ປະຊາຊົນເຜົ່າຢ້າວ ແລະ ເຜົ່າຮັ່ນໄດ້ເຂົ້າສູ່ຖັນແຖວກາບໄຫວ້ຫໍກຳແພງຫຼາຍຂຶ້ນ.ເມື່ອໄປຮອດບ່ອນກວ້າງທາງກາງແຈ້ງຂອງໝູ່ບ້ານເຜົ່າຢ້າວ,ຈະໄດ້ມີການສະແດງມວຍເພດຍິງເຜົ່າຢ້າວ,ງິ້ວໂນ,ຟ້ອນກອງຍາວ,ແລະ ອື່ນໆ,ຄົນທັງຫຼາຍລ້ວນແຕ່ຫຼົງໃຫຼໃນກິດຈະກຳທີ່ເບີກບານມ່ວນຊື່ນ.

ຫຼັງຈາກນັ້ນ,ຈະໄດ້ມີກິດຈະກຳລ້າງຕົມຈັບປາທີ່ເປັນລາຍການປະເພນີ.ຄຽງຄູ່ກັບຄຳສັ່ງວ່າ“ການລ້າງຕົມຈັບປາເລີ່ມຕົ້ນ!”ກິດຈະກຳດັ່ງກ່າວທີ່ຈັດຂຶ້ນຢູ່ສ້າງພູລີຂອງໝູ່ບ້ານເຜົ່າຢ້າວນັ້ນ,ກະຕຸກຊຸກຍູ້ໃຫ້ບຸນລ້າງຕົມເຂົ້າສູ່ບັນຍາກາດທີ່ຟົດຟື້ນທີ່ສຸດ.ປະຊາຊົນເຜົ່າຢ້າວໂກ່ວລານເຊື່ອໝັ້ນວ່າ,ຖ້າຈັບປາໄດ້ຍິ່ງຫຼາຍ,ຜົນເກັບກ່ຽວກໍ່ຈະຍິ່ງຫຼາຍ.ໃນເວລານັ້ນ,ປະຊາຊົນເຜົ່າຢ້າວໂກ່ວລານຈະພາກັນໂດດເຂົ້າສູ່ສະນ້ຳສ້າງທີ່ກວ້າງຂວາງ,ຈັບປາດ້ວຍສອງມື,ບາງຄົນຈັບໄດ້ແລ້ວຈະຍົກປາໄນຂຶ້ນເທິງຫົວຢ່າງດີໃຈ,ແລະ ໄດ້ຮັບສຽງຕົບມືຢ່າງຟົດຟື້ນຈາກຜູ້ຊົມ.ໃນທົ່ວໝູ່ບ້ານເຜົ່າຢ້າວເຕັມໄປດ້ວຍສຽງເພງທີ່ອອນຊອນ,ບົດຟ້ອນເຜົ່າຢ້າວທີ່ຟົດຟື້ນ,ແລະ ສຽງແກເຂົາຄວາຍທີ່ດັງກ້ອງສະໜັ່ນ,ເຊິ່ງປ່ຽມລົ້ນໄປດ້ວຍບັນຍາກາດທີ່ເບີກບານມ່ວນຊື່ນ.



图 / 半清

# ຄວາມຊິນເຄີຍດັ່ງລຸ່ມນີ້ ເຈົ້າມີບໍ່?

## 这些习惯，你有吗?

据说很多人都不知道，自己貌似干净整洁的日常生活中，很多的习惯都是错误的。虽说不会影响生命财产安全，但小习惯的力量却影响着你的长期健康。本期我们整理了一些日常生活中的不良卫生习惯，赶紧来看看你占了多少个?

ໄດ້ຍິນວ່າ,ມີຫຼາຍໆຄົນກໍບໍ່ຮູ້ຈັກດອກ,ໃນຊີວິດປະຈຳວັນຂອງຕົນຄືຊິມີຄວາມສະອາດ ແລະ ລະບຽບຮຽບຮ້ອຍດີ,ມີຄວາມຊິນເຄີຍຫຼາຍລ້ວນແຕ່ແມ່ນຜິດພາດ.ເຖິງວ່າ,ບໍ່ສະທ້ອນເຖິງຄວາມປອດໄພທາງຊີວິດ ແລະ ຊັບສິນ,ແຕ່ວ່າ,ກຳລັງແຮງຂອງຄວາມຊິນເຄີຍນ້ອຍຊ້ຳຜັດສະທ້ອນເຖິງສຸຂະພາບອັນຍາວນານຂອງທ່ານ,ສະບັບນີ້,ພວກເຮົາໄດ້ຮຽບຮຽງຄວາມຊິນເຄີຍອານາໄມອັນບໍ່ດີຈຳນວນໜຶ່ງໃນຊີວິດປະຈຳວັນ,ຮີບມາເບິ່ງດູ,ທ່ານມີຄວາມຊິນເຄີຍທີ່ບໍ່ດີເທົ່າໃດ?

### ເອົາເຈັ້ຍຂາວມາຫໍ່ອາຫານໄວ້ຕາມໃຈ

ເຂົ້າໜົມທອດໃນຮ້ານແຄມທາງ,ເຂົ້າໜົມປັງທີ່ປີ້ງເອົາເອງ,ອາຫານທີ່ກຽມໄວ້ເປັນອາຫານທ່ຽງ...ເອົາເຈັ້ຍຂາວມາຫຸ້ມຫໍ່ອາຫານທັງງາມທັງຮຽບຮ້ອຍ.ທ່ານສາມາດຢືນຢັ້ນເຈັ້ຍຂາວສະອາດຂອງເຈົ້າກໍສາມາດໃຊ້ມາຫໍ່ອາຫານໄດ້ແລ້ວຫວະ? ຕ້ອງຮູ້ຈັກເພື່ອຢາກເຮັດໃຫ້ເຈັ້ຍໃຫ້ມັນ“ຂາວ”,ມີເຈົ້າຂອງໂຮງງານຫຼາຍແຫ່ງເຄີຍນຳໃຊ້ຢາຟອກຂາວ,ຢາເພີ່ມຕື່ມຄວາມຂາວແສງວາວ ແລະ ສານເພີ່ມເຕີມອື່ນໆໃນໄລຍະຜ່ານການຜະລິດ,ເບິ່ງໄປແລ້ວເຈັ້ຍຂາວສະອາດ,ຈະພາໃຫ້ອາຫານເປື້ອນເປິໄດ້ງ່າຍ.ດັ່ງນັ້ນ,ນອກຈາກບໍ່ໃຫ້ກິນອາຫານຫໍ່ດ້ວຍເຈັ້ຍໃນຮ້ານອາຫານແຄມທາງຫຼາຍແລ້ວ,ທ່ານຈະຕ້ອງກຽມໄວ້ການຮັກສາຄວາມສົດ ແລະ ຖົງຫຸ້ມຫໍ່ອາຫານໃຫ້ຫຼາຍອັນສາ,ຮັກສາຄວາມສະອາດຍິ່ງມີສຸຂະພາບແຂງແຮງ!

### ເຈັ້ຍອານາໄມຖູຖ້ວຍຊາມໃສ່ອາຫານແລະໝາກໄມ້

ຜົນການກວດສອບຂອງອົງການກວດກາຄຸນນະພາບແຫ່ງຊາດສະແດງໃຫ້ເຫັນວ່າ,ເຈັ້ຍອານາໄມ້ມີຫຼາຍປະເພດບໍ່ໄດ້ຜ່ານການຂ້າເຊື້ອໂລກ ຫຼື ຂ້າເຊື້ອໂລກບໍ່ຮາບຄາບ,ມີແບັກເຕີເລຍເປັນຈຳນວນຫຼວງຫຼາຍຕິດຢູ່ນຳ,ຈະຕິດແໜ້ນຢູ່ເທິງວັດຖຸສິ່ງຂອງທີ່ຖືກຖູເຊັດໄດ້ງ່າຍ.ມີແຕ່ເຈັ້ຍອານາໄມທີ່ຖືກຂ້າເຊື້ອໂລກຢ່າງເຄັ່ງຂັດນັ້ນຈຶ່ງຖືກມາດຕະຖານອານາໄມ.

### ໂຕະອາຫານປູຜ້າຢາງປະລາດສະຕິກ

ໂຕະອາຫານປູຜ້າຢາງປຼາດສະຕິກເຖິງດີງາມທັງເປັນລະບຽບຮຽບຮ້ອຍ,ແຕ່ວ່າທາງລຸ່ມຜ້າຢາງ ແລະ ອ້ອມຂ້າງຂອງມັນຈະສະສົມຂີ້ຝຸ່ນ ແລະ ໄວລັສ ແລະ ອື່ນໆໄດ້ງ່າຍ,ຊື້ຜ້າຢາງມາຈາກໃນຫ້ອງຕະຫລາດຕາມໃຈມັກ,ຍ້ອນວ່າ,ວັດຖຸດິບແຕກຕ່າງກັນ.ຖ້າຫາກວ່າ,ເຮັດດ້ວຍຢາງໄມ້ Vinyl chloride ທີ່ມີທາດເບື່ອ,ຖ້ວຍຊາມຮ້ອນ ແລະ ອາຫານຕິດແປະກັນກັບຜ້າຢາງປຼາດສະຕິກເປັນເວລາຍາວນານ,ຈະລະເຫີຍອອກ ແລະ ຕິດແປດວັດຖຸທີ່ມີຜົນຮ້າຍ,ດັ່ງນັ້ນ,ຈະພາໃຫ້ເກີດພະຍາດທີ່ບໍ່ຈຳເປັນຂຶ້ນ,ຈະກະທົບເຖິງສຸຂະພາບ.

### ຝາງຸມຖ້ວຍອາຫານ

ຝາງຸມກັນແມງວັນມາງຸມຖ້ວຍອາຫານ,ເຖິງວ່າ,ແມງວັນບໍ່ສາມາດເຂົ້າໄປຢູ່ເທິງອາຫານ,ແຕ່ວ່າ,ສາມາດຕິດຢູ່ເທິງຝາງຸມໄດ້,ເຖິງແມ່ນວ່າໄດ້ຕ້ານທານແມງວັນບໍ່ໃຫ້ຕິດແປະກັບອາຫານໂດຍກົງ,ແຕ່ວ່າ,ໄຂ່ແມງວັນທີ່ຕິດແມ່ພະຍາດນັ້ນຍັງຖືກຕິດຢູ່ເທິງຝາງຸມ,ໄຂ່ແມງວັນດັ່ງກ່າວນີ້ກໍຍັງສາມາດຕົກຜ່ານຈາກຮູຝາງຸມໄປເປື້ອນເປິອາຫານໄດ້ງ່າຍ.ສະນັ້ນ,ຢ່າງດີທີ່ສຸດແມ່ນເອົາເຄື່ອງພາຊະນະທີ່ມີຝາອັດໃສ່ອາຫານຈະດີກວ່າ.

### ຕັດສ່ວນທີ່ເໜົ່າເປື່ອຍຂອງໝາກໄມ້ຖິ້ມແລ້ວເອົາສ່ວນທີ່ເຫຼືອມາກິນຢູ່.

ໃນເວລາບາງຄົນກິນໝາກໄມ້ໄດ້ພົບເຫັນໝາກໄມ້ເປື່ອຍເນົ່າສ່ວນໜຶ່ງ,ມີແຕ່ຕັດເອົາສ່ວນທີ່ເປື່ອຍເນົ່ານັ້ນຖິ້ມແລ້ວເອົາມາກິນຢູ່,ຖືວ່າເຮັດຈັ່ງຊີ້ກໍມີອານາໄມສະອາດແລ້ວ. ທີ່ແທ້ແລ້ວ,ເຖິງວ່າຕັດຖິ້ມພາກສ່ວນທີ່ເປື່ອຍເນົ່າ,ສ່ວນທີ່ເຫຼືອນັ້ນໂດຍຜ່ານນ້ຳໝາກໄມ້ມັນໄດ້ເຊື່ອມຊຶມເອົາສິ່ງຖ່າຍເທຂອງແມ່ພະຍາດແລ້ວ,ແລະມີແບັກເຕີເລຍເລີ່ມອອກແມ່ແຜ່ລູກແລ້ວ,ໃນນັ້ນ,ມີແບັກເຕີເລຍໜຶກສາມາດເຮັດໃຫ້ຕົວເຊັນຮ່າງກາຍຄົນມີການປ່ຽນແປງຢ່າງກະທັນຫັນກາຍເປັນມະເຮັງ.ດັ່ງນັ້ນ,ເຖິງແມ່ນວ່າ,ໝາກໄມ້ຖ້າມີແຕ່ເປື່ອຍເນົ່າສ່ວນໜຶ່ງກໍຢ່າ,ກໍຕ້ອງປະຖິ້ມໂລດຈະດີກວ່າ.

### ນຳໃຊ້ຢາສີແຂ້ວຢາຊະນິດດຽວເປັນເວລາຍາວນານ

ຢາສີແຂ້ວທີ່ເປັນຢາແມ່ນມີບົດບາດລະງັບອັນໃດອັນໜຶ່ງຕໍ່ແມ່ພະຍາດບາງຢ່າງ.ແຕ່ວ່າ,ນຳໃຊ້ຢາສີແຂ້ວທີ່ເປັນຢາປະເພດດຽວກັນເປັນເວລາຍາວນານ,ຈະເຮັດໃຫ້ແມ່ພະຍາດໃນໂພງປາກຄ່ອຍໆຊິນເຄີຍກັບສະພາບແລ້ວເກີດມີລັກສະນະທົນຢາ,ສະນັ້ນ,ຢາສີຟັນກໍຕ້ອງປ່ຽນໃຊ້ຕາມກຳນົດເວລາ.



文/杨晓梅 蓝 天

## 一、日常用语 ຄຳເວົ້າທີ່ໃຊ້ປະຈຳວັນ

### 情景会话：聊聊商鞅变法

ບົດສົນທະນາ: ລົມກັນເລື່ອງຊາງຢາງດຳເນີນການປະຕິຮູບທາງການປົກຄອງ

zhōng guó lì shǐ shàng de shāng yāng biàn fǎ duì yú jiàn lì yì tǒng tiān xià de qín wáng cháo qǐ le zhì guān zhòng yào de zuò yòng wǒ men jīn tiān jiù liáo liáo shāng yāng biàn fǎ ba
A. 中国历史上的商鞅变法，对于建立一统天下的秦王朝，起了至关重要的作用，我们今天就聊聊商鞅变法吧！

ຊາງຢາງ ດຳເນີນການປະຕິຮູບທາງການປົກຄອງໃນປະຫວັດສາດຈີນ,ສຳລັບຕໍ່ລາຊະວົງສິນທີ່ປົກຄອງທົ່ວປະເທດເປັນເອກະພາບກັນ ໄດ້ມີບົດບາດທີ່ສຳຄັນຍິ່ງ,ມື້ນີ້,ພວກເຮົາມາລົມກັນເລື່ອງ ຊາງຢາງ ດຳເນີນການປະຕິຮູບທາງການປົກຄອງສາ!

hǎo de shāng yāng shì zhàn guó shí dài zhù míng de fǎ jiā dài biǎo rén wù tā shì wèi guó guó jūn de hòu yì gù chēng wéi wèi yāng hòu yīn fǔ zuǒ qín wáng lì xià zhàn gōng huò fēng yú shāng hòu rén chēng zhī wéi shāng yāng shāng yāng zài qín guó zhí zhèng shí jiǔ nián qín guó dà zhì shǐ chēng shāng yāng biàn fǎ
B. 好的。商鞅是战国时代著名的法家代表人物，他是卫国国君的后裔，故称为卫鞅，后因辅佐秦王(秦孝公)立下战功获封于商(今陕西省商县)，后人称之为商鞅。商鞅在秦国执政十九年，秦国大治，史称商鞅变法。

ດີຫຼາຍ,ຊາງຢາງ ເປັນບຸກຄົນຕົວແທນສຳນັກຟາເຈຍທີ່ມີຊື່ສຽງໂດ່ງດັງໃນຍຸກສະໄໝລັດຈັນ,ທັງເປັນລູກຫລານຂອງເຈົ້າຊີວິດລັດອ້ອຍ,ດັ່ງນັ້ນ,ຮຽກທ່ານວ່າອ້ອຍຢາງ.ຕໍ່ມາ,ຍ້ອນຊ່ວຍເຫຼືອເຈົ້າຊີວິດສິນ(ສິນຊຽວກົງ)ມີຄຸນງາມຄວາມດີໃນການສູ້ຮົບໄດ້ຮັບທານໃຫ້ເປັນຊາງ(ປັດຈຸບັນນີ້ແມ່ນເມືອງຊາງແຂວງສານຊີ)ຄົນຮຸ່ນຫລັງເອີ້ນວ່າ ຊາງຢາງ.ຊາງຢາງປົກຄອງລັດສິນເປັນເວລາ 19 ປີ,ລັດສິນຖືກປົກຄອງຖືກໃຈຄົນ,ໃນປະຫວັດສາດເອີ້ນວ່າ ຊາງຢາງ ດຳເນີນການປະຕິຮູບ.

shì de shāng yāng zài qín guó tuī xíng yǐ fèi jǐng tián kāi qiān mò shí xíng jùn xiàn zhì jiǎng lì gēng zhī hé zhàn dòu shí xíng lián zuò zhī fǎ wéi nèi róng de biàn fǎ zhè xiē zhì guó zhī cè shēn dé dāng shí de guó jūn qín xiào gōng de shǎng shí
A. 是的。商鞅在秦国推行以"废井田、开阡陌①，实行郡县制，奖励耕织和战斗，实行连坐之法"为内容的变法，这些治国之策深得当时的国君秦孝公的赏识。

ແມ່ນແທ້,ຊາງຢາງໄດ້ປະຕິບັດການປະຕິຮູບທີ່ມີເນື້ອໃນ "ລົບລ້າງນາຮຽບຮ້ອຍ,ທາງທີ່ຕັດສະລັບໄປມາໃນນາ,ປະຕິບັດຕາມລະບອບເຂດ ແລະ ເມືອງທີ່ໃຫ້ລາງວັນແກ່ການປູກຝັງ ແລະ ການສູ້ຮົບ,ປະຕິບັດ'ວິທີລຽນໂຈ'ຢູ່ລັດສິນ".ນະໂຍບາຍປົກຄອງລັດເຫຼົ່ານີ້ໄດ້ຮັບຄວາມນິຍົມຊົມຊອບຢ່າງເລິກເຊິ່ງຈາກເຈົ້າຊີວິດສິນຊຽວກົງໃນສະໄໝນັ້ນ.

shāng yāng biàn fǎ zhī chū guān wàng zhě jiào duō tā wèi le qǔ xìn yú mín jiù pài rén zài chéng zhōng shù lì yí mù bìng gào zhī shéi rén néng jiāng zhī bān dào chéng mén biàn shǎng cì shí jīn qín mín wú rén gǎn xìn hòu jiā zhì wǔ shí jīn yú shì yǒu rén káng qǐ mù tou bān dào chéng mén guǒ rán huò shǎng wǔ shí jīn cóng cǐ xuān shì le yán chū bì xíng de biàn fǎ jué xīn shǐ chēng xǐ mù lì xìn
B. 商鞅变法之初，观望者较多。他为了取信于民，就派人在城中竖立一木，并告知："谁人能将之搬到城门，便赏赐十金。"秦民无人敢信，后加至五十金，于是有人扛起木头搬到城门，果然获赏五十金，从此宣示了言出必行的变法决心，史称"徙木立信"。

ເບື້ອງຕົ້ນທີ່ ຊາງຢາງ ດຳເນີນການປະຕິຮູບ,ຜູ້ສັງເກດເບິ່ງອ່າວຫຼາຍກວ່າ,ເພື່ອໄດ້ຮັບຄວາມເຊື່ອໝັ້ນໃຈຈາກປະຊາຊົນ,ລາວແຕ່ງຄົນຕັ້ງເສົາໄມ້ອັນໜຶ່ງໃນກາງເມືອງ,ທັງແຈ້ງການວ່າ,"ຜູ້ໃດສາມາດເອົາເສົາໄມ້ນີ້ຍ້າຍໄປຢູ່ປະຕູເມືອງ,ກໍໃຫ້ລາງວັນຄຳ 10 ສະລຶງ." ປະຊາຊົນລັດສິນບໍ່ມີໃຜເຊື່ອ,ຕໍ່ໄປ,ໄດ້ເພີ່ມຂຶ້ນຮອດ 50 ສະລຶງ,ກໍມີຄົນຜູ້ໜຶ່ງຫາບເສົາໄມ້ນີ້ຍ້າຍໄປເຖິງປະຕູເມືອງ,ສຸດທ້າຍກໍໄດ້ຮັບລາງວັນຄຳ 50 ສະລຶງ.ແຕ່ນີ້ໄປໜ້າ,ແລ້ວຕັດສິນໃຈປະກາດການປະຕິຮູບທີ່ວ່າ"ຄວາມເວົ້າທີ່ໄດ້ເວົ້າອອກໄປແມ່ນຈະຕ້ອງປະຕິບັດຕາມຢ່າງແນ່ນອນ".ໃນປະຫວັດສາດຮຽກວ່າ"ຍ້າຍໄມ້ຕັ້ງຄວາມເຊື່ອໃຈ".

shì de běi sòng zhèng zhì jiā wáng ān shí zài yì shǒu chēng zàn shāng yāng de shī zhōng yǐ yì yán wéi zhòng bǎi jīn qīng lái bǐ yù yán chū bì xíng de zhòng yào xìng
A. 是的。北宋政治家王安石在一首称赞商鞅的诗中，以"一言为重百金轻"来比喻言出必行的重要性。

ແມ່ນແລ້ວ,ໃນຄຳກອນຍ້ອງຍໍສັນລະເສີນຊາງຢາງຂອງທ່ານ ຫວາງອານຊື ນັກການເມືອງລາຊະວົງສົງເໜືອທີ່ວ່າ"ຄຳເວົ້າໜັກກວ່າຄຳພັນສະຫຼຶງ"ມາອຸປະມາຄວາມສຳຄັນຂອງ"ຄວາມເວົ້າທີ່ເວົ້າອອກມາຈະຕ້ອງປະຕິບັດຕາມຢ່າງແນ່ນອນ".

shāng yāng biàn fǎ hái miàn lín qín guó guì zú xíng bú shàng dà fu shǒu jiù sī wéi de zǔ lì ér rú guǒ yí gè fǎ lǜ de shí shī yào yīn rén ér yì zhù dìng shī bài wèi le shù lì zài fǎ lǜ miàn qián rén rén píng děng de fàn lì shāng yāng shèn zhì lián tài zǐ fàn fǎ yě bù fàng guò zhè yàng biàn fǎ rì jiǔ qín guó chū xiàn le dào bù shí yí shān wú dào zéi rén mín ān jū lè yè de jǐng xiàng
B. 商鞅变法还面临秦国贵族"刑不上大夫"守旧思维的阻力，而如果一个法律的实施要因人而异，注定失败。为了树立在法律面前人人平等的范例，商鞅甚至连太子犯法也不放过，这样变法日久，秦国出现了道不拾遗，山无盗贼，人民安居乐业的景象。

ການປະຕິຮູບຂອງ ຊາງຢາງ ຍັງປະເຊີນໜ້າການກີດຂວາງດ້ານແນວຄິດຈາຣິດນິຍົມເກົ່າທີ່ວ່າ,"ການລົງໂທດແມ່ນຍົກເວັ້ນຂຸນນາງ"ຂອງຕະກຸນສູງສັກ.ຖ້າຫາກວ່າ,ການປະຕິບັດກົດໝາຍສະບັບໜຶ່ງ,ຍ້ອນຄົນຕ່າງກັນປະຕິບັດກໍຕ່າງກັນ,ແນ່ນອນຕ້ອງປະລາໄຊ.ເພື່ອສ້າງຕັ້ງຕົວແບບຄົນຜູ້ໃດໆມີຄວາມສະເໝີພາບກັນຕໍ່ໜ້າກົດໝາຍ.ຊາງຢາງກໍບໍ່ປ່ອຍໃຫ້ລາຊະກຸມານທຳຜິດກົດໝາຍ,ການປະຕິຮູບຈຶ່ງຊື່ເປັນເວລາດົນນານ,ລັດສິນໄດ້ປະກົດເຫັນສະພາບການຖະໜົນຫົນທາງບໍ່ມີໃຜກ້າເກັບເອົາຂອງເຮີ່ຍ,ຢູ່ເທິງພູເຂົາບໍ່ມີໂຈນ,ປະຊາຊົນຢູ່ເຢັນເປັນສຸກ.

shì de biàn fǎ shǐ qín guó qiáng dà bìng cóng wèi guó shǒu lǐ duó huí le shī dì shāng yāng yě yīn gōng fēng yú shāng
A. 是的。变法使秦国强大，并从魏国手里夺回了失地，商鞅也因功封于商。

ແມ່ນແທ້,ການປະຕິຮູບເຮັດໃຫ້ລັດສິນເຂັ້ມແຂງໃຫຍ່ໂຕ,ແລະ ຍຶດເອົາທີ່ດິນເສຍນັ້ນກັບຄືນມາຈາກລັດອ້ອຍ,ຊາງຢາງ ຍ້ອນມີຄຸນງາມຄວາມດີຈຶ່ງຖືກຕັ້ງເປັນຊາງ.

shāng yāng zhòng shì nóng yè bǎ gēng zhàn zuò wéi guó cè tā gào sù qín rén shēng huó zhōng zhǐ yǒu liǎng jiàn zuì zhǔ yào de shì gēng tián hé dǎ zhàng shāng yāng rèn wéi zhǐ yǒu qiáng dà de nóng yè cái néng zhī chí tǒng yī liù guó de zhàn zhēng
B. 商鞅重视农业，把"耕战"作为国策，他告诉秦人，生活中只有两件最主要的事：耕田和打仗。商鞅认为，只有强大的农业才能支持统一六国的战争。

ຊາງຢາງເອົາໃຈໃສ່ກະສິກຳ,ຖືເອົາການປູກຝັງ ແລະ ການສູ້ຮົບເປັນແນວທາງນະໂຍບາຍຂອງລັດ,ລາວບອກຊາວສິນວ່າ,ໃນຊີວິດການເປັນຢູ່ມີແຕ່ 2 ເລື່ອງທີ່ສຳຄັນຍິ່ງ,ໄຖນາ ແລະ ສູ້ຮົບ.ຊາງຢາງເຫັນວ່າ,ມີແຕ່ການກະສິກຳທີ່ເຂັ້ມແຂງໃຫຍ່ໂຕເທົ່ານັ້ນ,ຈຶ່ງຈະສາມາດສະໜັບສະໜູນສົງຄາມທ້ອນໂຮມ 6 ລັດເປັນເອກະພາບກັນໄດ້.

duì de tong shí qī de xī fāng yà lì shān dà dà dì yǒu wàn rén de jūn duì luó mǎ jūn tuán zuì wéi qiáng shèng de shí hòu yě bú guò jī shí wàn rén ér qín guó dào le qín shǐ huáng shí dài yǐ jīng néng gòu fù dān yì bǎi wàn rén de páng dà jūn duì yīn cǐ shǐ jì shàng shuō zhèng shì gēng zhàn cè lüè zuì zhōng chéng jiù le qín guó yì tǒng tiān xià de bào fù
A. 对的。同时期的西方，亚历山大大帝有5万人的军队，罗马军团最为强盛的时候也不过几十万人，而秦国到了秦始皇时代，已经能够负担一百万人的庞大军队。因此，《史记》上说，正是耕战策略最终成就了秦国一统天下的抱负。

ຖືກແລ້ວ.ຝ່າຍຕາເວັນຕົກໃນໄລຍະດຽວກັນ,ເຈົ້າມະຫາຊີວິດອາເລັກຊານເດີມີກອງທັບເປັນຈຳນວນ 50.000 ຄົນ,ໃນເວລາແມ່ທັບກຸງໂຣມທີ່ເຂັ້ມແຂງໃຫຍ່ໂຕນັ້ນ,ກໍມີແຕ່ຫຼາຍແສນຄົນເທົ່ານັ້ນ,ແຕ່ວ່າ,ລັດສິນຮອດສະໄໝສິນຊີຮວງເຕນັ້ນ,ໄດ້ສາມາດແບກຫາບພາລະຂອງທະຫານທີ່ໃຫຍ່ໂຕ 1 ລ້ານກວ່າຄົນແລ້ວ.ສະນັ້ນ,ໃນປຶ້ມປະຫວັດສາດບັນທຶກໄວ້ວ່າ,ຍ້ອນວ່າ,ຍຸດໂທບາຍການປູກຝັງ ແລະ ການສູ້ຮົບ,ສຸດທ້າຍ,ເຮັດໃຫ້ລັດສິນບັນລຸເຖິງອຸດົມການທ້ອນໂຮມລັດເປັນເອກະພາບກັນ.

shāng yāng wèi le gǒng gù jūn zhǔ tǒng
B. 商 鞅 为 了 巩 固 君 主 统

zhì hái bān bù le lián zuò fǎ zhè shì
治，还 颁 布 了 连 坐 法。这 是

zài hù jí biān zhì jī chǔ shàng de yán
在 户 籍 编 制 基 础 上 的 严

kù fǎ lǜ tā shǐ dé bù shǎo qín guó rén
酷 法 律，它 使 得 不 少 秦 国 人

yuàn shēng zǎi dào yě wèi shāng yāng rì
怨 声 载 道，也 为 商 鞅 日

hòu bēi āi de jié jú mái xià le huò gēn
后 悲 哀 的 结 局 埋 下 了 祸 根。

ຊາງຢາງ ເພື່ອປັບປຸງການປົກຄອງຂອງລາຊາໃຫ້ໝັ້ນຄົງ,ຍັງວາງວິທີການ"ລຽນໂຈ"ອອກມາ,ນີ້ແມ່ນກົດໝາຍທີ່ເຂັ້ມແຂງບົນພື້ນຖານລະບົບສຳມະໂນຄົວ,ເຮັດໃຫ້ຊາວລັດສິນບໍ່ໜ້ອຍມີຄວາມຄັບແຄ້ນໃຈທົ່ວໄປ,ທັງກໍໄດ້ປູກຝັງຮາກເງົ່າແຫ່ງຄວາມພິບັດທີ່ເສົ້າສະຫຼົດໃຈໃນບັ້ນສຸດທ້າຍຂອງຊາງຢາງໃນເວລາຕໍ່ມາ.

zhèng shì dāng qín xiào gōng qù shì hòu
A. 正 是。当 秦 孝 公 去 世 后，

céng yǔ shāng yāng jié yuàn de tài zǐ jí
曾 与 商 鞅 结 怨 的 太 子 即

wèi shāng yāng bèi gào móu fǎn
位（称秦惠文王），商 鞅 被 告 谋 反。

dāng tā táo wáng zhì biān guān yù xiǔ kè
当 他 逃 亡 至 边 关，欲 宿 客

shè jié guǒ yīn wèi néng chū shì zhèng
舍，结 果 因 未 能 出 示 证

jiàn diàn jiā wèi jù lián zuò fǎ jù jué
件，店 家 畏 惧"连 坐 法"拒 绝

liú sù tā de biàn fǎ chéng gōng shǐ tā
留 宿，他 的 变 法 成 功 使 他

zì jǐ fàn zuì dōu nán yǐ yǐn cáng hòu lái
自 己"犯 罪"都 难 以 隐 藏。后 来

shāng yāng bèi zhuō zhù qín huì wén wáng
商 鞅 被 捉 住，秦 惠 文 王

chǔ tā yǐ chē liè zhī xíng miè shāng yāng
处 他 以"车 裂 之 刑"，灭 商 鞅

zhī zú
之 族。

ແມ່ນແທ້,ເມື່ອເຈົ້າຊີວິດສິນຊຽວກົງເສຍຊີວິດໄປແລ້ວ,ລາຊາສິນຮູຍເວີນລາຊະກຸມານໄດ້ສືບທອດລາໄຊ,ຊາງຢາງຖືກກ່າວຟ້ອງກໍ່ການກະບົດ.ເມື່ອເວລາລາວໜີໄພຮອດດ່ານຊາຍແດນຈະພັກເຊົາຢູ່ໂຮງແຮມ,ສຸດທ້າຍຍ້ອນບໍ່ໄດ້ອອກໃບຢັ້ງຢືນເດີນທາງ,ເຈົ້າຂອງໂຮງແຮມຢ້ານ"ວິທີລຽນໂຈ",ປະຕິເສດພັກໂຮງແຮມ,ການປະຕິຮູບຂອງລາວໄດ້ສຳເລັດຜົນເຮັດໃຫ້ລາວເອງ"ຖືກທຳໂທດ"ກໍຍາກທີ່ຈະຫຼົບລີ້.ຕໍ່ມາ,ຊາງຢາງ ຖືກຈັບກຸມ,ລາຊາສິນຮູຍເວີນລົງໂທດລາວແບບຄືໂຕມ້າລາກກວຽນຕາຍຕະກຸນຊາງຢາງຖືກຂ້າຕາຍໝົດ.

shāng yāng suī sǐ dàn tā de biàn fǎ zài
B. 商 鞅 虽 死，但 他 的 变 法 在

qín guó jì xù shí xíng wèi yǐ hòu qín guó
秦 国 继 续 实 行，为 以 后 秦 国

tǒng yī liù guó diàn dìng le jī chǔ hòu
统 一 六 国 奠 定 了 基 础。后

lái de qín guó chéng xiàng lǐ sī píng jià
来 的 秦 国 丞 相 李 斯 评 价

shuō xiào gōng yòng shāng yāng zhī fǎ yí
说：孝 公 用 商 鞅 之 法，移

fēng yì sú mín yǐ yīn fù guó yǐ fù qiáng
风 易 俗，民 以 殷 富，国 以 富 强，

bǎi xìng lè yòng zhū hóu qīn fù
百 姓 乐 用，诸 侯 亲 附。

ເຖິງວ່າຊາງຢາງຕາຍແລ້ວ,ການປະຕິຮູບຂອງລາວໄດ້ສືບຕໍ່ປະຕິບັດຢູ່ລັດສິນ,ໄດ້ສ້າງພື້ນຖານທີ່ລັດສິນທ້ອນໂຮມ 6 ລັດເປັນປະເທດດຽວກັນໃນເວລາຕໍ່ມາ.ທ່ານ ລີຊື ຫົວໜ້າຄະນະມົນຕີຂອງລັດສິນໄດ້ຕີລາຄາວ່າ:ສິນຊຽວກົງນຳໃຊ້ການປະຕິຮູບຂອງຊາງຢາງປ່ຽນແປງຂະນົບທຳນຽມປະເພນີ,ເຮັດໃຫ້ປະຊາຊົນຮັ່ງມີ,ເຂັ້ມແຂງ,ປະຊາຊົນນິຍົມນຳໃຊ້, ຂຸນນາງກໍຍອມຮັບ.

注：

①井田制是中国古代社会一种以国有为名的贵族土地所有制，因道路和渠道纵横交错，把土地分隔成方块，形状像"井"字，因此称做"井田"。所谓"阡陌"，指"井田"中间的灌溉渠道以及与之相应的纵横道路，纵者称"阡"，横者称"陌"。"废井田、开阡陌"是从法律上废除贵族垄断土地资源的井田制度，允许人们开荒，土地可以自由买卖，赋税则按照各人所占土地的多少来

平均负担，目的是促进经济的发展。

ໝາຍເຫດ:

① .ລະບົບຈິນຖຽນແມ່ນລັດລະບອບກຳມະສິດທີ່ດິນຂອງຂຸນນາງສະໄໝເກົ່າຊະນິດໜຶ່ງເຊິ່ງເອົານາຕັດເປັນສີ່ຫຼຽມແຍກຈາກກັນ,ຍ້ອນທາງແລະ ເໝືອງຝາຍຊັບຊ້ອນກັນ,ຮູບແບບຄື " 井 " ,ຈຶ່ງໄດ້ຊື່ຈິນຖຽນ(ຕາມສຽງພາສາຈີນ).ອັນທີ່ວ່າເປີດ"ຊຽນເໝົາ",ໝາຍວ່າ,ເປີດທາງທີ່ຕັດສະລັບໄປມາໃນນາ,ຕັ້ງຊື່ເປັນຊຽນ,ຕັ້ງຂວາງເປັນເໝົາ,ແມ່ໃສ່ເໝືອງຝາຍລະບາຍນ້ຳໃນຈິນຖຽນ(ນາສີ່ຫຼຽມ)ແລະ ທາງທີ່ສະຫຼັບໄປມາໃນນາ,"ລຶບລ້າງນາລຽບຮອຍ,ເປີດທາງທີ່ຕັດສະຫຼັບໄປມາໃນນາ,ແມ່ນລຶບລ້າງລະບົບຈິນຖຽນທີ່ຂຸນນາງຜູກຂາດຊັບພະຍາກອນທີ່ດິນນັ້ນຈາກທາງດ້ານກົດໝາຍ,ອະນຸມັດໃຫ້ປະຊາຊົນບຸກເບີກດິນຮົກເຮື້ອ,ສາມາດຊື້ຂາຍເສລີໄດ້,ເກນອາກອນສະເລຍຕາມແຕ່ລະຄົນຈັບຈອງທີ່ດິນຫຼາຍຫຼືໜ້ອຍ,ຈຸດປະສົງແມ່ນເພື່ອຊຸກຍູ້ການພັດທະນາເສດຖະກິດ.





# 云南鼎顺货运代理有限公司

鼎顺货运
DINGSHUN LOGISTICS

## Yunnan Dingshun Freight Transport Agency Co.,Ltd

云南鼎顺货运代理有限公司响应“国家桥头堡战略”，服务“中国—东盟自由贸易区”，经云南省工商局、中国海关、国家外经贸部、商务部正式批准成立的一级国际货运代理专业公司。

为更好的服务客户，在中国昆明、云南边境口岸、老挝万象、泰国曼谷、缅甸仰光、越南河内、柬埔寨金边都设有办事处，能及时为客户补货，人员、车辆和设备提供过境转关服务。

Yunnan Dingshun Logistics Ltd. answered national development strategy service for “China ASEAN free trade zone” .Yun Nan Industrial and Commercial Bureau , China Customs, the State Trade and Economic Cooperation and Department of Commerce approved a freight forwarding business. In order to better serve customers, our company have branch office in frontier ports, Vientiane of Laos, Bangkok Thailand, Burma Yangon, Hanoi in Vietnam, Kampuchea Phnom Penh, replenishment cargo for custom in time. Provide the customs transit for personnel , vehicle and equipment in frontier ports.

**中国昆明、老挝、泰国、缅甸、越南、柬埔寨 货运专线 大型项目配套物流**

**海运、陆运、空运、国际运输、物资采购 保险代理、单证缮制、代理报关、外汇结算，提供门到门服务**

**Freight line of China Kunming, Laos, Thailand, Burma, Vietnam, Kampuchea, Large projects logistics.**
**Transportation by sea, road transport, air transport, international transport, supplies purchasing, insurance agency, fill in the documents, customs declaration, foreign exchange settlement and door-to-door service**









Http：www.dingshun88.com E-MAIL：168606284@QQ.COM
Customer QQ：1459997464、168606284 TEL：0086-871-68381415
ADD:No.11C Entrance2 Building 7th Xichunyuan
Century Town Kunming Province Yunnan China

网站：www.dingshun88.com E-MAIL：168606284@QQ.COM
商务QQ：1459997464、168606284 电话：0086-871-68381415
总部地址：云南省昆明市世纪城惜春苑7幢二单元11C



# ບໍລິສັດຢວນດາຂາອອກຂາເຂົ້າສິບສອງພັນນາຈຳກັດ

# 西双版纳远大进出口有限公司

ບໍລິສັດຢວນດາຂາອອກຂາເຂົ້າສິບສອງພັນນາຈຳກັດແມ່ນບໍລິສັດຈໍລະຈອນສິນຄ້າສັງລວມບໍລິສັດໜຶ່ງ,ກິດຈະການຕົ້ນຕໍຄື: ຮັບສົ່ງສິນຄ້າລະຫວ່າງຊາດຈີນ,ລາວ,ໄທ,ບໍລິການມີສາງໃຫ້ເຊົ່າ, ສິນຄ້າຂາອອກຂາເຂົ້າແຈ້ງ ພາສີແລະແຈ້ງດ່ານກວດໂລກພະຍາດແລະໂລ່ລຽງເງິນຕາຕ່າງປະເທດແລະອື່ນໆ. ສຳນັກງານໃຫຍ່ຕັ້ງຢູ່ເຂດພັດທະນາເສດຖະກິດບໍ່ຫານສິບສອງພັນນາ. ຍັງມີສຳນັກງານຕັ້ງຢູ່ຄຸນໝິງຈີນ,ບາງກອກໄທ,ນະຄອນຫຼວງວຽງຈັນລາວແລະນາເຕີຍ,ບໍລິສັດມີສາງແລະທີມງານລົດຂົນສົ່ງເອງ.

ບໍລິສັດໄດ້ສ້າງສາຍພົວພັນດ້ານກິດຈະການກັບພາກສ່ວນທີ່ກ່ຽວຂ້ອງເປັນຢ່າງດີ, ຄື: ສະຖານທູດລາວ,ໄທ,ກຳປູເຈຍແລະດ່ານພາສີ,ດ່ານກວດກາຊາຍແດນແລະອື່ນໆ.ເພື່ອຍົກປະສິດທິພາບການຂົນສົ່ງແລະການສົ່ງເຖິງສິນຄ້າຢ່າງປອດໄພແລະວ່ອງໄວໃຫ້ສູງຂຶ້ນ.

ບໍລິສັດໄດ້ສະໜອງບໍລິການຄົບວົງຈອນແຕ່ກົກສຸດປາຍ,ເພື່ອສະໜອງບໍລິການ “ໂດຍໄວ, ມີຄວາມປອດໄພ,ມີຄວາມສະດວກແລະມີປະສິດທິພາບສູງ” ໃຫ້ແກ່ລູກຄ້າເປັນວັດຖຸປະສົງຖາວອນຂອງບໍລິສັດຕະຫລອດມາ.

西双版纳远大进出口有限公司是一家主要从事中、老、泰国际运输、仓储、进出口报关报检、结汇等综合性物流公司，总部设在西双版纳磨憨经济开发区，在中国昆明、泰国曼谷、老挝万象和那堆设有办事处，自有仓库和车队。

公司在工作中与相关单位（老挝、泰国、柬埔寨等大使馆及海关边防检查站等）都建立了良好的业务关系，从而提高了货物安全、迅速送达的效率。

公司提供一票到底的全程服务，为客户提供“快速、安全、便捷、高效”的服务一直是公司永恒的宗旨。







总经理：张惠平先生
ທ່ານ ຈາງຮຸ້ຍຜິງ

**主营业务**
★国际货代、货物进出口
★中国—老挝—泰国 专线往返海路、陆路运输
★中国、老挝、泰国代理报关

★ເປັນຕົວແທນຂົນສົ່ງສິນຄ້າລະຫວ່າງຊາດແລະສິນຄ້າຂາອອກຂາເຂົ້າ
★ການຂົນສົ່ງສະເພາະໄປກັບທາງທະເລ,ທາງບົກຂອງຈີນ-ລາວ-ໄທ
★ເປັນຕົວແທນແຈ້ງພາສີຈີນ-ລາວ-ໄທ

公司总部地址：云南省西双版纳州磨憨经济开发区小商品市场45-46号（紫薇路19-21号）
ສຳນັກງານໃຫຍ່ບໍລິສັດຕັ້ງຢູ່: ຖະໜົນຈືເວີຍເລກທີ 19-21 ເບີເຮືອນ45-46 ຕະຫຼາດສິນຄ້ານ້ອຍເຂດພັດທະນາບໍ່ຫານສິບສອງພັນນາ
电话TEL：0691-8811237、8811437 、13518799245(张惠平) E-MAIL: 168606284@qq.com
传真FAX：0691-8811237 客服QQ：783667765
网站：www.ydjck.com E-mail: 783667765@qq.com
老挝万象办公室地址（OFFICE LAO)：万象市T2路（中国茅台酒专卖店对面）
ສຳນັກງານວຽງຈັນລາວ: ຖະໜົນ T2 ນະຄອນຫຼວງວຽງຈັນ ຕໍ່ໜ້າຮ້ານຂາຍເຫຼົ້າ ເມົາໄຕຈີນ
电话：00856-20-22992286、22564918 电话/传真：00856-21-214071
泰国曼谷办公室地址（OFFICE THAI）：41/54-55 M.7 T.Klongsong A.klongluang Pathumthani 12120
Tel:+66-838247785, +66-906364278 , 021-534852
Email: 168606284@QQ.com

# 云南阳光道桥股份有限公司

**YUNNAN SUNNY ROAD & BRIDGE CO.,LTD**

**ບໍລິສັດຂົວທາງຫຸ້ນສ່ວນຢາງກ່ວາງຢຸນນານຈໍາກັດ**




具有五十多年历史的云南阳光道桥股份有限公司,拥有公路工程施工总承包一级资质及对外经济合作业务经营权。累计完成施工里程5000多公里，其中高等级公路1800多公里，获鲁班奖、中国首届诚信企业等多种奖项。通过了ISO9001质量管理体系、ISO14001环境管理体系和OHSAS18001职业安全卫生管理体系国际认证。所承建的工程遍布云南省各地州、中国众多省份和亚非许多国家。我们愿与世界各国、特别是东南亚各国的经济组织、高等院校、科研单位、政府机构等携手开展多层次、宽领域的合作，优势互补，共赢发展。

地址：中国 昆明市官南大道1588号
电话：0871-67017107 67017108
网址：WWW.YNROAD.COM

ບໍລິສັດຂົວທາງຫຸ້ນສ່ວນຢາງກ່ວາງຢຸນນານຈໍາກັດທີ່ມີປະຫວັດການມາໄດ້ 50 ກວ່າປີ ມີຄຸນວຸດທິຊັ້ນ 1 ໃນການຮັບເໝົາລວມວິສະວະກໍາສ້າງທາງ ແລະ ມີສິດດໍາເນີນທຸລະກິດໃນການຮ່ວມມືດ້ານເສດຖະກິດກັບຕ່າງປະເທດ.ລວມທັງໝົດໄດ້ສ້າງທາງສໍາເລັດໄດ້ 5,000 ກວ່າຫຼັກກິໂລແມັດ,ໃນນັ້ນ,ທາງຫຼວງລະດັບຊັ້ນສູງ1,800 ກວ່າກິໂລແມັດ,ໄດ້ຮັບລາງວັນຫຼາຍປະເພດເຊັ່ນ:ລາງວັນລູປານ,ລາງວັນວິສາຫະກິດທີ່ເຊື່ອໃຈໄດ້ຄັ້ງທໍາອິດຂອງຈີນ.ໄດ້ຜ່ານການຮັບຮອງຈາກລະບົບຄຸ້ມຄອງຄຸນນະພາບ ISO9001,ລະບົບຄຸ້ມຄອງສະພາບແວດລ້ອມ ແລະ ລະບົບສາກົນຄວາມປອດໄພ ແລະ ອານາໄມວິຊາຊີບ.ໂຄງການທີ່ຮັບເໝົານັ້ນແມ່ນຢູ່ບັນດາກິ່ງແຂວງ ແລະ ນະຄອນທົ່ວແຂວງຢຸນນານ,ບັນດາຫຼາຍແຂວງຂອງຈີນ ແລະ ຫຼາຍປະເທດໃນອາຊີແລະອາຟຼິກາ.

ພວກເຮົາມີຄວາມຍິນດີຮ່ວມກັນກັບບັນດາອົງການຈັດຕັ້ງເສດຖະກິດ,ມະຫາວິທະຍາໄລ ແລະ ໂຮງຮຽນຊັ້ນສູງ,ອົງການຄົ້ນຄວ້າວິທະຍາສາດ,ອົງການປົກຄອງຂອງໂລກ ແລະ ຂອງບັນດາປະເທດອາຊີອາຄະເນຈັບມືກັນເປີດການຮ່ວມມືຫຼາຍຊັ້ນລະດັບ ແລະ ຂົງເຂດຢ່າງກວ້າງຂວາງ,ມີທ່າແຮງທົດແທນກັນ,ພັດທະນາຮ່ວມກັນໄດ້ຮັບຜົນປະໂຫຍດພ້ອມກັນ.

ສະຖານທີ່:ຖະໜົນກວນນານເລກທີ່ 1588 ນະຄອນຄຸນມິງ ສປ ຈີນ
ເບີໂທ: 0086-871-67017107 67017108
ເວັບໄຊ: WWW.YNROAD.COM

**做人守德 感恩做人 做事守道 负责做事**

ເປັນຄົນຕ້ອງມີຄຸນສົມບັດ ຮູ້ຕອບບຸນແທນຄຸນ ເຮັດວຽກປະຕິບັດຕາມຫຼັກການ ກ້າແບກຫາບໜ້າທີ່ຮັບຜິດຊອບ



ລາວສບ້າຍ | LB 老挝商城 360LAOSBUY.COM

## 想得到就淘得到的老挝最大网上购物平台！




微信扫一扫
进入移动商城

## 老挝商城 欢迎入驻

http://www.360laosbuy.com GO

老挝商城的服务

生活信息 二手买卖 招聘求职 酒店餐饮 机票签证 旅游租车 商务服务

ການບິນລາວ
Lao Airlines

# More Miles, More Privileges







## ChamPa MuangLao Member card

### Gold Card




### Silver Card




ISO 9001:2008
CERTIFIED
TICKETING & RESERVATIONS

For more information please contact Lao Airlines ticketing office
Tel: +856 21 212 051-54 ; Fax: +856 21 212 056
Email: ticketing@laoairlines.com ; reservation@laoairlines.com
www.laoairlines.com

Muangthong Hotel
Tel : +856 71 254 976
Fax : +856 71 252 974
Email: reservation@meuangthonglpb.com

Champa Holidays
Tel : +856 21 212 051-54
Fax : +856 21 212 056
Email: tour@laoairlines.com